# ນິທານພື້ນເມືອງ
# ຂອງ ອິນໂດເນເຊຍ



# ໂຮມນິທານພື້ນເມືອງ ຂອງ ອິນໂດເນເຊຍ



# ສາລະບານ


| | ໜ້າ |
|---|---|
| 1. ແຜຊຸ່ມທໍລະນີ | 1 |
| 2. ຫມວຍພູປີ່ງ | 8 |
| 3. ລາຊູບູກລຊຸຊ ແລະ ການຟູູນໂຂນໄຮຍັກ | 22 |
| 4. ຈູດຈົບທຫຼາເສົາໃຈ ຂອງ ສອງອາຍນອງ | 35 |
| 5. ໂຄລງລູມະເນົາ | 47 |
| 6. ແສນທະຮາວູະສູີ ນັກສະຫວັນທໄຣຄວາມສຸກ | 64 |
| 7. ຄວາຍມະນົກາບ | 80 |

## ຄະນະຈັດທຳ :

- ປະທານ, ຜູ້ແປ — ທຸມພັນ ລັດຕະນະວົງ
- ຜູ້ແປ — ທຸມພັນ ລັດຕະນະວົງ
- ຈັດໜ້າປົກ, ກວດແກ້ ແລະຈັດໜ້າ — ບົວໄລ ເພັງແສງຄຳ
- ພິມດີດ — ນາງ ວຽງສະຫວັນ

ຈັດພິມໂດຍ :
ສະຖາບັນຄົ້ນຄວ້າສິລະປະວັນນະຄະດີ ແລະ ພາສາສາດ

ດ້ວຍຄວາມຮ່ວມມືຈາກ ***THE TOYOTA FOUNDATION***

**ພິມທີ່ ໂຮງພິມ ຊາວໜຸ່ມ** ວຽງຈັນ ສ.ປ.ປ.ລ
ຕາມູ ທູບູ 256/ພປ 270592 ຈນ 2.000 ຫົວ
ພິມຄັ້ງທີ່ນຶ່ງ ຂະໜາດ 13,5 × 20 ຊມ 1992



ສະຫງວນລິຂະສິດ

# ຄວາມຂອງຜູ້ແປ

ນິທານພື້ນເມືອງຂອງແຕ່ລະຊາດນັ້ນ ເປັນພາກສ່ວນໜຶ່ງຂອງ ຄັງສາງມໍລະດົກທາງດ້ານສະຕິປັນຍາກໍຄືວັດທະນະທຳຂອງມວນມະນຸດໂລກ. ມັນສະທ້ອນໃຫ້ເຫັນເຖິງແນວຄິດຈິດໃຈ ຂະນົບປະເພນີ ການດຳລົງຊີວິດ ວາດຄິດທາງຳ ປົດຊະຍາແຫ່ງຊີວິດ ແລະ ຄວາມມຸງມາດປາຖະໜາອັນສູງສົ່ງຂອງແຕ່ລະຊາດ.

ຈາກນິທານ ພື້ນແຜນ ຕາມບານຕາມຊ່ອງນີ້ເອງທີ່ມະນຸດເຮົາ ບໍ່ວ່າຊາດໃດພາສາໃດກໍ່ຕາມ ສາມາດຮູ້ຈັກກັນ ເຂົ້າໃຈກັນ ພົບພໍ້ ຈຸດຢືນ ແລະຄວາມມຸງມາດປາຖະໜາອັນດຽວກັນ ແລະ ທາຍສຸດ ກໍ່ຮັກກັນ.

ປະຊາຊົນລາວ ແລະ ປະຊາຊົນອິນໂດເນເຊຍ ເປັນຊາດໃກ້ ຄຽງກັນ ພອມທັງມີວັດທະນະທຳ ເຊື້ອຫລາຍຢ່າງຄາຍຄືກັນ. ຍິ່ງ ໄປກວ່ານັ້ນ ຍັງເຄີຍມີມູນເຊື້ອແຫ່ງສາຍສຳພັນມິດຕະພາບອັນດີລະ ຫວ່າງກັນ ມາເປັນເວລາຍາວນານ.

ຂ້າພະເຈົ້າປາຖະໜາວ່າ ຜົນງານນ້ອຍໆ ແຫ່ງການແປແລະ ພິມນິທານນີ້ ຂອງ ຂ້າພະເຈົ້າ ຈະເປັນການປະກອບສ່ວນສົ່ງເສີມ ໃຫ້ມິດຕະພາບ ແລະ ການຮ່ວມມືກັນລະຫວ່າງ ລາວ ແລະ ອິນ ໂດເນເຊຍ ຂະຫຍາຍຕົວຕໍ່ໆໄປ.

4 - 1992

ທູມພົນ ລັດຕະນະວົງ

# ແຊແຜ່ນ ທໍລະນີ

●ໂດຍ : ອະປຸ ສຸຕັນໂຕ

ມື້ຫນຶ່ງຢູ່ທີ່ບ້ານແຫ່ງຫນຶ່ງ ບົນເກາະ ປາວາທີ່ສອຍງາມຍັງມີຊາຍຫນຸ່ມຜູ້ຫນຶ່ງເຊິ່ງມີຮູບຮ່າງໃຫຍ່ຫລິມ ເກັ່ງກາ ແລະ ບໍ່ມີໃຜສາມາດເອົາຊະນະໄດ ຜູ້ຄົນພາຍໃນບ້ານນັ້ນໃຜໆກໍຢ້ານ ແລະເຄົາລົບນັບຍອມເຂົາຊ່ຳກັບວ່າ ເຂົາເປັນພະເຈົ້າ ເວັ້ນເສຍແຕ່ຊາຍຫນຸ່ມອີກຄົນຫນຶ່ງທີ່ກາຫາສູ້ກັບເຂົາ.

ໃນທີ່ສຸດໂອກາດກໍໄດ້ມາເຖິງ. ຜູ້ຫ້າວສູ້ເລີຍປະສົບໄຊຊະນະ. ຊື່ສຽງຮຽງນາມຄວາມເອົາຊະນະບໍ່ໄດ້ຂອງຊາຍ ຮູບຮ່າງໃຫຍ່ຫລິມຄົນນັ້ນ ເລີຍບໍ່ຢັ້ງຢືນຄົງນານ. ຂ່າວຄາວ ປະລາໄຊຂອງເຂົາໄດ້ແຜ່ສະພັດໄປໄວ ແລວນອຍບໍ່ນານທົ່ວທັງບ້ານໃຜໆກໍຮູ້ຈັກໄປຫມົດ. ຄວາມຂົມຂື່ນແກມຄວາມລະອາຍໄດ້ມາບີບຄັ້ນຫົວໃຈຊາຍຫນຸ່ມຄົນນັ້ນ ເຮັດໃຫ້ເຂົາຢູ່ບໍ່ໄດ້ກິນບໍ່ເປັນ.

ບັດນີ້ໃຜໆກໍຈະເຢາະເຍີ້ຍເຂົາ ຫົວຂວັນເຂົາ ແລະ ກໍບໍ່ມີໃຜຢາກເຄົາລົບເຂົາ ໂອ... ຈັ່ງແມ່ນທໍລະມານໃຈແທ້ເດ. ສິ່ງດຽວທີ່ນັ້ນ ທີ່ເຂົາສາມາດກະທຳໄດ້ນັ້ນກໍຄື ຫນີຈາກບ້ານນີ້ໄປຢູ່ທີ່ອື່ນໂດຍໄວທີ່ສຸດ.



ເຂົາໄດ້ຕັດສິນໃຈຍ່າງເດີນໜ້າໄປເລື້ອຍໆ ດ້ວຍຄວາມຫວັງວ່າ ຈະພົບບ່ອນທີ່ບໍ່ມີໃຜຮູ້ຈັກເຂົາເລີຍ ຈາກນັ້ນເຂົາກໍອາດຈະລືມຄວາມອັບອາຍ ຂາຍໜ້າຂອງເຂົາກໍເປັນໄດ້.ເຂົາ ໄດ້ໄປເຖິງຫາດຊາຍແຄມທະເລແຫ່ງໜຶ່ງດ້ວຍຄວາມຫິວໂຫຍໃນສະພາບເຂົ້າບໍ່ໄດ້ລຳ ນ້ຳບໍ່ໄດ້ກິນ.ທັນໃດນັ້ນຫົວຄິດນ້ອຍເຂົາ ກໍຄ່ອຍໆລະໄມ້ອອກມາວ່າ ອາດຈະເປັນການດີ ຫາກເຂົາຍ່າງໄປຫາທະເລ. ຄັນພໍຄິດແລ້ວ ເຂົາກໍຕັ້ງໜ້າຍ່າງໄປ ຂາ ຂອງເຂົາທັງສອງພາຮ່າງອັນໃຫຍ່ສູງຂອງເຂົາ ໂຖ່ເລິກລົງໆໄປ ໃນທະເລ ແລ້ວຄື້ນຟອງອັນໜາຕຶບ ກໍພັດເອົາໂຕຂອງເຂົາອອກໄປ

ໄກແສນໄກ ຈາກແດນຝັ່ງບ່ອນທີ່ເຂົາມາເຖິງ. ຮ່າງຄີງຂອງ
ເຂົາຖືກພັດໄປຈົນເຖິງບ່ອນໜຶ່ງ ເຊິ່ງນ້ຳທະເລ ງຽບນິ້ງສະ
ຫງົບດີ ແລວຟ້າແຖບກໍເລີຍດົນບັນດານໃຫ້ເຂົາ ສາມາດຟູນ້ຳໄດ
ພົ້ນທັງຈຳສີນພາວັນນາຢູ່ກາງທະເລເລິກເໝືອນພະລືສີ. ເຂົາ
ໄດອົດນ້ຳ ອົດອາຫານເປັນໄລຍະເຫິງນານ. ສິ່ງທີ່ເຂົາຮັດກໍຄື
ສະມາທິພາວັນນາ ແລະ ສະສົມທຸກຢ່າງທີ່ນ້ຳທະເລພັດມາ. ໃນ
ທີ່ສຸດສິ່ງທີ່ເຂົາສະສົມໄດ້ທີ່ລະເລັກລະນ້ອຍນັ້ນ ເລີຍກາຍ ເປັນ
ກອງບັກໃຫ່ຍ ພໍທີ່ເຂົາຈະສ້າງທີ່ຢູ່ ທີ່ອາໄສຂອງເຂົາໄດ. ກອງ
ຂີ້ເຮື້ອທີ່ນ້ຳທະເລພັດມານັ້ນ ໃຫ່ຍຂຶ້ນໆຈົນກາຍເປັນໜ່ວຍໂນນສູງ
ພາຍຫລັງທີ່ໄດຈຳສີນພາວັນນາຢູ່ຢ່າງເຫິງນານ ເຂົາກໍເລີຍຮູ້ສຶກ
ໃຫ່ຍກິດ ມີເຫື່ອມີແຮງຂຶ້ນກວ່າເກົ່າຫລາຍເທົ່າ. ເຂົາມີຄວາມດີ
ໃຈ ແລະ ຂອບໃຈພະເຈົ້າທີ່ຊ່ວຍໃຫ້ເຂົາມີກຳລັງວັງຊາ ໃຫ່ມ
ໃຫ່ຍກວ່າເກົ່າ.

ມື້ໜຶ່ງຂະນະທີ່ຈຳສີນພາວັນນາຢູ່ ເຂົາເລີຍໄດ້ຍິນສຽງດັງ
ກັງວານ ມາເຂົ້າຫູຂອງເຂົາ : " ເຮີຍ! ລືສີທະເລເຮີຍຂ້ອຍ
ຈະເອົາຫອກໃຫ້ເຈົ້າດັນໜຶ່ງຫອກຄັນນີ້ ມີລິດເດດແຫດາຍ.ເຈົ້າ
ພຽງແຕ່ຂໍສິ່ງໃດສິ່ງໜຶ່ງນຳທ່ນັ້ນ ແລວສິ່ງນັ້ນກໍຈະມາເຖິງມືເຈົ້າ
ໂລດ. ຢ່າລືມສິ່ງທີ່ຂ້ອຍເວົ້ານີ້ ແລະ ຂ້ອຍກໍຈະຢູ່ນຳເຈົ້າສະ
ເໝີ ".

ເມື່ອສຽງນັ້ນຫາງຮຽບຫາຍໄປ ເຂົາກໍເລີຍເຫັນເງືອກໂຕໜຶ່ງ
ລອຍມາຫາເຂົາ. ເຂົາຕັ້ງສະຕິໄວ້ໃຫ້ດີ ຕັ້ງທ່າຮັບມືກັບມັນ ແຕ່
ເຂົາກໍບໍ່ຮູ້ສຶກ ຢ້ານກົວຫຍັງເລີຍ ເພາະເຂົາຮູ້ວ່າເຂົາຕອງ ຊະ

ນະແນ່ນອນ. ແຕ່ໃນທັນໃດ ທີ່ເງືອກລອຍມາມຸ່ງເຂົາ ເງືອກ ກໍ
ເລີຍກາຍເກີດເປັນຫອກຄັນແຫລມຄົມ. ເຂົາຮີບຈັບເອົາ ຫອກ
ຄັນນັ້ນມາເບິ່ງ ແລວກໍຄິດເຫາສຽງເວົ້າທີ່ສັ່ງຫາກໍຈາງຫາຍ ໄປ
ເມື່ອຕະກີ້. ເຂົາຍົກຫອກຂຶ້ນ ແຫງນໜ້າເບິ່ງຟ້າ ແລວກໍ ຈື່ມ
ຄວາມປາຖະໜາ ຄວາມທຳອິດຂອງເຂົາອອກມາ.

" ຫອກຄັນວິເສດເອີຍ! ສິ່ງທີ່ຂອຍປາຖະໜາ ແມ່ນເຮັດ
ໃຫ້ ໂນນນອຍນີ້ກາຍເປັນເກາະ ແລວເຮັດໃຫ້ມີຜູ້ຄົນ ຢູ່ເປັນ
ເພື່ອນຂອຍ ເພາະຂອຍບໍ່ມີເພື່ອນ ".

ເມື່ອຄວາມປາຖະໜາຂອງເຂົາຈົບລົງ ເຂົາກໍເຫັນໂນນຂີ້
ເຮືອຂອງເຂົາກາຍເປັນເກາະໃຫຍ່ ແລວກໍມີຜູ້ຄົນມາຍໍມືນົບນອບ
ນອມເຂົາທັນທີ.

" ຢ່າຢ້ານຂອຍເລີຍ ຂອຍແມ່ນເພື່ອນພວກເຈົ້າ. ພວກ
ເຮົາ ຈະພອມພາກັນຢູ່ທີ່ນີ້ນຳກັນ. ພວກເຮົາສາມາດປູກ ເຂົ້າ
ໝາກເຜືອກຫົວມັນ ແລະ ຜັກນາໆອາງຫຍາໄວ້ກິນ ພອມ ທັງ
ເຮົາກັນເປັນຄູ່ຜົວເມຍ ແລະ ມີລູກເຕົ້ານຳກັນ ".

ຕັ້ງແຕ່ນັ້ນມາ ລຶສີນ້ຳຜູ້ນັ້ນກໍເລີຍບໍ່ໄດຢູ່ໂດດດຽວອີກເລີຍ.
ຕອນບ່າຍຂອງມື້ໜຶ່ງ ຂະນະທີ່ເຂົາຍ່າງຫລິ້ນອອມຮອບເກາະເຂົາ
ເລີຍເກີ ເມື່ອໄດ້ຍິນສຽງຂອງໃຜຜູ້ໜຶ່ງຄຸ່ນໆຫູ. ເຂົາງວາກໜາ
ເບິ່ງ ເລີຍເຫັນສັດຕູເກົ່າຂອງເຂົາປະກົດໄຕ. ແມ່ນໝັ້ນນີ້ ເອງ
ທີ່ເອົາຊູຊະນະເຂົາໄດໃນບານເດີມຂອງເຂົາກ່ອນໜ້ານີ້ເຫີງນານ
ມາແລວ.

" ທ້າວໜຸ່ມ ແມ່ນເຈົ້າມາເຮັດຫຍັງຢູ່ທີ່ນີ້. ຮູ້ຈັກບໍ່ ວ່າ

ເກາະນີ້ແມ່ນຂອງຂ້ອຍ ແລະ ຂ້ອຍມີສິດທີ່ຈະໄສຫົວໃຜອອກ ໄປໄດ້ທັງນັ້ນ ? ".

ຜູ້ເປັນສັດຕູເກົ່າຂອງເຂົາຫົວຂວັນຂຶ້ນທັນທີ.

" ມຶງຍັງບາເໝືອນເດີມ ຢາກເອົາກັບກູອີກບໍ່ ? ".

ເຂົາແນມເບິ່ງໜ້າສັດຕູຂອງເຂົາເຊິ່ງໜ້າ ແລ້ວກໍເວົ້າວ່າ :

" ກູບໍ່ປະຕິເສດຄວາມທ້າທາຍຂອງມຶງດອກ. ເຖິງແມ່ນມຶງຈະໂຕໃຫຍ່ກາກິດປານໃດກໍຕາມ ກູບໍ່ຢ້ານເລີຍ ".



" ຢ່າ ຢ່າ ຢ່າ ! ຢ່າຫົວແຂງແບບນັ້ນເລີຍ ທາລະນົ່ງ ຫມອບລົງ ແລ້ວກົ້ມຂາບກູຈະດີກວ່າ ຈາກນັ້ນ ພວກເຮົາກໍຈະສາມາດຢູ່ຢ່າງເປັນເພື່ອນກັນໄດ້ "

ສັດຕູຂອງເຂົາເວົ້າຂຶ້ນດ້ວຍສີຫນ້າຍິ້ມເຢີ້ຍຢ່າງພໍໃຈ.

" ມຶງອວດຕົວ ອວດໂຕໂພດເກີນໄປແລ້ວ ທາກວ່າປີກາຍ ມຶງເອົາຊະນະກູໄດ້ ບໍ່ແມ່ນວ່າມຶງຈະຊະນະກູຕະຫລອດການ ໄດ້ເລີຍ ".

ສັດຕູຂອງເຂົາຍັງຫົວຂວັນແຮງກວ່າເກົ່າ.

" ມຶງຢາກເອົາກັບກູອີ່ຫລືວາ ? ຄິດໃຫ້ດີກ່ອນ ກ່ອນ ມຶງຈະຖິ້ມຊີວິດມຶງລາ ລາ ".

" ກູໄດ້ຄິດມາແລ້ວ ເລີ້ມຕັ້ງແຕ່ມື້ໄດ້ແພ້ກູມາແຕ່ພຸ້ນ ".

" ດີແລ້ວ ກຽມຕົວໃຫ້ດີ ການປະລາໄຊເທື່ອທີ່ສອງ ຂອງມຶງ ຈະມາເຖິງໄວໆນີ້ແລ້ວ ".

ຄູ່ອາຄາດທັງສອງໂດດເຂົ້າຫາກັນ ຕ່າງຄົນກໍຕ່າງໃຊ້ສີໄມ້ລາຍມືແກວ່ງຫອກເຂົ້າໃສ່ກັນດ້ວຍຄວາມຄ່ອງແຄ້ວ. ແຕ່ ຫອກຂອງລີສີນກ້ຳ ພັດແມ່ນ ຫອກວິເສດ ໃນທີ່ສຸດກໍເລີຍສັງຫານສັດ ຕູໄດ້.'

ເມື່ອສັດຕູຂອງເຂົາຕາຍແລ້ວ ເຂົາເລີຍເອົາຫອກຂອງມັນໄປຝັງໄວ້ຢູ່ໃນໃຈກາງເກາະຂອງເຂົາ. ເວລານັ້ນເອງ ສິ່ງມະຫັດສະຈັນເລີຍເກີດຂຶ້ນຄືແຜ່ນດິນແຕກເປັນແຜ ແລ້ວເລືອດ ແດງໆເລີຍໄຫລອອກມາ.

ຍ້ອນເລືອດດັ່ງກ່າວນັ້ນເອງ ລີສີ່ຈຽງຮຽກຊື່ເກາະຂອງ ເຂົາ

ວ່າ " ມະດະຣາ " ເຊິ່ງແປວ່າ ຣອຍແຜ ປັດຈຸບັນຊື່ດັ່ງ ກ່າວ
ຜຽນມາເປັນ " ມະດຸຣາ " ສັນນີ້ເອງ.




ນິທານພື້ນເມືອງ ອິນໂດເນເຊຍ

<u>ຈັດທຳໂດຍ</u>: ສະຖາບັນຄົ້ນຄວ້າ ສິລະປະວັນນະຄະດີ ແລະ ພາສາສາດ
<u>ດ້ວຍຄວາມຮ່ວມມືຈາກ</u>: THE TOYOTA FOUNDATION
<u>ພິມທີ່</u>: ໂຮງພິມ ຊາວໜຸ່ມ ທະບຽນເລກທີ່ 256/ພປ 270592
ພິມຄັ້ງທີ່ນຶ່ງ ຈຳນວນ 2.000 ຫົວ. ຂະໜາດ: 13,5 x 20 ຊມ.

# ໜ່ວຍພູປົ່ງ

●ໂດຍ : ອະຢຸ ສຸຕັນໂຕ

ນີ້ກໍແມ່ນພົ້ນເລື່ອງໜຶ່ງກ່ຽວກັບເກາະມະທຸຣະ ຫລາຍຂອບປີມາແລ້ວທີ່ຜູ້ຄົນຮູ້ຈັກພູກາງທະເລ ທີ່ມີຊື່ວ່າ ກິກເກີ. ເປັນເກາະທີ່ເປົ່າຫວ່າງ ບໍ່ມີຜູ້ຄົນໃດສາມາດດຳລົງຊີວິດຢູ່ໄດ້ ແມ່ນແຕ່ສັດ ສາວາສິ່ງກໍເຊັ່ນກັນ.

ຂະນະນັ້ນ ຢູ່ໄກແສນໄກຈາກເກາະນ້ອຍດັ່ງກ່າວ ຄືຢູ່ໃນກາງເກາະໃຫຍ່ຊະວາ ຍັງມີ ອານາຈັກໜຶ່ງທີ່ຊົງຄວາມອຳນາດເຂັ້ມແຂງຊື່ວ່າ ເມັນດັງກາມູລັນ ພະຣາຊາຜູ້ຄອງອານາຈັກ ດັ່ງກ່າວຊົງມີຄວາມກ້າສາມາດເຫລືອທີ່ສຸດ ພ້ອມທັງມີ ມະຫາອຸປະຣາຊະຜູ້ສະຫລາດແຫລມຄົມເປັນບັນດິດ ຊື່ວ່າ ປະມັນ ປະຕິອົນ ເປັນທີ່ໄວ້ເນື້ອເຊື່ອໃຈຂອງພະຣາຊາເອງ.

ມື້ໜຶ່ງພະຣາຊາມີຄວາມໂກດແຄ້ນທີ່ສຸດ ເມື່ອຮູ້ຂ່າວວ່າ ບຸດຍິງຂອງພະອົງມີທ້ອງໂດຍທີ່ບໍ່ມີພະສາມີ. ພະອົງໄດ້ໃຫ້ພະຣາ ຊະໂອງການແກ່ມະຫາ ອຸປະຣາຊະ ປະມັນປະຕິ ວ່າໃຫ້ເອົາພະ ຣາຊະທິດາຂອງພະອົງໄປປະຫານຊີວິດເສຍ.

" ໂດຍທານໂຫດຫານຊີວິດແກ່ຂ້ານ້ອຍເທີ້ນ ຂໍໃຫ້ພະ ອົງຊົງກະລຸນາ ຕັດບອກຂ້າພະບາດແດ່ວ່າ ນັ້ນເປັນ ພະຣາຊະໂອງການຄຳສຸດທ້າຍຂອງພະອົງລື ? "ມະຫາອຸປະຣາຊະຮຽນຖາມ.



" ແມ່ນແລ້ວ ປະມຸ້ນ ປະຕິ " ພະອົງຊົງຕອບ.ເວລາ ນັ້ນ ມະຫາອຸປະຣາຊະ ກົ້ມຫນ້າແນມລົງພື້ນ ແລ້ວກໍ່ເວົ້າຕໍ່ວ່າ :

" ຂ້າແຕ່ພະຣາຊາຜູ້ຊົງຄວາມກາເກັ່ງ ໄພ່ຟ້າຂ້າແຜ່ນດິນ ທັງປວງ ພ້ອມດ້ວຍຂ້າພະບາດເອງ ຂໍວິງວອນໃຫ້ພະອົງຊົງ ຄິດໃຫ້ຮອບຄອບອີກເທື່ອຫນຶ່ງ ເຫັນພວກເຮົາຍັງບໍ່ທັນແນ່ນອນ ວ່າ ພະຣາຊະທິດາມີການກະທຳຜິດພະຣາຊະປະເພນີແທ້ ".

ພະມະຫາຣາຊາລຸກຢືນຂຶ້ນທັນທີ ແລ້ວໃບໜ້າຂອງພະ ອົງ ຄ່ອຍໆແດງຂຶ້ນ.

" ປະມັນ ປະຕິ ເປັນຫຍັງທ່ານຈຶ່ງຕັ້ງຄຳຖາມຕໍ່ພະຣາຊະ ໂອງການຂອງເຮົາພະອົງແບບນີ້. ທຸກສິ່ງທຸກຢ່າງມັນແຈງ ຂາວ ພໍແລວເດ ແມ່ນບໍ່ວ່າ ນາງມີທ້ອງໂດຍທີ່ບໍ່ມີຜົວ. ນີ້ແຫລະ ແມ່ນ ໂທດມະຫັນຂອງນາງ ດັ່ງນັ້ນ ນາງຈຶ່ງຕ້ອງຖືກລົງໂທດຢ່າງ ສະ ສົມ ນີ້ແຫລະຄຳສັ່ງ ".

ປະມັນ ປະຕິ ນິ່ງກົ້ມໜ້າງຽບຢູ່ຈັກໜ່ອຍ ແລ້ວກໍ ເວົ້າ ດ້ວຍນ້ຳສຽງຄ່ອຍຄ່ອຍຂຶ້ນວ່າ :

" ຂໍຈົ່ງອະໄພຍະໂທດໃຫ້ຂ້າພະບາດເທີ້ນ ຂ້າພະບາດໄດ້ ບັງອາດສະເໜີຄວາມເຫັນໄປຈັ່ງຊັ້ນ ກໍເນື່ອງຈາກວ່າ ຂ້າພະ ບາດເຫັນວ່າ ພະຣາຊະທິດາເປັນຄົນທີ່ຊື່ສັດແທ້ອີຫລີ ບໍ່ເຄີຍເຫັນ ພະອົງນາງຊົງສະເດັດອອກນອກ ພະລາຊະວັງຈັກເທື່ອ ແລະ ກໍ ບໍ່ເຄີຍເຫັນຄົນຜູ້ໃດເຂົ້າໄປໃນພະລາຊະວັງຂອງພະອົງນາງ ຈັກ ເທື່ອ. ຖ້າຫາກວ່າມີອັນໃດອັນໜຶ່ງຮ້າຍແຮງເກີດຂຶ້ນກັບ ພະອົງ ນາງ ແນ່ນອນໃຜຜູ້ໜຶ່ງໃນໝູ່ຂອງພວກຂ້າພະບາດ ຄົງຮູ້ ເຫັນ ແນ່ນອນ ".

ເມື່ອໄດ້ຍິນຄວາມນີ້ ພະຣາຊາຍິ່ງມີຄວາມກ້າວໂກດ ຂຶ້ນ ທັນທີ.

" ປະມັນ ປະຕິ ! ຂ້ອຍເປັນເຈົ້າຊີວິດຂອງເຈົ້າ ແລະ ຂ້ອຍບໍ່ຕ້ອງການໃຫ້ຜູ້ໃດມາຊັກຖາມໃນຄຳສັ່ງຂອງຂ້ອຍ. ເຈົ້າ ຮູ້ ໜ້າທີ່ຂອງເຈົ້າແລ້ວຕິ ? ຖ້າຮູ້ແລ້ວ ຈົ່ງໄປ ແລະ ປະຕິບັດດຽວ

ຢູ່.

ພໍມະຫາລາຊາເວົ້າສິ້ນສຸດລົງ ມະຫາອຸປະຣາຊະກໍຣີບ ນຳເອົາພະຣາຊາທິດາອອກໄປຈາກພະລາຊະວັງຫລວງທັນທີ. ພະອົງນາງໄດ້ແຕ່ຮອງໄຫ ດ້ວຍຄວາມໂສກເສົ້າເຫງົາໃຈ ແລະ ທຸກຄົນໃນພະລາຊະວັງກໍເຊັ່ນກັນ ເວັ້ນເສຍແຕ່ພະມະຫາຣາຊາ ອົງດຽວເທົ່ານັ້ນ. ເມື່ອອອກໄປນອກພະລາຊະວັງຫລວງແລ້ວ ພະຣາຊະທິດາກໍຖາມພະມະຫາອຸປະຣາຊາວ່າ ພະອົງທ່ານຈະພາພະອົງນາງໄປທີ່ແຫ່ງໃດ ?

" ໂດຍທານໂທດທ່ານຈື່ວິດຂ້ານ້ອຍ ພວກເຮົາຈະພາ ກັນໄປສູ່ແດນມະຫາສະຫມຸດພຸ້ນ " ເຈົ້າມະຫາອຸປະຣາຊະ ທູນເວົ້າຂຶ້ນດ້ວຍຄວາມເຄົາລົບ.



" ເປັນຫຍັງ ທ່ານຈຶ່ງຕ້ອງໄປໄກເຊັ່ນນີ້. ທ່ານສາ ມາດປະທານຊີວິດຂອງຂ້ອຍຢູ່ທີ່ນີ້ໄດ້ໂລດ ". ທ່ານມະຫາອຸປະຣາຊະບໍ່ເວົ້າບໍ່ຈາຫຍັງ ມີແຕ່ຊຶ່ງເອົາຄວາມຄິດຢ່າງຫນັກຫນ່ວງ. ຂະນະນັ້ນ ເລີຍມີມ້າໃຫຍ່ໂຕຫນຶ່ງແລ່ນມຸ່ງຫນ້າມາຊ່ອຍ. ທັງສອງພະອົງນາງ ແລະ ທ່ານມະຫາອຸປະຣາຊະພາກັນຂຶ້ນຂີ່ ເດີນທາງຕໍ່ໄປ. ຕາມເສັ້ນທາງເດີນ ທຸກຄືນຕ່າງກໍມີດວງຮູບ ແລະ ເຄື່ອງຂິມ. ຄາວຫນຶ່ງພະອົງນາງເລີຍຢຸດມ້າ ແລ້ວຮ້ອງຂຶ້ນດ້ວຍຄວາມຂົມຂື່ນ ໃຈວ່າ ພະອົງນາງ ພ້ອມແລ້ວທີ່ຈະຮັບຊະຕາກຳອັນອັບເສົ້າຂອງພະອົງນາງ. ທ່ານ ມະຫາອຸປະຣາຊະ ເຂົ້າໃຈດີວ່າຕົນຕ້ອງປະ ຕິບັດຕາມພະຣາຊະໂອງການທຸກປະການ ແຕ່ທ່ານເຈົ້າບໍ່ຢາກເອົາຊີວິດຂອງພະຣາຊະທິດາໃຫ້ດັບຊີບໄປ.

ເມື່ອທັງສອງພາກັນໄປເຖິງແຄມແມ່ມະຫາສະຫມຸດແລ້ວພະອົງນາງຮູ້ສຶກເບີກເບີຍອາລົມ ແລະ ມີຄວາມສຸກ ຈາກພາບ ອັນງາມຕະການຕາຂອງແມ່ມະຫານະທີ.

" ພວກເຮົາພັກຢູ່ຮົ່ມຕົ້ນໄມ້ຫັ້ນຈັກຫນ່ອຍບໍ່ ທ່ານເຈົ້າ ມະຫາອຸປະຣາຊະ " ພະອົງນາງຊົງກ່າວຖາມ.

" ບໍ່ ພວກເຮົາຢຸດຢູ່ທີ່ນີ້ ".

" ເປັນຫຍັງ ທ່ານ ປະມັນ ປະຕິ ? ຈະບໍ່ເປັນການ ດີກ່ອນບໍ່ ທີ່ທ່ານຈະປະຕິບັດຄຳສັ່ງຂອງພໍ່ຂ້ອຍ ຢູ່ກ້ອງຮົ່ມໄມ້ຕົ້ນນັ້ນຂ້ອຍບໍ່ຢາກໃຫ້ເຈົ້າ ເອົາສົບຂອງຂ້ອຍຖິ້ມລົງທະເລເລີຍ ".

" ພະຣາຊະທິດາທີ່ເຄົາຣົບ ຈົ່ງຊົງແນມເບິ່ງທະເລນີ້ ໃຫ້ດີໆ. ດື່ມລົດສະແຫ່ງຄວາມງາມຂອງມັນ ແລ້ວຄິດ. ຫາກຄວາມ



ຄິດຄືນເຮົາ ກວ້າງໄກເຫມືອນດັ່ງນ້ຳທະເລນີ້ ເຮົາຈະຕ້ອງ ສາມາດມີຄວາມລືມ ທຸກເມື່ອ ".

" ເຈົ້າຢາກເວົ້າຫຍັງເກາະ ທ່ານປະມັນ ປະຕິ? ".

" ຂ້າພະບາດບໍ່ຢາກປົງພະຊິນພະອົງນາງ ຕາມພະລາຊະໂອງການຂອງພະບາດສົມເດັດພະມະຫາລາຊາເລີຍ.ຂ້າພະບາດຈະແຕ່ງແພ ໃຫ້ພະອົງນາງແລວນ້ຳທະເລອັນສວຍງາມນີ້ ຈະພາ

ພະອົງນາງໄປສູ່ແຫ່ງອື່ນ. ຢ່າຢ້ານ ພະອົງນາງຈະປອດໄພດອກ ເພາະວ່າ ພະເຈົ້າຢູ່ຄຽງຂ້າງພະອົງນາງ ".

ພະຣາຊະທິດາແນມເບິ່ງໜ້າອັນສະຫງ່າຜ່າເຜີຍຂອງ ລຸງເຖົ້າຄົນນັ້ນ ແລະ ຈະຈາກໄປດ້ວຍຄວາມຮູ້ບຸນຄຸນຕໍ່ຄວາມ ຊ່ວຍເຫລືອຂອງທ່ານ ແຕ່ກໍ່ບໍ່ແລ້ວຄວາມກັງວົນໃຈ ນຳຊະຕາກຳ ທີ່ອາດຈະເກີດຂຶ້ນຕໍ່ທ່ານເອງໄດ້.

" ຖ້າພະລາຊະບິດາຮູ້ວ່າ ຂ້ອຍຍັງມີຊີວິດຢູ່ ເພິ່ນ ອາດຈະລົງໂທດເຈົ້າເຖິງຕາຍກໍໄດ້ ທ່ານບໍ່ຄິດຫາຊີວິດທ່ານແດ່ບໍ່?".

ທ່ານປະມັນ ປະຕິ ຕົບຫົວຂອງພະອົງນາງພ້ອມທັງ ເວົ້າວ່າ :

" ຂ້າພະບາດເຖົ້າແກ່ ບໍ່ເປັນປະໂຫຍດຫຍັງອີກແລ້ວແລະ ຂ້າພະບາດ ກໍກຽມພ້ອມທີ່ຈະຕາຍທຸກເມື່ອ. ຢ່າຊົງຄິດເປັນຫ່ວງ ຂ້າພະບາດເລີຍ ຈົ່ງຄິດຫາພະອົງນາງເອງ ".

ທ່ານປະມັນ ປະຕິ ຜູ້ມີເວດມົນກົນກະຖາ ເລີຍເສກເອົາ ແພເຫລັ້ມບັກໃຫຍ່ມາ ມີຜ້າເສື່ອຫມອນ ມຸ້ງ ພ້ອມທັງເຂົ້າ ກິນຂອງຢູ່ພ້ອມພຽງເພື່ອເດີນທາງຂ້າມມະຫາສະໝຸດ. ເມື່ອທຸກຢ່າງ ຮຽບຮ້ອຍແລ້ວ ທ່ານມະຫາອຸປະຣາຊະເລີຍເວົ້າກັບພະອົງ ນາງວ່າ :

" ພະຣາຊະທິດາທີ່ເຄົາລົບ ບັດນີ້ພວກເຮົາຈະໄດ້ພັດພາກ ຈາກກັນໄປທາງໃຜທາງມັນແລ້ວ ພະອົງນາງຈະຕ້ອງຂ້າມມະຫາ ສະໝຸດ ແລະ ຂ້າພະບາດຈະກັບຄືນສູ່ທີ່ໂຮງ ແລ້ວຂ້າພະບາດ ຈະທູນລາຍງານພະອົງພໍ່ວ່າ: ຂ້າພະບາດໄດ້ປະຕິບັດທຸກຢ່າງ ທີ່

ພະອົງພໍ່ເພິ່ນໄດ້ມີພະລາຊະໂອງການໄວ້ທຸກປະການແລ້ວ.

ເມື່ອພະຣາຊະທິດາເຂົ້າແພຮຽບຮ້ອຍແລ້ວ ມະຫາອຸປະຣາຊະ ກໍຍູ້ແພອອກສູ່ກາງທະເລຫລວງ. ແພໄດ້ໄຫລຫ່າງອອກໄປໄກຈາກແຄມຝັ່ງ ສ່ວນທ່ານ ປະມັນ ປະຕິ ເມື່ອເຫັນວ່າທຸກຢ່າງ - ຮຽບຮ້ອຍແລ້ວ ກໍຍ່າງສາວເທົ້າກັບດ້ວຍຄວາມພູມໃຈວ່າ: ຕົນເອງໄດ້ຊ່ອຍເອົາສອງຊີວິດໄວ້ໄດ້ ຄື: ພະລາຊະທິດາ ແລະລູກໃນທ້ອງ.

ແພຂອງພະຣາຊະທິດາໄຫລໄປໄຫລໄປ ຕາມກາງ ທະເລຫລວງຢ່າງບໍ່ມີຈຸດຫມາຍ. ຫລາຍມື້ຫລາຍເດືອນຜ່ານໄປ ພະຣາຊະທິດາເລີ້ຍຄອດ ບຸດຊາຍອອກມາໃນແພ ແລະ ທັນທີທີ່ຄອດ - ອອກມາແລ້ວ ພະອົງນາງເລີຍຕັ້ງຊື່ໃຫ້ໂລດວ່າ ຣາເດັນ ເຊຄາຣາ ແປວ່າ ຣາຊະບຸດທະເລຫລວງ.

ມື້ຫນຶ່ງ ຂະນະທີ່ແພກຳລັງລອຍຢູ່ກາງທະເລ ເລີຍເກີດມີພະຍຸພັດມາຢ່າງຮ້າຍແຮງ ພ້ອມທັງມີຟ້າແຜດຝົນຕົກ ອັນເຮັດໃຫ້ແພໄຫລປິວໄປເນີໃສ່ ເກາະຫີນນ້ອຍຫນ່ວຍຫນຶ່ງຊື່ວ່າ ຄິກເກີ. ເມື່ອຟ້າຝົນລົມແດງສະຫງົບລົງ ຮຽບຮ້ອຍແລ້ວ ພະຣາຊະທິ ດາ ກໍພາລູກໄປຢືນບົນເກາະ ເວລານັ້ນສິ່ງມະຫັດສະຈັນເລີຍປະ ກົດຂຶ້ນຄື ດິນພາກັນປົ່ງຢູ່ອ້ອມຮອບເກາະຫນ່ວຍນັ້ນ ແລະ ປົ່ງກວ້າງໄກໄປຈົນສຸດສາຍຕາ. ເວລານັ້ນ ພະຣາຊະທິດາເຫັນ ບໍ່ມີທາງເລືອກ ທາງອື່ນນອກຈາກຈະມ້າງເອົາໄມ້ແພຂອງຕົນມາ ປູກຕູບປູກບູ ເພື່ອເປັນບ່ອນຊຸ້ນຫົວນອນຮ່ວມກັບລູກ. ພະອົງນາງໄດ້ຄອຍຜຽນລ້ຽງລູກຂອງພະອົງນາງ ຈົນໃຫຍ່ກ້າຫນາບານ ພ້ອມທັງໄດ້

ໃຫ້ການອົບຮົມບົ່ມສອນໃຫ້ກາຍເປັນຄົນຮູ້ຜູ້ດີ.

ຣາເດັນ ເຊດາຣາ ໃຫຍ່ຂຶ້ນມາ ພ້ອມທັງໄດ້ຮຽນຮູ້ ແລະ ເຮັດຫລາຍສິ່ງຫລາຍແນວ. ພະອົງຊາຍນ້ອຍຍັງສາມາດ ເຮັດອາວຸດເຊັ່ນ ຫອກ ຫອນ ຢ່າງຄ່ອງແຄວ ແລະ ວິດວານ. ອາວຸດທີ່ພະອົງຊົງປະດິດຂຶ້ນມານັ້ນ ໄດ້ຖືກສົ່ງໄປຍັງແຫ່ງຕ່າງໆ ແລະ ເປັນທີ່ຈັບອົກຈັບໃຈຂອງບັນດາກະສັດທັງຫລາຍ.



ຂະນະນັ້ນ ຍັງມີຣາຊະອານາຈັກໃຫຍ່ແຫ່ງໜຶ່ງ ຕັ້ງຢູ່ໃຈກາງເກາະ ຢາວາ ເມື່ອພະມະຫາລາຊາແຫ່ງອານາຈັກດັ່ງກ່າວຮູ້ຂ່າວວ່າ ຣາເດັນ ເຊຄາຣາ ເຮັດອາວຸດໄດ້ເກັ່ງ ແລະດີ ພະອົງເລີຍໃຫ້ອາມາດໄປທູນເອົາມາໃນຣາຊະອານາຈັກຂອງພະອົງເພື່ອຜະລິດອາວຸດໃຫ້ພະອົງ. ວັນໜຶ່ງພະມະຫາຣາຊາ ເລີຍຊົງຖາມເຖິງກົກເຄົ້າເຫຼົ່າກໍຂອງພໍ່ແມ່ຂອງ ຣາເດັນ ເຊຄາຣາແລະເມື່ອພະອົງຊົງຮູ້ວ່າທ້າວນ້ອຍເປັນຫລານຂອງພະອົງເອງ ກໍເລີຍມີຄວາມຊື່ນຊົມຍິນດີ ຈຶ່ງບອກໃຫ້ໄປນຳເອົາຜູ້ເປັນມານດາກັບມາຢູ່ ໃນພະລາຊະວັງນະຄອນເມືອງດັງກາມູລັນ ຄືນ.

ເມື່ອ ຣາເດັນ ເຊຄາຣາ ກັບຄືນມາສູ່ເກາະ ຄິກເຄີແລ້ວທ້າວກໍເລີຍເລົ່າເລື່ອງລາວຕ່າງໆ ສູ່ຜູ້ເປັນມານດາຟັງ ໃນ ນັ້ນນັບທັງເລື່ອງທີ່ ພະມະຫາລາຊາອົງປູ່ ຂໍອັງເຊີນໃຫ້ມານດາ ກັບຄືນເມືອທີ່ຄຳຄືນ. ພະມານດາຮູ້ສຶກປື້ມປິຕິຢ່າງລົ້ນເຫລືອ ເມື່ອໄດ້ຮັບຂ່າວນີ້. ແຕ່ພະອົງກໍຊົງຄິດ ແລະ ຫລົງເຫັນວ່າເກາະຄິກເຄີນີ້ ເປັນສະເຫມືອນບ້ານເຮືອນຂອງພະອົງ ພະອົງຈຶ່ງບໍ່ ສາມາດປະມັນໄປໄດ້. ພະມານດາເວົ້າຕໍ່ທ້າວວ່າ :

" ແນມເບິ່ງອ້ອມຮອບເຮົານີ້ແມລູກ ! ດອນຫີນນ້ອຍໆຂອງພວກເຮົາປົ່ງອອກ ປົ່ງອອກ ຈະກາຍເປັນເກາະໃຫຍ່ໃນ ມື້ໜຶ່ງ. ຜູ້ຄົນກໍມີຫລາຍຂຶ້ນແລ້ວ ຫາກວ່າ ມື້ໜຶ່ງແມ່ໄດ້ເຫັນ ລູກເປັນເຈົ້າຜູ້ຄອງເກາະຂອງເຮົານີ້ ແມ່ຈິ່ດີໃຈຫລາຍ, ລູກ ຈະຕ້ອງຫາຄູ່ຄົມ ມີລູກມີເຕົ້າ ລູກກໍຄິດຈະມີເມຍນຳເພິ່ນແດ່ບໍ່ ?".

ຣາເດັນ ເຊຄາຣາ ຄອຍໃຈນຳຄຳເວົ້າຈາຂອງມານ ດາ

ຈິນນ້ຳຕາຍິ່ງປັ້ເຂົ້ານັ່ງຊູເຂົ່າ ກົ້ມຫົວຂາບມານດາ. ຕົກມື້ໃໝ່
ມາ ນວນຈິນພາຍໃນບານເຊິ່ງກໍມີຫລາຍຫລັງຄາເຮືອນ ດອຍ



ກັນແລ້ວ ພາກັນມາເຝົ້າຕູບຂອງ ຣາເດັນ ເຊຄາຣາ ແລະມານດາ ພວກເຂົາຂາດຜູ້ນຳພາຍໃນບ້ານ ຈຶ່ງຂໍຮ້ອງໃຫ້ ຣາເດັນເຊຄາຣາ ເປັນຜູ້ນຳ ພ້ອມກັນນັ້ນກໍໃຫ້ຕັ້ງຊື່ໃຫ້ບ້ານດັ່ງກ່າວດ້ວຍ. ແລ້ວບ້ານດັ່ງກ່າວກໍໄດ້ຮັບຊື່ວ່າ ບ້ານເນປາ.

ເຊົ້າມື້ໜຶ່ງ ຝູງຄົນພາຍໃນບ້ານ ເນປາ ພາກັນຕື່ນ ຕະໜົກ ເມື່ອໄດ້ຍິນສຽງຊາລືກັນວ່າມີນາງສາວແປກໜ້າຜູ້ໜຶ່ງມາໃນເກາະ. ພວກເຂົາເຈົ້າພາກັນອອກໄປເບິ່ງ ແລ້ວກໍເຫັນສາວງາມຄົນໜຶ່ງຍ່າງມາຊ້າໆ ດ້ວຍຄວາມງາມ ຫາທີ່ສຸດທີ່ຢັ່ງບໍ່ໄດ້. ບໍ່ມີໃຜເລີຍພາຍໃນບ້ານຈະມີຄວາມກ້າຫານພໍທີ່ຈະເວົ້າຈາ ກັບນາງ ເວັ້ນເສຍແຕ່ ຣາເດັນ ເຊຄາຣາ ທີ່ນັ້ນ.ທ້າວຖາມນາງວ່າ :

" ດູລາ ນ້ອງນາດໄທ້ຜູ້ຊົງຄວາມງາມຫາສິ່ງປຽບບໍ່ ໄດ້ ນ້ອງນາງເປັນໃຜ ແລະ ມາແຕ່ໃສຈ້າ ? ".

" ນ້ອງບໍ່ມີຊື່ ແລະ ນ້ອງມາແຕ່ແມ່ມະຫາສະໝຸດໃຕ້ " ເວົ້າແລ້ວນາງກໍ່ແນມເບິ່ງຊື່ໆ ໜ້າຂອງ ຣາເດັນ ເຊຄາຣາ.

" ເປັນຫຍັງຈຶ່ງແນມເບິ່ງໜ້າອ້າຍແບບນີ້ ? "

" ນ້ອງກຳລັງແນມເບິ່ງໜ້າຄົນຜູ້ເປັນເຈົ້າແຫ່ງບ້ານແຫ່ງນີ້ ".

" ແມ່ນແລ້ວ ອ້າຍນີ້ເອງ ທີ່ເປັນເຈົ້າແຫ່ງບ້ານນີ້ ນ້ອງ ມີຄວາມປະສົງສັ່ງໃດບໍ່ຮູ ? ".

" ຖ້າວ່າອ້າຍຫາກແມ່ນຄົນຜູ້ທີ່ເປັນເຈົ້າແຫ່ງບ້ານນີ້ ແລ້ວ ນ້ອງຂໍອຸທິດຕົວຂອງນ້ອງໃຫ້ອ້າຍ ".



ເມື່ອ ຣາເດັນ ເຊຄາຣາ ໄດ້ຍິນຄວາມນີ້ກໍເລີຍຕື່ນໃຈ ບໍ່ໜ້າເຊື່ອວ່າ ຄວາມເວົ້າຂອງນາງສາວຜູ້ນີ້ຈະຈິງ.

" ໝາຍຄວາມວ່າ ຖ້າວ່າອ້າຍຂໍໃຫ້ນ້ອງເປັນຄູ່ຄອງ ຂອງອ້າຍ ນ້ອງຈະຮັບແມ່ນບໍ່ ? ".

" ໄດ້ ນ້ອງຈະມີຄວາມສຸກທີ່ສຸດ ຖ້ານ້ອງໄດ້ອ້າຍເປັນ ຄູ່ຄອງ ແຕ່ນ້ອງຂໍຢ່າງດຽວຄື ເມື່ອແຕ່ງດອງກັນແລ້ວ ອ້າຍບໍ່ ຕ້ອງຈາກເກາະຂອງພວກເຮົາໄປເພາະເກາະຂອງພວກເຮົາຈະ ໃຫຍ່ຈະກວ້າງ ແລະ ຈະເຂັ້ມແຂງຮັ່ງມີ ".

ຣາເດັນ ເຊຄາຣາ ຮູ້ສຶກວ່າ ຄວາມຮັກໄດ້ມາຄອບຄອງຫົວໃຈ ຂອງຕົນ ແລະ ກໍຕົກລົງຈະບໍ່ຈາກເກາະແຫ່ງນີ້ໄປໃສເລີຍ.

ງານແຕ່ງດອງໄດ້ຮັບການຈັດຂຶ້ນຢ່າງຄຶກຄື້ນ ອົບນ່ຳ ເອົາຄວາມສຸກມາສູ່ທຸກຄົນ. ຕັ້ງແຕ່ນັ້ນມາ ເກາະແຫ່ງດັ່ງກ່າວກໍ່ ຂະຫຍາຍຕົວກວ້າງໃຫຍ່ອອກ,ຢ່າງບໍ່ຢຸດຢັ້ງ.ບ້ານເມືອງ ໄພ່ຟ້າ ຂ້າແຜ່ນດິນ ມີຄວາມສຸກຊຸ່ມກຸ່ມເຢັນ ຈຶ່ງແຕ່ງຕັ້ງໃຫ້ ຣາເດັນ ເຊຄາຣາ ພ້ອມດ້ວຍພັນລະຍາຂຶ້ນຄອງຣາຊະສົມບັດເປັນເຈົ້າແຜ່ນດິນ.

ດັ່ງນັ້ນເອງ ທີ່ເກາະດັ່ງກ່າວ ຈຶ່ງໄດ້ກາຍມາເປັນເກາະ ມາທູຣະ ຕັ້ງແຕ່ບັດນັ້ນ ເປັນຕົ້ນມາ.

# ລາຊີບີກີລີຊຸຊີ
## ແລະການຟ້ອນໂຂນໄຣຢົກ

● ໂດຍ : ອະປຸ ສຸຕັນໂຕ

ແຕ່ກີ້ແຕ່ກ່ອນ ຢູ່ພາກຕາເວັນອອກຂອງເກາະຢາວາ ຍັງມີລາຊະອານາຈັກໃຫຍ່ແຫ່ງຫນຶ່ງມີຊື່ວ່າ ເກດີຣີ ເຊິ່ງປົກຄອງ ໂດຍກະສັດເຖົ້າອົງຫນຶ່ງທີ່ມີລູກຊາຍຫນຶ່ງ ຍິງຫນຶ່ງງາມຫົວດູ່. ມື້ຫນຶ່ງອົງກະສັດເຖົ້າ ໄດ້ຮຽກລູກຊາຍຂອງຕົນມາຫາແລ້ວກໍສັ່ງວ່າ :

" ລູກຊາຍທີ່ຮັກຂອງພໍ່, ດຽວນີ້ພໍ່ເຖົ້າແກ່ຫລາຍແລ້ວພໍ່ ຄິດວ່າບັດນີ້ ແມ່ນທີ່ລູກແລ້ວທີ່ຈະຂຶ້ນຄອງລາຊະສົມບັດແທນພໍ່. ອານາຈັກຂອງພວກເຮົາ ຕ້ອງການຄົນຫນຸ່ມແທນປົກຄອງ."

ຂະນະນັ້ນ ອົງມຸງກຸດຍັງບໍ່ທັນກຽມເນື້ອກຽມຕົວຫຍັງ ເພື່ອຈະຂຶ້ນຄອງລາຊະສົມບັດແທນພໍ່ ແຕ່ພະອົງກໍບໍ່ກາເວົ້າຄວາມຈິງຕໍ່ພະອົງພໍ່ເລີຍ ເພາະຖ້າເພິ່ນໄດ້ຍິນຄວາມນີ້ ພະອົງຄົງຈະກາວ - ໂກດບໍ່ຢອກເລີຍ. ປັດຈຸບັນ ອົງມຸງກຸດ ຍັງຕ້ອງການສາຕະສົນອາຄົມ ແລະ ບົດຮຽນຢ່າງຫລວງຫລາຍກ່ອນຈະຂຶ້ນຄອງລາສະສົມບັດເປັນກະສັດ. ພະອົງຍັງຕ້ອງການຮຽນຫລາຍສິ່ງຫລາຍຢ່າງ ໃນດ້ານການປົກຄອງ ເພາະວ່າ ພະອົງຮູ້ວ່າຢູ່ອ້ອມຂ້າງ ລາຊະ ອານາຈັກຂອງພະອົງ ມີອານາຈັກຕ່າງໆ ທີ່ມີກະສັດຜູ້ເກັ່ງກາປົກຄອງຫນຶ່ງ ໃນກະສັດເຫລົ່ານັ້ນ ຍັງມີກະສັດ ເກໂລໂນ ເຊວັນໂດໂນຜູ້

ຄອງ ລາຊະອານາຈັກ ໄປໃນໂດໂຣະ ຜູ້ທີ່ມີສາຕະສິນອາຄົມແລະ ລິດເດດຍອດຢຽມ. ອົງມຸງກຸດ ຊົງມີພະປະສົງຢາກຈະເຂົ້າໄປ ຢູ່ ນ່ໍງ ກະສັດອົງນີ້ ເພື່ອຈະໄດຮຽນເອົາວິຊາອາຄົມນຳພະອົງທ່ານ.



ຮອດຕອນກາງຄືນມາ ເມື່ອທຸກຄົນລົ້ມຫົວນອນຫລັບແລ້ວ ອົງມຸງກຸດ ເລີຍລັກຢ່ອງອອກໄປຈາກພະລາຊະວັງ ແລະ ຍ່າງມຸ້ງໜ້າໄປສູ່ ອານາຈັກ ໂປໂນໂລໂຣະ ເພື່ອຈະຊອກວຽກເຮັດ ໃນພະລາຊະວັງ ໂປໂນໂລໂຣະ. ອົງມຸງກຸດ ເປັນຄົນທີ່ມີໜ້າ ຕາສົດສວຍ ມີຮູບຮ່າງໃຫ່ຍສູງ ດັ່ງນັ້ນຈຶ່ງບໍ່ມີບັນຫາຫຍັງເລີຍໃນການຈະໄດ້ຖານະເປັນນາຍຍາມພະລາຊະວັງ, ຫລັງຈາກປະຕິບັດໜ້າທີ່ມາໄດ້ໄລຍະໜຶ່ງແລ້ວ ອົງກະສັດ ເກໂລໂນະ ເຊວັນໂດໂນະຫລິງເຫັນວ່າ ອົງມຸງກຸດ ມີຄວາມສາມາດ ແລະ ການປະພຶດ ດີເລີດ ຈຶ່ງປົງປະໄທເອົາເຂົ້າເຝິກ ໃຫ້ເປັນທະຫານ. ຜ່ານການເຝິກແອບວິຊາອາຄົມ ແລະ ສາຕະສິນມາໄລຍະໜຶ່ງພະອົງ ຍັງຫລິງເຫັນວ່າ ອົງມຸງກຸດ ຍັງມີຄວາມຄ່ອງແຄ່ວຊຳນິຊຳນານ ກວ່າເພິ່ນ ອື່ນຕອງພະໄທຂອງພະອົງເປັນຍິ່ງໜັກ ດັ່ງນັ້ນພະອົງ ຈຶ່ງຕົກລົງປົງພະໄທ ແຕ່ງຕັ້ງໃຫ້ເປັນ ມະຫາອຸປະຣາຊະ ຊຶ່ງມີ ນາມມະຍົດວ່າ : ມະຫາອຸປະຣາຊະ ຜູ້ຈົງຄຳອານົບ.

ມາເຖິງໄລຍະໜຶ່ງອານາຈັກ ໂປໂນໂລໂຣະ ໄດ້ປະ ສົບກັບຄວາມຫາຍະນະອັນຮ້າຍແຮງ. ຫວຍນ້ຳລຳເຊຫືອດແຫ້ງ ໄຮ່ນາຕາກກາ ຂອງປະຊາຊົນແຕກແຫ້ງ ຕົ້ນເຂົ້າຕາຍຍືນເຍີນ ປະ ຊາຊົນອຶດຫິວ ແລະ ຕາຍໄປຍິ່ງນັ້ນ. ຕອນກາງຄືນມາຝູງເສືອສິງກໍພາກັນມາອາລະວາດເລາະເລັ້ມກິນຊາກສົບຄົນຕາຍ.ຊາວບ້ານ ຊາວເມືອງ ພາກັນອົກສັ່ນຂວັນຫາຍດ້ວຍຄວາມຢ້ານກົວ.ເວລານັ້ນ ພະມະຫາກະສັດ ເລີຍຊົງມີພະລາຊະໂອງການຮຽກຮ້ອງຫາບັນດາບັນດິດ ແລະ ນັກປາດ ໃຫ້ມາຊ່ວຍແກ້ໄຂສະຖານະການເພື່ອໃຫ້ ກັບ

ເຂົ້າສູ່ສະພາບປົກກະຕິ.

ຄືນວັນໜຶ່ງ ພະສັງຄະລາດ ປະຈຳພະລາຊະວັງ ເລີຍ ນິລາງຝັນດີ ແລະ ເຫັນຄວາມສະຫງົບສຸກກັບຄືນມາສູ່ ພະຣາຊະອານາຈັກ ໄປໃນໄລຍະ ດັ່ງກ່າວ. ຮຸ່ງເຊົ້າມາ ສັງຄະຣາຊາເລີຍແກ້ຄຳຝັນນີ້ໃຫ້ ພະມາຣາຊາຟັງ :

" ເດຊະພະມະຫາກະສັດອົງເປັນເຈົ້າ ອັດຕະນາເຫັນ ພະຣາຊະກຸມມາລີອົງໜຶ່ງ ນັ່ງຢູ່ຄຽງຂ້າງພະອົງ.ພະນາງເຈົ້ານີ້ ພະນາມວ່າ :ເຈົ້າຣາຊະກຸມມາລີ ກິລິຊູຊິ ແຫ່ງຣາຊະມະຫາ ອານາຈັກ ເກິດິຣິ ".

ພະມະຫາກະສັດຊົງນັ່ງຟັງຢ່າງພິນິດພິເຄາະຄວາມບອກເລົ່າ ຂອງສັງຄະຣາຊາ ແລະ ກໍຊົງປົງພະໄທຈະສູ່ຂໍເອົາພະນາງເຈົ້າມາເປັນ ຣາຊະທິດາ ເພື່ອຊ່ວຍກອບກູ້ເອົາສະຖານະການທີ່ ໄພ່ຟາຂາແຜ່ນດິນຂອງພະອົງກຳລັງປະສົບ ກັບຄວາມຫາຍະນະນັ້ນ. ເມື່ອປົງພະໄທແລວ ພະອົງເລີຍຊົງຮຽກເອົາພະມະຫາອຸປະຣາຊະຂອງພະອົງມາ :

" ມະຫາອຸປະຣາຊະພູຈັງຄາ ອານົມ ! ຈົ່ງໄປຍັງມະ ຫາຣາຊະອານາຈັກ ເກິດິຣ ເທີນ ນະທີ່ນັ້ນ ທ່ານຈະໄດ້ຂໍເອົາ ພະນາງເຈົ້າ ຣາຊະກຸມມາລີ ມາເປັນພະມະເຫສີຂອງເຮົາພະອົງ. ທ່ານຢ່າໃຫ້ພາດ ເພາະມັນແມ່ນເລື່ອງເປັນຕາຍສຳລັບອານາ ຈັກຂອງພວກເຮົາ. ພູຈັງຄາ ອານົມ ກົ້ມຫົວຮັບເອົາ ພະຣາຊະໂອງການ. ວຽກນີ້ເປັນວຽກທີ່ຍາກລຳບາກທີ່ສຸດສຳລັບທ່ານ.ເຮັດ ຈັ່ງໃດ ຈະແບກໜ້າກັບຄືນສູ່ ພະຣາຊະອານາຈັກຂອງອົງບິດາຊົງຕົນ

ເອງໄດ້ປະຕິເສດ ພະຣາຊະໂອງການຂອງພະອົງມາແລ້ວ ແລະ ໄດ້ໜີອອກໄປຈາກອານາຈັກນັ້ນແລວ.

ແນວໃດກໍດີ ທ່ານຕອງປະຕິບັດໜ້າທີ່ນີ້ໃຫ້ໄດ້.ດັ່ງນີ້ ເອງ ທີ່ທ່ານໄດ້ຈາກອານາຈັກ ໄປໂນໂຄໂຣະ ດ້ວຍຄວາມໜັກໃຈ . ທາງເດີນໄປສູ່ອານາຈັກ ເກດີຣີ ນັ້ນຕອງໄດ້ຜ່ານປ່າໃຫຍ່ດົງດິບ. ມະຫາອູປະຣາຊະ ຕົກລົງຢຸດພັກ ແລະ ປະກອບພິທີບະເຈົ້າ ຖື້ມ ເຈົ້າຖານນະທີ່ນັ້ນ. ຄາວໜຶ່ງກໍມີສິ່ງໃດສິ່ງໜຶ່ງຕົກລົງມາແຕ່ຟ້າ ໃສ່ເຊິ່ງໜ້າທ່ານເອງ.ມັນແມ່ນໜ້າກາກຜີຍັກ.ພອມກັນນັ້ນທ່ານກໍ ໄດ້ຍິນສຽງດັງກັງວານມາວ່າ :

" ພູ້ຈົງຄາ ອານົມເຣີຍ ! ອັນນີ້ແມ່ນສິ່ງທີ່ເຈົ້າຕອງການ. ເຈົ້າຈົ່ງຖືກັນບ ແລວຈະບໍ່ມີໃຜຮູ້ໜ້າເຈົ້າໄດ້.ນອກຈາກນັ້ນມັນຍັງ ໃຫ້ອະນຸພາບອັນຍິ່ງໃຫຍ່ແກ່ເຈົ້າຍິ່ງໃຫຍ່ຈົນບໍ່ມີອາວຸດຄູດແສງ ອັນ ໃດຈະມາທຳຮາຍເຈົ້າໄດ້ເລີຍ ".

ເມື່ອໃສ່ໜ້າກາກນັ້ນແລວ ທ່ານມະຫາອູປະຣາຊະ ກໍ ເດີນ ໜ້າຕໍ່ໄປ ຍັງອານາຈັກ ເກດີຣີ. ເມື່ອໄປເຖິງພະລາຊະວັງແລວ ມະຫາອູປະຣາຊະ ພູ້ຈົງຄາ ອານົມ ກໍທູນແດ່ພະມະຫາຣາຊາແຫ່ງ ອານາຈັກ ເກດີຣີ ເຖິງຈຸດປະສົງຂອງທ່ານ.ເມື່ອໄດ້ຊົງຊາບເຫດ ຜົນທຸກປະການແລວ ພະມະຫາກະສັດເລີຍຕັດວ່າ :

" ກູພະອົງ ບໍ່ຕອງການໃຫ້ລູກສາວຂອງກູພະອົງໄປເປັນ - ເມຍຂອງຍັກຂອງເຍນ ຈົ່ງກັບອອກໄປດຽວນີ້ ".

ມະຫາອູປະຣາຊະ ໄດ້ພະຍາຍາມອະທິບາຍເຫດຜົນບອກວ່າ ພະມະຫາກະສັດແຫ່ງອານາຈັກ ແຫ່ງໄປໂນໂຄໂຣະ ບໍ່ໄດ້ແມ່ນ ຜີ

ແມ່ນສາວຫຍັງເລີຍ ພະອົງກໍເປັນເຊື້ອມະນຸດບໍລິສຸດ ແລະ ເປັນຫນໍ່ກະສັດ ອົງຊົງລິດເດດເກັ່ງກາ. ແຕ່ເຖິງຈະອະທິບາຍທໍ່ໃດພະມະຫາຣາຊາ ກໍ່ຍັງບໍ່ເຊື່ອ :

" ເມື່ອພະມະຫາອຸປະຣາຊະເປັນຍັກ ເຈົ້າຊີວິດຂອງ ພວກສູກໍເປັນ ຍັກເຊັ່ນກັນ ".

" ຂໍປະທານໂທດແດ່ ຂ້າພະບາດ " ພູ້ຈັງຄາ ອານົມເວົ້າ

" ພະອົງບໍ່ໄດ້ແມ່ນຍັກເຍນເລີຍ ກໍຄືຂ້າພະບາດນີ້ເອງ ຂ້າພະບາດກໍເປັນມະນຸດ ປອມຕົວ "

ເຖິງຈິເວົ້າແນວໃດພະມະຫາຣາຊາກໍຍັງບໍ່ເຊື່ອ ອີກບໍ່ ຫນ່ຳຊ້ຳຍັງຫົວຂວັນ ກາກໆຂຶ້ນ.

" ຂໍແຕ່ພະຢູ່ເກົ້າ ເຈົ້າຢ່າຂະຫມ່ອມກັ້ຂ້າເຫັນ ຂໍໃຫ້ ພະອົງ ຈົ່ງຊົງພະກະລຸນາ ຟັງຂ້ານ້ອຍແດ່ຫອນ ຂ້ານ້ອຍນີ້ແມ່ນໄອລົດຂອງພະອົງ ". ພໍໄດ້ຍິນຄຳນີ້ ພະມະຫາຣາຊາ ຢູດຫົວທັນທີ ສີຫນ້າຂອງພະອົງນານເຂົ້າ ປະກົດວ່າ ມີຄວາມໂກດແຄນເຫລືອ ທີ່ສຸດ.

" ບໍ່ ! ເຈົ້າບໍ່ແມ່ນລູກຂ້ອຍ. ເຈົ້າບໍ່ສາມາດຈະແມ່ນ ລູກຊາຍຂອງຂ້ອຍໄດ້. ເຈົ້າແມ່ນຜີດ. " ພໍໄດ້ຍິນຄຳນີ້ ພະສັງ ຄະຣາຊາປະຈຳ ພະຣາຊະວັງກໍຣີບອອກມາພະຍາຍາມຢູດຄວາມເວົ້າຂອງພະມະຫາຣາຊາ ເພາະພະອົງ ຮູ້ດີເຖິງລິດເດດຂອງ ຄວາມເວົ້າແຫ່ງພະມະຫາຣາຊາດີ ຄືເວົ້າຫຍັງອອກໄປແລວກໍເຂັດ ຢ່າແລະ ກາຍເປັນຈິງໂລດ.

" ຂໍເດຊະພະອົງ ສິ່ງທີ່ເຂົາເວົ້າມານັ້ນແມ່ນຄວາມຈິງ "



ພະສີວຄະອາຈາ ພະຍາຍາມສະກົດກັ້ນອຳນາດຂອງຄຳເວົ້າ ດັ່ງກ່າວຂອງພະອົງ ແຕ່ກໍ່ລ້າຊ້າໂພດໄປແລວ. ໃນຂະນະດຽວ ກັນນັ້ນເອງ ພະອາຈະໂອຣົດຂອງພະອົງເລີຍກັບເກີດເປັນພັຍກອັຕລີ. ຫນ້າກາກເລີຍກັບກາຍເປັນຫນ້າຈິ່ງຄີເປັນຫນ້າຂອງຍັກ ເມື່ອ ພະນາງເຈົ້າ ຜູ້ເປັນນອງເຫັນເຫດການດັ່ງນັ້ນ ພະອົງນາງກໍຣີບ ສະເດັດເຂົ້າມາຫາພີ່ຊາຍ ພອມທັງເວົ້າວ່າ :

" ພະພີ່ຊາຍຂອງນາງ ພະພີ່ຢ່າເສົ້າເສຍໃຈເລີຍ ພະພີ່ຈະຕ້ອງກັບກາຍເປັນຫນ້າມະນຸດ ເມື່ອນອງແຕ່ງງານເປັນ ພັນລະຍາ

ຂອງ ມະຫາຣາຊາ ແຫ່ງອານາຈັກ ໄປໂນໂດໂຣະ ແລ້ວ. ແຕ່ວ່າກ່ອນຈະປະກົດເປັນຈິງໄດ້ ພະມະຫາຣາຊາ ຈະຕ້ອງສະໜອງຕອບກັບເງື່ອນໄຂຂອງນ້ອງດັ່ງນີ້. ຂໍ້ທີໜຶ່ງ : ພະອົງຈະຕ້ອງມາໝັ້ນ ພ້ອມກັບສິ່ງເປັນຣອຍຫາສິບໂຕ. ຂໍ້ທີສອງ : ພະອົງຕ້ອງນຳທະຫານຂອງພະອົງ ເລາະສ່ອງໃຕ້ດິນ ແຕ່ ໄປໂນໂດໂຣະ ຈົນມາຮອດນີ້. ເຈົ້າຊາຍຜູ້ເປັນພີ່ ໄດ້ປະຕິຍານຕົນວ່າ ຈະ ໄປທູນຕໍ່ ມະຫາຣາຊາຝ່າຍພູນ ເຖິງເງື່ອນໄຂທີ່ນ້ອງໄດ້ເວົ້າມາ ທຸກປະການ.

ພໍເດີນທາງກັບມາເຖິງ ພະລາຊະວັງແຫ່ງກະສັດ ເກໄລໂນເຊວັນໂດໄນ ແລວ ມະຫາອຸປະຣາຊະ ຜູ້ຈັງຄາ ອານິມ ກໍ ເລີຍເປັນທີ່ບໍ່ຮູ້ຈັກ ແກ່ຝູງເສນາອາມາດຕະຫລອດພະເຈົ້າແຜ່ນດິນເລີຍທ່ານຈຳຕ້ອງໄດ້ເລົ່າເຫດການຕ່າງໆທີ່ເປັນມາຕະຫລອດເງື່ອນໄຂຂອງພະນາງເຈົ້າ ຣາຊະກຸມມາລີ ແຫ່ງມະຫາອານາຈັກ ເກດີຣີໃຫ້ຟັງທຸກປະການ. ເມື່ອໄດ້ຟັງຄຳກາບທູນຂອງມະຫາອຸປະຣາຊະຂອງຕົນແລວ ພະມະຫາກະສັດກໍທູນປະຕິຍານວ່າ ຈະກະທຳທຸກສິ່ງທຸກຢ່າງ ເພື່ອທີ່ຈະສຳເລັດຕາມເງື່ອນໄຂທີ່ໄດ້ເວົ້າມານັ້ນທຸກ ປະການ. ພະອົງໄດ້ເຂົ້າປ່າຫິບ ເພື່ອຈັບສິ່ງໃຫ້ໄດ້ຣອຍຫາສິບໂຕ. ໜຶ່ງໃນສິ່ງຈຳນວນນັ້ນມີລູດເດດກາເກົ່າ ດັ່ງນັ້ນມະຫາອຸປະຣາດຈຶ່ງຕັດສິ່ງໃຫ້ມັນຂຸດຊ່ອງໃຕ້ດິນ ແຕ່ອານາຈັກໂປໂນໂດໂຣະ ຈົນເຖິງ ອານາຈັກ ເກດີຣີ. ຈາກນັ້ນ ພະມະຫາຣາຊາພ້ອມດ້ວຍ ລິພົນ ແລະ ສິ່ງຣອຍຫາສິບໂຕຂອງພະອົງກໍພາກັນລອດ ຊ່ອງໃຕ້ດິນນັ້ນໄປ ເມື່ອໄປຮອດກາງທາງ ມະຫາອຸປະຣາຊະ ຜູ້ຈັງຄາ ອາ

ນິມ ເລີຍກັບເພດເປັນມະນຸດເໝືອນເດີມ.

ແຕ່ແລວໃນປ່າທຶບ ລະຫວ່າງ ໄປໃນໂຄໂຮະ ແລະ ເກດີຣີ ເຈົ້າ ຣາຊະສີງ ອັນແມ່ນສີງເຜືອກເຈົ້າແຫ່ງປ່າທຶບ ແລະ ສີງທັງຫລາຍ ຮູສຶກນຶກດວານ ການໂກດເຫລືອທີ່ສຸດ. ເມື່ອກັບມາ ຈາກການປະພາດຂອງເຂົາ ພໍມາເຖີງພະຣາຊະວັງ ກໍຮູຂ່າວວ່າ ສີງອັນເປັນບໍລິວານຂອງເຂົາຣອຍຫາສິບໂຕ ຖືກກະສັດແຫ່ງ ໄປໃນໂຄໂຮະ ຈັບເອົາໄປໝົດ. ເຂົາຍັງຮູອີກວ່າກະສັດອົງ ນັ້ນພ້ອມດວຍລີພົນ ພວມເດີນທາງໄປສູ່ອານາຈັກ ເກດີຣີ ໂດຍຊ່ອງໃຕ້ດິນ ດັ່ງນັ້ນເຂົາຈື່ງລະດົມລີພົນໄປດັກສະກັດຢູ່ປາກຮູອອກຂອງຊ່ອງ ໃຕດິນເພື່ອຈະແກແຄ້ນກະສັດອົງນັ້ນ. ບັນດາລີພົນສີງພາກັນເຊື່ອງໂຕດັກຢ່າງເອົາການເອົາງານ. ຕາມວ່າໃນກໍມີຝູງນົກຍູງ ຈັບລຣົມລາຍເພື່ອຈະມາຊ່ອຍກອງທັບສີງ ອັນເປັນມິດຂອງເຂົາ.

ເວລາໄດມາເຖີງ ເມື່ອກອງທັບຂອງກະສັດ ເກໂລໂນ ເຊວັນໂດໂນ ຫລັ່ງອອກມາຈາກຮູດິນ ກອງທັບສີງກໍເຂົ້າຕະລຸມ ບອນຄົນກັບສີງລົບກັນ ຈົນຟ້າປັ່ນດິນຫວາຍ. ຝູງນົກຍູງກໍບິນແສວ ລົງມາຕົບປີກຕົບຫາງ ແລະ ສັບຕອດພົນທະຫານມະນຸດ.ທະຫານ ມະນຸດຢ່າງຫລວງຫລາຍຖືກຂ້າຕາຍ ເພາະສີງ ມີພະລັງແຮງເໝືອກວ່າຄົນຫລາຍເທົ່າ. ເມື່ອເຫັນສະພາບເປັນແນວນັ້ນພະມະຫາກະສັດຈື່ງມອບຫົນວິເສດແກ່ມະຫາອຸປະຣາດຂອງພະອົງ.ຫົນຫລີ ແສວິເສດດັ່ງກ່າວ ສາມາດປາບພວກສີງໄດ້ ຄືພຽງແຕ່ແກວ່ງກວັດມັນໄປມາ ສຽງຂອງມັນຈະເຮັດໃຫ້ສີງອົກສັ່ນຂວັນຫາຍ ແລະ ແສງເຫລື້ອມຂອງມັນ ຈະເຮັດໃຫ້ມັນມືນເມົາ ອັນໃນທີ່ສຸດກໍຈະປົບແລ່ນ



ໜີທັບທັນທີ. ສິງທຸກໂຕໄດ້ປົບໜີໝົດແລ້ວຍັງເຫລືອແຕ່ ລາຈະສີສິງຄາບາລິງ ໂຕເປັນເຈົ້າແຫ່ງເຂົາໂຕດຽວເທົ່ານັ້ນທີ່ຍັງສູ້ຕໍ່ໄປ.ມັນເປັນການປ້ຳກັນ ລະຫວ່າງ ສອງອິດທິລິດ.ທັງສອງສູ້ກັນຕະຫລອດມື້ຕະຫລອດຄືນ ຕິດຕໍ່ກັນຫລາຍຄືນ.ເວລາກາງຄືນມາ ລາຈະສີກັບເພດ ເປັນຊາຍໜຸ່ມ ໜ້າງາມ ລັນເມື່ອເຖິງກາງເວັນມາກໍ ກັບເພດເປັນສິງຄືເກົ່າ ແຕ່ໃນທີ່ສຸດ ພູ່ຈັງຄາ ອານົມ ກໍສາມາດ ຂ້າສິງ ຄາບາລິງ ໄດ້ດ້ວຍແສ້ວິເສດດັ່ງກ່າວ.ຫລັງຈາກນັ້ນຂະ ບວນທັບຂອງ ພະມະຫາກະສັດ ໄປໂນໂຄໂຣະ ກໍໄດ້ເດີນທາງຕໍ່ໄປຈົນເຖິງ ອານາຈັກ ເກດິຣິ. ທີ່ ພະຣາຊະວັງ ພະອົງໄດ້ຮັບ ການຕ້ອນຮັບຢ່າງດີຈາກເຈົ້າຍິງ ກິລິຊູອິ ຈຶ່ງໄດ້ຕົກລົງປົງໃຈເປັນ ພະມະເຫສີຂອງພະເຈົ້າແຫ່ງອານາຈັກ ໄປໂນໂຄໂຣະຕັ້ງແຕ່ບັດ ນັ້ນເປັນຕົ້ນມາ.

ພະລາຊິນີ ກິລິຊູອິ ແຫ່ງ ໄປໂນໂຄໂຣະ ສະເຫວີຍ ລາດຮ່ວມກັບພະສາມີ ມາໄດ້ສອງສາມປີ ແຕ່ບໍ່ສາມາດຈະປະສູດບຸດ - ອອກມາສືບທໍ່ແທນແນວໃຫ້ແກ່ພະມະຫາຣາຊາໄດ້ເລີຍດັ່ງນັ້ນ ພະອົງນາງ ຈຶ່ງຂໍກັບຄືນໄປຍັງ ອານາຈັກ ເກດິຣິ ຄືນ.ພາຍຫລັງ ທີ່ເອກອັກພະມະຫາສີຂອງພະອົງຈາກໄປແລ້ວ ພະມະຫາຣາຊາ ເກໂລໂນ ກໍຮູ້ສຶກມີຄວາມໂສກເສົ້າຫງວນເຫງົາເປັນອັນມາກ.ພະອົງບໍ່ສະເຫວີຍເຂົ້າພ້ຳປາໃຈຫຍັງເລີຍ ແລະ ກໍບໍ່ເຄື່ອນໄຫວ ວຽກງານອັນໃດເລີຍ.

ເມື່ອເຫັນເປັນຈັ່ງຊັ້ນ ມະຫາອຸປະອາຈະ ຜູ້ສະຫລາດຈຶ່ງຈັດຕັ້ງການຟ້ອນຂັ້ນ ເພື່ອຈຸດປະສົງນຳເອົາຄວາມຊື່ນບານໃຫ້ກັບ ຄືນ

ມາສູ່ ພະມະຫາຣາຊາ. ເປັນການຟ້ອນສາກທີ່ພະມະຫາຣາຊາ ແຫ່ງອານາຈັກ ໂປໂນໂລໂຣະ ໄປສູ້ລົບຊູະມະສິງ ແລະ ນຳເອົາ ພະນາງເຈົ້າ ກິລິຊຸຊິ ມາໄດ. ນັກຟ້ອນຜູ້ຫນຶ່ງໃສ່ຫນາກາກສີແດງ ມີດັງຍາວ ມີຫນວດດົກ ແລະ ສຸບມຸງກຸດເປັນໂຕແຫນໃຫ້ແກ່ພະມະຫາຣາຊາ ເກໂລໂນ ເຊວັນໂດໂນ. ເອົາຜູ້ນຸ່ງເຄື່ອງຫລາຍ ສີເຣືອງເຣື່ອ ມີລວດລາຍງົດງາມ. ມະຫາອູປະຣາຊະ ຜູ້ຈັງຄາອານົມ ກໍມີຜູ້ຫລິ້ນບົດບາດເຊັ່ນກັນ ເອົາໃສ່ຫນາກາກຍັກ ມີດັງ ໃຫຍ່ ຫນວດດົກ ຕາໃຫຍ່ ສົ່ນໆສາຍໆ. ສິງ ຄາບາລົງ ກໍຖືກຫລິ້ນ ບົດ



ບາດເຊັ່ນກັນ ຄືນັກຟ້ອນໃສ່ໜ້າກາກສິງ ແລະ ມີຫາງນົກຍູງ ພີ ຢູ່ເທິງໜ້າກາກຂອງເຂົາ ນອກນັ້ນເຂົາຍັງ ແບກຍິງສາວນ້ອຍຊຶ່ງ ເປັນຕົວແທນໃຫ້ແກ່ ຣາຊິນີ ກິລິຊຸຊິ. ສ່ວນພວກທະກາ ທະຫານ ຂອງ ໂປໂນໂຄໂຣະ ນັ້ນ ກໍຍັງມີໂຕແທນຄື ສີ່ໜຸ່ມໜ້ານິນຂຶ້ນມາ ໃນໄຜ່ຫອບໄປມາ. ການສະແດງດັ່ງກ່າວມີຄວາມຫລາຍມີ ສຽງ ດົນຕີ ໜ້າເບື່ອໜ້າຊົມທີ່ສຸດ ແລະ ຂົນຊື່ນານທີ່ສຸດຣຽກວ່າ:ລະ ບຳໄຣຍົກ ໂປໂນໂຄໂຣະ ແຕ່ບັດນັ້ນເປັນຕົ້ນມາ.

24 / VII

ນິທານພື້ນເມືອງ ອິນໂດເນເຊຍ

ຫ້າມຈຳໜ່າຍ

ຈັດທຳໂດຍ: ສະຖາບັນຄົ້ນຄວ້າ ສິລະປະວັນນະຄະດີ ແລະ ພາສາສາດ
ດ້ວຍຄວາມຮ່ວມມືຈາກ: THE TOYOTA FOUNDATION
ພິມທີ່: ໂຮງພິມ ຊາວໜຸ່ມ ທະບຽນເລກທີ່ 256/ພປ 270592
ພິມຄັ້ງທີ່ນຶ່ງ ຈຳນວນ 2.000 ຫົວ. ຂະໜາດ: 13,5 x 20 ຊມ.

# ສອງອ້າຍນ້ອງ

●ໂດຍ : ອະຢຸ ສຸຕັນໂຕ

ຍັງມີເທື່ອໜຶ່ງ ຢູ່ໃນອານາຈັກມາຈະລັງກາ ພະຍາເຈົ້າເມືອງ ພຸດໄທ ລຸໂກໄຢ ຜູ້ຊົງລິດເດດອັນສັກສິດ ມີລູກຊາຍ ໜ້າຕາດີງາມສອງຄົນ. ຜູ້ອາຍຊື່ວ່າ ສັກກະ ໂລຫາ ແລະ ຜູ້ນ້ອງ ຊື່ວ່າ ສິງຄາ ໂລຫາ. ທັງສອງມີຄວາມຮັກໄຄ່ ສະໜິດສະໜົມກັນດີ ແລະ ມີຄວາມກະຕັນຍູຕໍ່ຜູ້ເປັນບິດາສະເໝີມາ.

ມື້ໜຶ່ງຜູ້ເປັນພໍ່ຢາກຈະສັ່ງສອນລູກ ຈຶ່ງເຣັຽກລູກທັງສອງ ມາຫາ. ຂະນະນັ້ນສັກກະ ໂລຫາ ຜູ້ເປັນອາຍບໍ່ໄດຄຳນຶງເຖິງຄວາມຮຽບຮອຍແຕ່ຢ່າງໃດ ເລີຍນຸ່ງເຄື່ອງປຸບປັບຕາມໃຈມັກ ແບບຢູ່ກັບເຮືອນ ອັນເຮັດໃຫ້ຮູບຊົງຂອງຜ້າ ທີ່ປົກຫົວຂອງເຂົາ ເປັນ ເຂົາອອກມາເໝືອນຫົວຄວາຍ. ເມື່ອເຫັນດັ່ງນັ້ນ ຜູ້ເປັນບິດາເລີຍ ມີຄວາມໂກດເຄືອງຫລາຍ ຖືວ່າເປັນພຶດຕິກຳຂາດຄວາມເຄົາລົບຢຳເກງຕໍ່ພໍ່. ດວຍຄວາມກາວໂກດຂອງເພິ່ນ ພຸດໄທ ລຸໂກໄຢ ຈຶ່ງສາບໃສ່ ລູກຊາຍກົກຂອງຕົນວ່າ :

" ກູບໍ່ມັກຜ້າປົກຫົວມຶງ, ມຶງຮູ້ບໍ່ວ່າ ການກະທຳເຊັ່ນນີ້ເປັນການຂາດ ຄວາມຢຳເກງຕໍ່ພໍ່ ມຶງຄວນໃສ່ເຄື່ອງຮຽບຮ້ອຍດີ ເມື່ອ



ມາຫາພໍ່. ນາງລືມຄວາມບອກເລົ່າຂອງກູແລ້ວບໍ່ວ່າ ໃຫ້ປະພຶດ ໂຕເປັນຄົນດີມີສິກສີ. ດີແລ້ວເມື່ອມຶງຢາກໄດ້ຫົວເປັນຫົວຄວາຍຫລາຍກໍໃຫ້ມຶງເປັນຫົວຄວາຍສາ ". ຈາກຄຳສາບຂອງພໍ່ ທີ່ມີລິດ ເດດສັກສິດນັ້ນ ຫົວຂອງທ້າວ ສັກກະ ໂລທາ ເລີຍກັບເກີດເປັນ ຫົວຄວາຍອື່ຫລີ.

ສິງຄາ ໂລທາ ຜູ້ເປັນນ້ອງ ເມື່ອເຫັນອ້າຍຂອງຕົນກັບກາຍມີຫົວເປັນຫົວຄວາຍ ກໍເລີຍຫົວຂວັນໃສ່ຊິກໃສ່ໂຊ.

" ໂອໂຮ່ ! ຫົວເຈົ້າເປັນໜ້າຢາກຫົວອື່ຫລີ້ອາຍ " ເຂົາຫົງຫົວຫົງຍິ້ງແຂ້ວແກກແຊກອອກມາ. ແຕ່ຕາມປະເພນີຂອງຖິ່ນນັ້ນ

ແລ້ວ ການຍິ້ງແຂ້ວອອກມານັ້ນ ເປັນການສະແດງຄວາມບໍ່ຢຳເກງ ໂດຍສະເພາະ ຕໍ່ຜູ້ໃຫຍ່ໄມ້ສູງ ດັ່ງນັ້ນທ່ານ ພຸດໂທ ລູໂກໂຢ ຈຶ່ງ ໂກດເຄືອງອີກຕໍ່ລູກຊາຍຫລາຂອງຕົນ.

" ຢຸດຫົວທັນທີບັກຊົ່ວ ! ມຶງບໍ່ຢຳເກງກູດອກວ໋າ ? ມຶງລືມຄວາມບອກເລົ່າຂອງກູວ່າໃຫ້ມຶງປະພຶດຕົນໃຫ້ດີແລ້ວບໍ່ ? ໝາມຶງຄືສິງນີ້ ". ຄອນພໍ່ເວົ້າຄວາມນີ້ອອກມາ ໜ້າຕາຂອງທ້າວ ສິງຄາ ໂລຫາ ເລີຍກັບກາຍເປັນໜ້າສິງທັນທີ.

ສອງອ້າຍນ້ອງພາກັນເບິ່ງໜ້າກັນ ເຫັນສະພາບດັ່ງ ກ່າວເລີຍພາກັນຮ້ອງໄຫ້ຂຶ້ນດ້ວຍຄວາມເສຍໃຈ.

" ພໍ່ເຮີຍ ຢ່າເຮັດໃຫ້ພວກລູກເລີຍ ພວກລູກຜິດແລ້ວ ພວກລູກຍອມແລ້ວ ຈຶ່ງອະໂຫສິໃຫ້ພວກລູກແດ່ເທີ້ນ ຕໍ່ໄປພວກລູກຈະ ບໍ່ປະພຶດໂຕແບບນີ້ ຈັກເທື່ອເລີຍ ".

ພຸດໂທ ລູໂກໂຢ ມອງເບິ່ງໜ້າຂອງລູກຊາຍທັງສອງ ດ້ວຍຄວາມເສົ້າໃຈແລ້ວກໍເວົ້າກັບລູກວ່າ :

" ເຊົາໄຫ້ສາລູກເຖິງຈະໄຫ້ປານໃດກໍບໍ່ຊ່ອຍແກ້ບັນຫາຫຍັງໄດ້ເລີຍ. ພໍ່ຍົກໂທດໃຫ້ພວກລູກ ແຕ່ຕ້ອງຈື່ຄຳນີ້ໄວ້ໃຫ້ດີ: ຢ່າເຮັດໃຫ້ພໍ່ຮ້າຍຈັກເທື່ອເລີຍເພາະວ່າ ຄຳເວົ້າຂອງພໍ່ເວລາໃຈຮ້າຍນັ້ນມີອະນຸພາບຮ້າຍແຮງ. ບັດນີ້ ຈົ່ງຟັງພໍ່ເວົ້າ : ສິງຄາ ໂລຫາຕັ້ງແຕ່ນີ້ເປັນຕົ້ນໄປ ເຈົ້າຈົ່ງປ່ຽນຊື່ເປັນ ສັດທາ ສູຣະ ສ່ວນ ສີກກະ ໂລຫາ ປ່ຽນເປັນ ເລັມບູ ສູຣະ. ບັດນີ້ໃຫ້ພວກເຈົ້າເດີນທາງໄປທາງທິດໃຕ້ ແລ້ວລ້ຽວໄປທາງຕາເວັນອອກ ຈົນຮອດບ່ອນປ່າໃຫຍ່ດົງເລິກ. ພວກເຈົ້າຈົ່ງຢຸດຢູ່ຫັ້ນ ແລ້ວແຜ້ວປ່າຖາງພູ ສາງ ເປັນ

ທີໂຣງຂຶ້ນ ເລັມບູ ສູຣະ ໃຫ້ຂຶ້ນເປັນເຈົ້າແຜ່ນດິນ ສ່ວນ ສີດທາ ສູຣະ ໃຫ້ເປັນອັງຫນາຄຸມລີພົນແລວໃຫ້ພວກເຈົ້າໃສ່ຊື່ ອານາ ຈັກ ຂອງພວກເຈົ້າວ່າ ພົນທະຮັງຢິນ ' .

ຕອນພໍ່ເວົ້າຈົບແລວ ພວກລູກທັງສອງກໍພາກັນກົ້ມຂາບແລ້ວ ກໍອອກເດີນທາງມຸ່ງຫນ້າໄປຫາປ່າດົງທີ່ພໍ່ບອກໄວ. ພວກເຂົາ ໄດ້ສ້າງພະລາຊະວັງ ຂອງພວກເຂົາຂຶ້ນ ເຊິ່ງມີຄວາມງົດງາມເຫລືອທີ່ສຸດທີ່ຍັງບໍ່ໄດ ແລະ ຜ່ານຫລາຍຟາມາປີມາ ອານາຈັກ ພົນ ທະຮັງຢິນ ກໍໃຫ່ຍອອກໃຫ່ຍອອກ ແລະ ມີຄວາມເຂັ້ມແຂງຈົນເປັນ ທີ່ເຄົາລົບ ແກ່ຝູງອານາຈັກຕ່າງໆໃກຄຽງ. ມີອານາຈັກນຶ່ງ ແຫ່ງດຽວທີ່ສາມາດປາບໄດ້ນັ້ນ ກໍຄືອານາຈັກ ເກດີຣີ.ອານາຈັກ ດັ່ງກ່າວ ເວລານັ້ນ ປົກຄອງໂດຍ ພະຣາຊີນີອົງຫນຶ່ງ ເຊິ່ງຊົງຄວາມງາມຫາທີ່ສຸດ ທີ່ຍັງບໍ່ໄດ. ພະອົງນາງມີຊື່ວ່າ : ເຈົ້າຍິງ ກິລິຊູຊິ

ເຊົ້າມື້ຫນຶ່ງ ພະເຈົ້າແຜ່ນດິນ ເຣັມບູ ສູຣະ ຮຽກປະຊຸມໃຫຍ່. ທຸກຄົນທີ່ຢູ່ພາຍໃຕການປົກຄອງຂອງພະອົງ ນັບທັງສີດທາ ສູຣະ ພາກັນມາໂຮມ . ຂະນະນັ້ນ ພະອົງຍັງປະກາດວ່າ:

" ສີດທາ ສູຣະ ນອງທີ່ຮັກຂອງອາຍພອມທັງທະກາທະຫານ ຜູ້ຈົງຮັກພັກດີຂອງຂາ ມາບັດນີ້ ອານາຈັກຂອງພວກເຮົາຕ້ອງການ ຣາຊີນີ. ຍິງຜູ້ທີ່ຈະມາເປັນ ຣາຊີນີນັ້ນ ເຮົາພະອົງໄດມອງ ເຫັນແລວຄື ເຈົ້າຍິງ ກິລິຊູຊິ ແຫ່ງອານາຈັກ ເກດີຣີ.ເຮົາພະອົງຈະໄດ້ສົ່ງນ້ອງຊາຍຂອງເຮົາ ສີດທາ ສູຣະ ໄປຂໍເອົາມາເປັນພະມະຫາຣາຊີນີ ແຫ່ງອານາຈັກຂອງພວກເຮົາ. ຖາວ່າຫາກເປັນ ດັ່ງຄາດເອົາໄວ ເຮົາພະອົງກໍຈະສາມາດເຕົ້າໂຮມສອງອານາຈັກນີ້:



ໂກດີຣີ ແລະ ພັນທະຣັງຢືນ ເຂົ້າກັນໃຫ້ເປັນມະຫາອານາຈັກທີ່ຊົງພະລັງໄດ ".

ສີດທາ ສຸຣະ ຍິ້ມຫົວອອກມາດ້ວຍຄວາມພໍໃຈ.

" ເປັນຄວາມຄິດທີ່ດີ. ນ້ອງຕົກລົງຈະໄປຂໍເຈົ້າຍິງນັ້ນ ມາໃຫ້ພະອົງອ້າຍດຽວນີ້ເລີຍ ".

ເມື່ອສີດທາ ສຸຣະ ເດີນທາງມາເຖິງ ພະລາຊະວັງຂອງໂກດີຣີ ນະຄອນທາວ ກໍໄດ້ຮັບການຕ້ອນຮັບຢ່າງສະໜິດ ສະໜົມດີ ແຕ່ພໍມາພົບເຫັນເຈົ້າຍິງຣາຊິນີ ແຫ່ງໂກດີຣີ ແລ້ວທາວກໍເລີຍຫົວໃຈລ້ານເພາະຄວາມງາມຂອງນາງ. ທາວສີດທາ ສຸຣະ ຫລົງມັກ -

ເຈົ້າຍິງ ແລະ ຫວັງຢາກໄດ້ມາເປັນເມຍຂອງຕົນເອງ.ເຂົາ ລືມຄຳໝັ້ນທຸກສິ່ງທຸກຢ່າງວ່າ ເຂົາມາຂໍເຈົ້າຍິງໃຫ້ອ້າຍຂອງເຂົາ.

ເຈົ້າຍິງຈຶ່ງຖາມຈຸດປະສົງຂອງການມາຄັ້ງນີ້ ແລະ ມາ ແຕ່ໃສຂອງທາວ ສົດທາ ສູຣະ.

" ເຮົາພະອົງຊື່ວ່າ ສົດທາ ສູຣະ ເປັນມະຫາອຸປະຣາຊະບັນຊາແມ່ທັບຂອງອານາຈັກ ພັນທະຮັງຍິນ. ກະສັດອົນເປັນເຈົ້າແຫ່ງອານາຈັກດັ່ງກ່າວ ເຊິ່ງກໍແມ່ນພະອົງອ້າຍຂອງເຮົາພະ ອົງເອງ ໄດ້ສົ່ງເຮົາ ພະອົງມາຊົງສູ່ຂໍພະນາງເຈົ້າໄປເປັນພະ ມະເຫສີຂອງພະອົງ. ແຕ່ວ່າບັດນີ້ ເມື່ອເຮົາພະອົງໄດ້ຊົງເຫັນ ພະອົງນາງແລ້ວ ເຮົາພະອົງເລີຍມີຄວາມຮັກໃນຕົວພະອົງນາງດ້ວຍຕົວຂອງເຮົາພະອົງເອງ ແລະ ຊົງຢາກຈະໄດ້ພະອົງນາງ ມາເປັນພະມະເຫສີ "

" ສົມມຸດວ່າ ເຮົາພະອົງນາງປະຕິເສດຄຳສະເໜີຂອງພະອົງເຈົ້າແລ້ວ ພະອົງເຈົ້າຈະກະທຳສັນໃດ ? " ເຈົ້າຍິງທັງຖາມທັງຍິ້ມເບົາໆອອກມາ.

" ເຮົາພະອົງຈະທຳລາຍອານາຈັກຂອງພະອົງນາງ ໃຫ້ຍ່ອຍຍັບແລ້ວບັງຄັບໃຫ້ພະອົງນາງເປັນເມຍໃຫ້ໄດ້ ".ທາວ ສົດທາ ສູຣະ ເວົ້າແຜດດ້ວຍສຽງສັ່ນເຄືອເພາະຄວາມໂມໂຫ.

ພະຣາຊິນີ ກິລິຊູຊິ ຮູ້ດີວ່າ ຄວາມໝາຍຂອງຄຳເວົ້າຂອງສົດທາ ສູຣະ ນັ້ນໜັກແໜ້ນຂະໜາດໃດ.ເຈົ້າຍິງຍັງຮູ້ຈັກ ດີວ່າ ເຂົາມີລິດເດດຮ້າຍແຮງ ສາມາດທຳລາຍອານາຈັກ ເຂົາໄດ້ຕາມທີ່ເຂົາວ່ານຳດ້ວຍ. ແຕ່ເຈົ້າຍິງຜູ້ມີຄວາມແຫລມຄົມກໍພະ

ຍາຍາມຫາທາງອອກ ເພື່ອຕົກເປັນເຍື່ອຂອງເຈົ້າຫົວສິງຜູ້ນັ້ນ.
ເຈົ້າຍິງເລີຍບອກວ່າ :

" ໄດ້ ! ເຮົາພະນາງຕົກລົງຈະແຕ່ງງານກັບເຈົ້າແຕ່ ຂໍໃຫ້ເຈົ້າເຄົາລົບຕໍ່ພະອົງອ້າຍຂອງເຈົ້າກ່ອນຈຶ່ງໄປຄອບ ເພີ່ນດີງໃຫ້ເພີ່ນຕົກລົງກ່ອນ " ຈາກຄຳເວົ້າຂອງເຈົ້າຍິງ ສີດທາ ສູຣະກໍອຸ່ນອ່ຽນໃຈ ຈຶ່ງໄດ້ກັບຈາກ ເກດີຣີ ນະຄອນມາຍັງອານາ ຈັກຂອງຕົນ ເພື່ອທູນຕໍ່ພະອົງອ້າຍຜູ້ເປັນກະສັດ.

ເມື່ອມາເຖິງອານາຈັກ ພົບທະຣົງຍືນແລ້ວ ເຂົາກໍຣີບເຂົ້າທູນພະອົງອ້າຍໂດຍພະລັນ.

" ຂໍແຕ່ເດຊະພະອົງອ້າຍ ! ນ້ອງບໍ່ສາມາດປະຕິບັດຫນ້າທີ່ຕາມພະລາຊະໂອງການທີ່ພະອົງອ້າຍໄດ້ມອບຫມາຍໃຫ້. ເມື່ອນ້ອງໄດ້ໄປເຫັນພະນາງ ຣາຊິນີແລ້ວ ຂ້າພະບາດກໍຫລົງຮັກ ພະອົງນາງ ດ້ວຍຕົວຂອງຂ້າພະບາດເອງ ". ພໍໄດ້ຍິນຄຳນີ້ ເລັ່ນບູ ສູຣະເລີຍເຈັບປາບໃນພະໄທ ໃບຫນ້າປ່ຽນສີສະແດງອາການກາວໂກດເຕັມທີ່ .

" ບໍ່ ! ເຮົາພະອົງບໍ່ສາມາດອະໄພຍະໂທດໃຫ້ເຈົ້າ ໄດ້ເລີຍ ເຈົ້າບໍ່ເຄົາລົບຕໍ່ອ້າຍຂອງເຈົ້າໄດ້ເລີຍ ແລະ ບໍ່ປະຕິ ບັດພະຣາຊະໂອງການຂອງພະມະຫາກະສັດເລີຍ.ເຈົ້າຈະຕ້ອງ ຖືກລົງໂທດ ". ຈາກນັ້ນ ພະອົງເລີຍຈຳໃຫ້ສີດທາ ສູຣະ ອອກໄປຈາກ ພະລາຊະວັງ ອັນເປັນເຫດໃຫ້ຜູ້ນ້ອງບໍ່ພໍໃຈ ຈຶ່ງໄດ້ ເກີດການຕໍ່ສູ້ກັນຂຶ້ນ. ທັງສອງມີສາດຕະສິນອາຄົມເກ່ງພໍປານໆກັນແຕ່ຜູ້ນ້ອງມີລິດເດດເກ່ງກວ່າ. ຜູ້ເປັນອ້າຍຮູ້ເລື່ອງນີ້ດີ ດັ່ງນັ້ນ ຈຶ່ງ

ພະຍາຍາມຫລີກຈາກກະແສລົມເປົ່າຂອງນ້ອງຊາຍຢູ່ສະເໝີ - ເພາະວ່າມັນຮ້າຍແຮງ ແລະ ອັນຕະລາຍ. ເຖິງປານໃດກໍ ຕາມ ເມື່ອ ເລັມບຸ ສຸຣະ ເພີນອຍດຽວກໍເລີຍໄດ້ຮັບກະແສລົມ ເປົ່າ ໃສ່ຕົວພໍດີອົນເຮັດໃຫ້ຕົວແຕກອອກເປັນປ່ຽງຈົນຕາຍໄປໃນທີ່ສຸດ.

ຜູ້ເປັນບິດາ ພູດໂທ ລູໂກໂຢ ພໍດີບັງເອີນມາຢ້ຽມຢາມລູກ ທັງສອງໃນເວລານັ້ນ ຄອມພໍດີກັບການສິ້ນພະຊົນຂອງລູກຜູ້ກົກຈຶ່ງ ໂກດຄຽດໃຫ້ລູກຊາຍຫລາຂອງຕົນ.

" ສັດທາ ສຸຣະ ເອີຍ! ເມື່ອເຈົ້າບໍ່ມີຄວາມຮັກໄຄ່ຕໍ່ ອ້າຍ ຂອງເຈົ້າແລ້ວ ເຈົ້າຈຶ່ງຈຳໄວ້ໃຫ້ດີວ່າ ":

" ຜູ້ໃດສັງຫານຜູ້ອື່ນຈະຕ້ອງຖືກສັງຫານໃນທີ່ສຸດ ເຈົ້າຈະ ຕ້ອງພົບຈຸດຈົບແບບອ້າຍຂອງເຈົ້າ ເຈົ້າຈະຕ້ອງຖືກຂ້າຕາຍດ້ວຍ ກົນ ". ເມື່ອເວົ້າຄວາມນີ້ອອກມາແລ້ວ ພູດໂທ ລູໂກໂຢ ກໍຫາຍ ໂຕໄປ.

ສັດທາ ສຸຣະ ເມື່ອພໍ່ຈາກໄປແລ້ວກໍຣີບເດີນທາງມາຫາເຈົ້າ ຍິງ ແຫ່ງອານາຈັກ ເກດີຣີ ເພື່ອຈະແຕ່ງງານ.

" ພະນາງເຈົ້າ ກິລຊູຊີ ສຸດທີ່ຮັກຂອງອ້າຍ ອ້າຍໄດ້ ສັງ ຫານ ອ້າຍຂອງອ້າຍຕາຍໄປແລ້ວ ບັດນີ້ອ້າຍໄດ້ມາແຕ່ງງານ ກັບ ເຈົ້າພະນາງແລ້ວ ຍາມໃດພວກເຮົາຈຶ່ງຈະຈັດການແຕ່ງງານກັນ ໄດ້ ? ". " ການແຕ່ງງານອັນໃດເກາະ ຂອຍຈະບໍ່ເຖິງ ກັບ ແຕ່ງງານ ກັບເຈົ້າໜາ! ສັດທາ ສຸຣະ ເຈົ້າເປັນພຽງເຄື່ອງຄົນ ເທົ່ານັ້ນ ເຫລືອນັ້ນເປັນເຜດໄປຫມົດ. ຂອຍບໍ່ຫອນຈະແຕ່ງ ງານ

ກັບເພດໄດ້ເລີຍ ". ຄຳເວົ້າດັ່ງກ່າວເຮັດໃຫ້ ສີດາ ສຸຣະເຈັບ
ແຄ້ນຫົວໃຈເຫລືອທີ່ສຸດ.

" ເຈົ້າໄດ້ປະຕິຍານຕໍ່ຂ້ອຍແລ້ວມາບັດນີ້ເຈົ້າບໍ່ຍຶດຖືຄຳໝັ້ນສັນຍາເລີຍ " ຄອນວ່າແລວເຂົາເລີຍພູດພາດອອກໄປນອກ ໂຮງແລ້ວກໍເລີ້ມທຳລາຍທຸກສິ່ງທຸກຢ່າງ ແລະ ເຂັ່ນຂ້າຜູ້ຄົນທີ່ຜ່ານ ຕາຜູ້ຄົນນັບຮ້ອຍໆ ຫົວແຕກຕາຍຍ້ອນອະນຸພາບລົມເປົ່າຂອງເຂົາ.

ເມື່ອເຫັນສະພາບການຮ້າຍແຮງດັ່ງນັ້ນ ທ່ານພູ້ຈົງຄະແລງຜູ້ປົກຄອງສຳນັກ ພະລາຊະວັງ ເກດີຣ ເລີຍເຂົ້າມາທູນ ພະຣາຊີນີວ່າ :

" ເດຊະ ອົງພະຣາຊີນີ ຜູ້ເປັນເຈົ້າຫາວ ສີດາ ສຸຣະນັ້ນ



ເກງກ້າຫລືອຂະຫນາດ ທີ່ພວກເຮົາຈະເອົາຊະນະມັນໄດ້. ຖ້າພວກເຮົາບໍ່ຫາວິທີຢຸດຕິຄວາມໂກດກາວຂອງມັນແລວ ອານາຈັກເກດີຣິ ທັງໝົດ ຈະຕ້ອງຖືກມັນທຳລາຍແນ່ນອນ ". ເວລານັ້ນພະຣາຊີນີ ມີຄວາມຮູ້ສຶກໂສກເສົ້າໃຈເຫລືອທີ່ສຸດບໍ່ຮູ້ວ່າ ຈະເຮັດຈັ່ງໃດດີ. ດັ່ງນັ້ນຫນ່ວຍຄູ້ມຄອງພະຣາຊະວັງ ຈິ່ງທູນພະນາງວ່າ ຕ້ອງ-ເອົາຊະນະມັນດ້ວຍກົນ ຈຶ່ງຈະສຳເລັດ.

" ຈົ່ງບອກມັນວ່າພະອົງນາງຈະແຕ່ງງານກັບມັນຖ້າຫາກມັນສາມາດແກ້ໄຂບັນຫາໄດ້ ຫ້າຂໍ້ດ້ວຍກັນ. ໜຶ່ງ : ມັນຕ້ອງຂຸດນ້ຳສ້າງສອງໜ່ວຍຢູ່ຈອມພູ ເຄລູດ. ສອງ : ເຂົາຕ້ອງຫາໄກ່ ໂຕໃຫຍ່ຊ່ຳເຮືອນ ມີຫົວໃຫຍ່ທີ່ກົ້ນກັ້ບຕົ້ນຫມາກກ່ຳ ແລະ ມີຕາຊ່ຳ ກັບຫມາກອງຫລວງ. ສາມ : ມັນຕ້ອງເກັບເອົາທະຫານມາຟ້ອນໃນເວລາບັນເລງວົງເສບ " ຄາມີລານ " ແຫ່ພະຣາຊີນີສະເດັດຂຶ້ນເມື່ອພົບເຈົ້າ ສັດທາ ສູຣະ ທີ່ຈອມພູ . ສີ່ : ເຂົາຕ້ອງຮ່ຳ ຄ່ຳຫມາກດ້ວຍປູນ ແລະ ໃບພູແລວມັດດ້ວຍເສັ້ນເຟືອງ .ຫ້າ : ວົງດົນຕີ ຄາມີລານ ນັ້ນ ຕ້ອງແມ່ນພະເຈົ້າເປັນຜູ້ບັນເລງດ້ວຍ ເກົ້າທ່າ ".

ພະຣາຊີນີ ກີລິຊູຊີ ຣີບໄປພົບສັດທາ ສູຣະທັນທີ ແລະ ບອກໃຫ້ຢຸດທຳລາຍ ອານາຈັກຂອງພະນາງ.

" ດູລາເຈົ້າ ສັດທາ ສູຣະ ເອີຍ ! ຟັງເຮົາພະອົງ ນາງນີ້ກ່ອນ. ເຮົາພະອົງນາງຈະສົມລົດກັບພະອົງເຈົ້າ ເພື່ອຈະ ກອບກູ້ເອົາໄພຟ້າຂອງເຮົາພະນາງ. ແຕ່ວ່າພະອົງເຈົ້າຕ້ອງແກ້ບັນຫາຂອງເຮົາ ພະອົງນາງ ສາກ່ອນ ກ່ອນທີ່ຈະຈັດພິທີສົມລົດກັນ".

ສີດທາ ສຸຣະ ຟັງບັນຫາຕ່າງໆ ທີ່ພະນາງເຈົ້າຕັ້ງຂຶ້ນ ດ້ວຍຄວາມພິນິດພິຈາລະນາ ແລ້ວກໍ່ໃຫ້ຄຳສັນຍາວ່າ ຈະແກ້ໃຫ້ໄດ້ພອນບາດໂລດ. ບັນຫາຂຸດນ້ຳສາງຄູ່ນັ້ນ ເຂົາເຮັດໃຫ້ໃນພິບຕາ ດຽວອັນເຮັດໃຫ້ພະນາງ ຣາຊິນີ ຕື່ນຕະຫນົກຫມົດ. ນອກນັ້ນສີດທາ ສຸຣະ ຍັງແກ້ບັນຫາອື່ນໆ ໄດ້ຢ່າງງ່າຍດາຍດ້ວຍເຊັ່ນກັນ.ເຂົາ ຍັງແກ້ ປິດສະຫນາຂອງຄຳເວົ້າຕ່າງໆທີ່ໃຊ້ຢູ່ໃນບັນຫາເຫລົ່ານັ້ນດ້ວຍເຊັ່ນ : ໄກ່ທີ່ພະນາງ ຣາຊິນີ ຍົກມານັ້ນ ແປວ່າ ແມ່ນຄອງໃຫຍ່ ເຊິ່ງມີຂາຕັ້ງສີ່ຂາ. ກອງຫມາຍເຖິງວັງເສບ ຄາມິລານ - ແລະ ຕົ້ນກໍ່ ຫມາຍເຖິງ ເຄື່ອງເສບໃນວັງ ຄາມິລານ.ຣຳ ຄຳຫມາກນັ້ນ ຫມາຍເຖິງຫມອກຂອງທະຫານເມືອງ ກັດດີ ເຊິ່ງມາຟ້ອນ ເວລາບັນເລງວັງເສບ ແຫ່ແຫນພະຣາຊິນີ ຂຶ້ນສູ່ຈອມພູ ເຄລູດ. ພະເຈົ້າມີເກົ້າທ່ານັ້ນ ຫມາຍເຖິງນັກຟ້ອນເກົ້າຄົນທີ່ ຫລິ້ນດົນຕີ ໄດ້ເກົ້າເຄື່ອງໃນວັງເສບ ຄາມິລານ.

ພາຍຫລັງທີ່ ສີດທາ ສຸຣະ ແກ້ບັນຫາໄດ້ຫມົດແລ້ວ ທະຫານຂອງ ພະນາງຣາຊິນີ ເກົ້າຄົນກໍ່ເລີ່ມຂົນເມືອສູ່ນ້ຳສາງຄູ່ດັ່ງ ກ່າວແລະ ພາກັນເສບໄປພ້ອມ. ອີກທະຫານຜູ້ຫນຶ່ງປັ້ນຮູບພະນາງ ຣາຊິນີ ໃຫ້ເຫມືອນຕົວແທ້ພະນາງ. ເມື່ອພວກເຂົາຂົນເມືອຮອດ ນ້ຳສາງແລ້ວ ພວກເຂົາກໍ່ເລີຍເອົາຮູບປັ້ນນັ້ນ ປະໄວ້ພື້ນບໍ່ຫນຶ່ງ.ຈາກນັ້ນແລ້ວ ພວກເຂົາກໍ່ພາກັນຮ້ອງຂຶ້ນວ່າ :

" ຊ່ອຍແດ່ ຊ່ອຍແດ່ ພະນາງເຈົ້າຣາຊິນີຂອງພວກ ເຮົາຕົກລົງໄປນ້ຳສາງແລ້ວ. ເມື່ອໄດ້ຍິນສຽງຮ້ອງຂໍຄວາມຊ່ອຍ - ເຫລືອດັ່ງກ່າວນັ້ນແລ້ວ ທ້າວ ສີດທາ ສຸຣະ ກໍ່ຮີບລົງຂົນເມືອສູ່ແປ

ພູໂດຍບໍ່ຄິດໜ້າຄິດຫລັງຫຍັງ ແລ້ວກໍໂດດລົງໄປນ້ຳສາງເພື່ອ ຈະ
ຊອຍເອົາພະນາງນັ້ນຂຶ້ນມາ. ເມື່ອທະຫານເຫັນສັດທາ ສູຣະ ຕົກ
ລົງໄປສູ່ພື້ນນ້ຳສາງນັ້ນແລ້ວເຂົາກໍເລີຍໂຍນກ້ອນຫີນລົງໄປທັບ ສັດ
ທາ ສູຣະ ຕາຍຄາບ່ອນ. ຄຳສາບຂອງພູເປັນພໍ່ຂອງເຂົາຮູ້ສຶກວ່າ
ເຂັດຢ້ຳອີຫລີ ແລະ ກໍກາຍມາເປັນຄວາມຈິງ. ສັດທາ ສູຣະ ຖືກ
ຂ້າຕາຍດ້ວຍກົນອຸບາຍ ມາຣອດຊຸ່ມນີ້ ເມື່ອມີພູໄຟ ເຄລູດລະເບີດ
ຂຶ້ນເທື່ອໃດ ປະຊາຊົນກໍພາກັນເວົ້າວ່າ ແມ່ນ ສັດທາ ສູຣະ ທຳ
ການແກແຄ້ນປະຊາຊົນ ທີ່ ໂກດຄືຣ ແລະ ບໍ່ລືເວນອ້ອນຣອບ.

ນິທານເລື່ອງນີ້ ໄດ້ກໍ່ໃຫ້ເກີດມີຈິນຕະນາການຂອງການຟ້ອນ
ເຊື້ອງຮູ້ກັນໃນຊື່ວ່າ ຣີປັກ ຕູລູງ ຄາກູງ.



# ໂຄລິງລຸມະເນົາ

ໂດຍ : ມາເກັສ ມາດິເອິສ

ແຕ່ກີ້ແຕ່ກ່ອນ ນະທີ່ແຫ່ງໃດແຫ່ງໜຶ່ງຂອງປ່າໃຫຍ່ດົງ ດິບແຫ່ງກາລີ ມັນຕັນ ຍັງມີເຈົ້າບ້ານຜູ້ເກັ່ງກ້າຜູ້ໜຶ່ງຊື່ວ່າ ເປີຖູງ ທ່ານ ມີພັນລະຍາ ຊື່ວ່າ ກາຢັງ ຍັນກັກ ແລະ ບຸດຊາຍຜູ້ໜຶ່ງ ຊື່ ໂຄລິງ ລຸ່ມະເນົາ. ໄດ້ນານປີມາແລ້ວ ທີ່ເປີຖູງໄດ້ນຳພາປະ ຊາຊົນພາຍໃນບ້ານຂອງຕົນໃຫ້ມີຊີວິດຢູ່ຢ່າງສຸກຊຸ່ມກຸ່ມເຢັນສະຫງົບມາ ທ່ານໄດ້ທຳການປາບປາມພວກສັດຕູ ທີ່ຜື່ອງມາຢຶດຄອງບ້ານຂອງທ່ານ ແລະ ທຸກໆເທື່ອ ເມື່ອມີເຫດການຕໍ່ສູ້ກັນເກີດຂຶ້ນ ທ່ານ ກໍເປັນຜູ້ຊະນະສະເໝີ ເພາະວ່າທ່ານເປັນຜູ້ທີ່ມີເວດມົນ ແລະ ອາຄົມອັນເລີດລ້ຳ. ເວດມົນນີ້ ທ່ານໄດ້ມາດ້ວຍການຈຳສິນພາວັນນາເປັນເວລາ 40 ວັນ ແລະ ທ່ານກໍໄດ້ໃຊ້ມັນ ເພື່ອປົກປ້ອງ ເອົາລູກບ້ານຂອງທ່ານໄວ້ຢ່າງປອດໄພ.

ເວລາຜ່ານພົ້ນໄປ ລູກຊາຍຂອງທ່ານ ໂຄລິງ ລຸ່ມະເນົາ ກໍໃຫຍ່ກ້າໜ້າບານຂຶ້ນມາ. ເຂົາມີຮູບຮ່າງໃຫຍ່ສູງ ແລະ ໜ້າຕາສະຫລາດສະຫລ່ຽວ. ຜູ້ເປັນແມ່ ໄດ້ພະຍາຍາມອົບຮົມ ບົ່ມເພາະໃຫ້ລູກຊາຍກາຍເປັນຄົນຮູ້ຜູ້ດີ ມີຄວາມສະຫລາດແຫລມຄົມ ເພື່ອໃຫ້ສາມາດສືບພາລະກິດຂອງພໍ່ ເພາະພໍ່ເອງ ກໍເຖົ້າແກ່ແລ້ວ ໃນ



ໃກ້ຝັ່ງໃບພວງ ບໍ່ຮູ້ວ່າຈະສາມາດຢູ່ໄປໄດ້ຮອດມື້ໃດ.

ມື້ໜຶ່ງ ຜູ້ເປັນພໍ່ໄດ້ເອີ້ນເອົາລູກມາລົມວ່າ : " ໂດລິງ ລູກຮັກຂອງພໍ່ ! ມາຮອດດຽວນີ້ ພໍ່ເຖົ້າແກ່ແມ່ນແລ້ວ ແລະ ອີກໜ່ອຍລູກກໍຈະສືບພາລະກິດນຳພາບ້ານຂອງພວກເຮົານີ້ແທນພໍ່. ພໍ່ຢາກໃຫ້ລູກຮຽນເອົາສາຕະສິນອາຄົມ ແລະ ເວດມົນກົນກະຖາ ນີ້ໄວ້ ເພື່ອຈະໄດ້ປາບສັດຕູທີ່ພ້ອງມາຮຸກຮານບ້ານຊ່ອງຂອງ ພວກເຮົາ ".

ຂະນະນັ້ນ ໂດລິງ ຍັງບໍ່ທັນຮູ້ເນື້ອຮູ້ຕົວ ແລະ ບໍ່ພ້ອມທີ່ ຈະ

ຮັບເອົາຄວາມເຫັນນີ້ຈາກພໍ່ຂອງຕົນ ກໍເລີຍເວົ້ານຳຜູ້ເປັນພໍ່ວ່າ :

" ພໍ່ທີ່ເຄົາລົບຂອງລູກ ລູກຍັງບໍ່ທັນພ້ອມທີ່ຈະຮັບພາລະກິດແທນພໍ່ໄດ້ເລີຍ ລູກຍັງນ້ອຍໂພດ ຄົງຈະຮຽນເອົາວິຊາອາຄົມຈາກພໍ່ບໍ່ໄດ້ດອກ ".

ເປີຖຸງ ເຂົ້າໃຈດີວ່າລູກຊາຍຂອງຕົນມີຄວາມຢ້ານ ບໍ່ກ້າຈະຮັບພາລະອັນໃຫ່ຍຫລວງນີ້ໄດ້ ກໍເລີຍເວົ້າກັບລູກວ່າ :

" ເບິ່ງຫັ້ນລູກ ! ອັນຮີບດ່ວນທີ່ສຸດ ແມ່ນລູກຕ້ອງຮີບ ເປັນຜູ້ໃຫ່ຍຂຶ້ນທັນທີຫາກພໍ່ເປັນຫຍັງໄປ ພໍ່ຕ້ອງການໃຫ້ລູກກາຍ ເປັນຜູ້ນຳພາຊາວບ້ານ ພວກເຮົາແທນພໍ່. ເປັນຜູ້ນຳພາ ຈະຕ້ອງເປັນຜູ້ໃຫ່ຍຈຶ່ງຈະເຮັດໄດ້. ລູກຈົ່ງໄປສູ່ຜູ້ ເຊດາຍັງ ໂລດ ນະທີ່ ນັ້ນລູກຈະຕ້ອງຈຳສິນພາວັນນາເປັນເວລາ 40 ວັນ ພ້ອມກັບອົດ ອາຫານດ້ວຍ. ເວລານັ້ນ ເຈົ້າອາຮັກຈະພໍໃຈນຳເຈົ້າ ແລະຈະມອບລິດເດດໃຫ້ເຈົ້າຄືກັນກັບທີ່ເພິ່ນມອບໃຫ້ພໍ່. ໄປສາ ລູກເຮີຍ ".

" ແຕ່ວ່າ ເມື່ອລູກມີລິດຂຶ້ນແລ້ວ ລູກກໍ່ບໍ່ຫອນສາມາດສູ້ຮົບຕົບຕີຜູ້ດຽວໄດ້ເຊັ່ນເກົ່າ . ລູກຍັງນ້ອຍໂພດ ແລະ ບໍ່ທັນມີບົດຮຽນ ລູກຕ້ອງການຈະມີຄູ່ ສູ້ຮົບຮ່ວມກັບລູກ ".

" ດີແລ້ວລູກເຮີຍ ລູກຈະມີເພື່ອນໃນມໍ່ໆນີ້ ".

ຕົກຄ່ຳຄືນນັ້ນ ເປີຖຸງ ໄດ້ຮຽກໂຮມຊາວບ້ານທັງຫມົດ ມາໂຮມແລ້ວທ່ານກໍເວົ້າຕໍ່ເຮົາເຈົ້າວ່າ :

" ພີ່ນ້ອງທີ່ຮັກທັງຫລາຍເຮີຍ ! ມາຮອດມື້ນີ້ອາຍຸສັງ ຂານຂອງຂ້ອຍກໍແກ່ເຕັມທີແລ້ວ ຂ້ອຍບໍ່ສາມາດຈະເປັນຜູ້ນຳພາ ແລະປົກປ້ອງພວກເຈົ້າຕໍ່ໄປໄດ້ອີກແລ້ວ. ຂ້ອຍຢາກໃຫ້ລູກຊາຍ ຂອງ

ຂ້ອຍ ໄຄລິງ ລຸ່ມະເນົາ ຮັບໜ້າທີ່ແທນຂ້ອຍ ແຕ່ວ່າ ມັນກໍ ຍັງນ້ອຍຢູ່ ບໍ່ສາມາດສູ້ຮົບຕົບຕີໄດ້ຜູ້ດຽວມັນຕ້ອງການເພື່ອນຮ່ວມນຳຜູ້ໜຶ່ງ ຂໍພວກພີ່ນ້ອງຈົ່ງເລືອກຊອຍ ວ່າໃຜສາມາດຢູ່ໃນຖານະ ນີ້ໄດ້ ".

ຂະນະນັ້ນ ມີຜູ້ເຖົ້າຜູ້ໜຶ່ງກ່າວຂຶ້ນ ພ້ອມທັງຍົກຊື່ຂອງຊາຍໜຸ່ມ ຫລາຍຄົນອອກມາ, ແຕ່ໃນທີ່ສຸດ ຜູ້ຄົນຕ່າງກໍ່ເຫັນພ້ອມກັນວ່າ ທ້າວ ໂກລິງ ຖູເຢາະ ມີຖານະເໝາະສົມກວ່າເພື່ນ. ຜ່ານຊີວິດໜຸ່ມຂອງເຂົາ ເຂົາມີບົດຮຽນດີພໍສົມຄວນໃນໄມ້ມວຍ ແລະການລົບທົບຈັບເສິກ. ຍິ່ງໄປກວ່ານັ້ນ ເຂົາຍັງເປັນຄົນໜຸ່ມທີ່ມີລັກສະນະທ່າທາງຂອງຄວາມເປັນຜູ້ດີ.

ແລງຂອງມື້ຕໍ່ມາ ເປີຖຸງ ໄດ້ຮຽກຊາວບ້ານມາໂຮມກັນ ອີກທີ່ໜ້າບ້ານຂອງເຂົາ ເພື່ອຈະປະກາດແຜນການໃຫ້ພວກເຂົາເຈົ້າໄດ້ຮູ້.

ມັນເປັນຕອນຫົວຄ່ຳທີ່ມືດສະຄາຍ ມີພະຈັນເຕັມດວງ ພ້ອມທັງໝູ່ດາວລະດາດຟ້າ. ຊາວບ້ານພາກັນຊື່ນຊົມຍິນດີ ມີການ ດື່ມການກິນກັນ ດ້ວຍຄວາມມ່ວນຊື່ນລື່ນເລີງ ແລະ ບາງຜ່ອງກໍພາກັນຂັບລຳຕໍ່ແຍ່ຍອກໄຍ້ກັນຕາມປະສາຊາວບ້ານຊາວເມືອງ. ເມື່ອ ທຸກສິ່ງທຸກຢ່າງຮຽບຮ້ອຍບໍລະບວນແລ້ວ ເປີຖຸງ ກໍ່ຍ່າງອອກມາປະກົດໂຕ ເພື່ອໂອ້ລົມກັບຊາວບ້ານ.

" ພີ່ນ້ອງປະຊາຊົນທີ່ຮັກຂອງຂ້ອຍ ມາບັດນີ້ ຂ້ອຍເຖົ້າ ແກ່ແມ່ຄິງ ແລ້ວແລະຂ້ອຍໄດ້ເລືອກເອົາລູກຊາຍຂອງຂ້ອຍ ທ້າວ ໄຄລິງ ລຸ່ມະເນົາ ໃຫ້ສືບໜໍ່ແທນແນວ ເປັນພະຍານນຳພາບ້ານ ຂອງ

ພວກເຮົາຕໍ່ໄປ " ເຂົາເວົ້າດ້ວຍນ້ຳສຽງຊາງ ແລະ ກັງ ວານ" ແຕ່ລູກຂອງຂ້ອຍ ຍັງນ້ອຍໂພດ ມັນຕ້ອງການມີເພື່ອນອີກຜູ້ ໜຶ່ງ ເພື່ອຕໍ່ສູ້ກັບສັດຕູຂອງພວກເຮົາ ໃນຈຳນວນຊາວໜຸ່ມພາຍໃນບ້ານ ຂອງພວກເຮົານີ້ ຂ້ອຍໄດ້ເລືອກເອົາທ້າວ ໂກລິງ ຕູຢາະ ເປັນ ເພື່ອນຂອງມັນ ". ປະຊາຊົນຕ່າງກໍງຽບ ຍໍຄໍຂຶ້ນ ແລະ ງ່ຽງ ຫູ ຟັງດ້ວຍຄວາມສົນໃຈ. " ຂໍໃຫ້ພວກພີ່ນ້ອງທຸກຄົນ ຈົ່ງໃຫ້ ຄວາມ ຮ່ວມມື ແລະ ຊ່ວຍເຫລືອພວກເຂົາໃນການຕ້ານທານຂ້າເສິກດ້ວຍ" ຈາກນັ້ນ ເປີລູງ ເລີຍບອກໃຫ້ລູກຊາຍ ຂອງເຂົາ ແລະ ໂກລິງ ຕູຢາະ ລຸກຂຶ້ນມາຢືນຢູ່ຕໍ່ໜ້າເວທີ.

" ພີ່ນ້ອງບ້ານຊ່ອງທີ່ຮັກທັງຫລາຍ ! ອ້າຍບ່າວສອງຄົນ ທີ່ ພວກເຈົ້າເຫັນຢູ່ນີ້ ແມ່ນຜູ້ນຳໃນອະນາຄົດຂອງພວກເຈົ້າ". ເວ ລານັ້ນ ແສງຕາທຸກດວງແນມຈ້ອງໄປຫາ ໂຄລິງ ລູມະເບົາ ແລະ ໂກລິງ ຕູຢາະ. ໂຄລິງ ລູມະເບົາ ເປັນຄົນໃຫຍ່ສູງ ແລະ ມີ ໜ້າຕາສະຫລາດກ້າແກ່ນ. ຂະນະນັ້ນ ໂຄລິງ ລູມະເບົາກໍຄ່ອຍໆ ມາຢືນຢູ່ຕໍ່ໜ້າຂອງຜູ້ເປັນບິດາຂອງຕົນ ພ້ອມທັງເວົ້າວ່າ :

" ພໍ່ທີ່ເຄົາລົບ ລູກຢາກມີສາຕະສິນອາຄົມ ຈຶ່ງຈະສົມເປັນ ຜູ້ປົກປ້ອງພີ່ນ້ອງບ້ານຊ່ອງຂອງເຮົາໄດ້ ".

" ດີຫລາຍລູກເອີຍ ຖ້າວ່າລູກຢາກໄດ້ເວດມົນກົນຄະຖາ ຂອງພໍ່ ລູກຈົ່ງຮຽນເອົາກັບປາກ ແລະ ຖ່ອງເອົາມັນໃຫ້ໄດ້ ທັງ ເວັນ ແລະ ຄືນ. ໃນເວລານັ້ນລູກຕ້ອງຖືສິນມາວັນນາ ອົດ ອາ ຫານ ບໍ່ເວົ້າຮ້າຍເວົ້າດ່າໃສ່ ແລະ ຕ້ອງປະພຶດຕົນເປັນທີ່ຮັກ ທຸມ ແກ່ຄົນທຸກຄົນ ".

ຈາກນັ້ນມາ ທ້າວ ໂຄລິງ ລຸ່ມະເນົາ ແລະ ທ້າວໂກລິງ ຖູ ເຢາະ ກໍພາກັນຮຽນເອົາວິຊາອາຄົມກັບປາກກັບໃຈ ພອມທັງ ໄດ ຈື່ມຖອງມັນຢູ່ ເພື່ອບໍ່ໃຫ້ລືມເປັນເວລາຫລາຍວັນ.ຫລາຍອາ ທິດ ຜ່ານໄປ ພວກເຂົາກໍເລີຍ ສາມາດຂົ້ນໃຈເອົາກະຖາຕ່າງໆ ນັ້ນ ໄດ້ ແລະ ກໍກາຍເປັນຜູ້ທີ່ມີລິດມີເດດກາກັ້ນ. ເປີດູງ ຜູ້ເປັນ ພໍ່ ພອມດວຍຊາວບານ ພາກັນຢາກຮູ້ວ່າສອງບາວທາວນັ້ນຈະມີ ລິດ ເດດເກົ່ງກາປານໃດ ຈຶ່ງພາກັນມາໂຮມຢູ່ຕໍ່ໜ້າເຮືອນຂອງ ເປີ ດູງ ເພື່ອຈະພິສູດເບິ່ງເຂົາ. ທາວ ໂຄລິງ ລຸ່ມະເນົາ ແລະທ້າວ ໂກລິງ ຕູເຢາະ ໄດເສດກະຖາຂົ້ນແລວຕົນໂຕຂອງເຂົາກໍໃຫຍກາ ກິດຜິດທຳມະດາທັນທີ. ເປີດູງ ແລະ ຊາວບານມີຄວາມພໍໃຈເປັນ ຢ່າງຍິ່ງ ເມື່ອໄດ້ເຫັນເຫດການກັບກູ້ກັບຕາ. ບັດນີ້ຊາວບານ ມີ ຄວາມອຸ່ນໃຈທີ່ໄດ້ມີສອງໜຸ່ມທາວທີ່ມີລິດເດດ ເປັນຜູ້ປົກປ້ອງເອົາ ພວກເຂົາ ຕານທານກັບສັດຕູ.

ແຕ່ທາວໂຄລິງ ລຸ່ມະເນົາ ຍັງບໍ່ສົມໃຈ ເຂົາຍັງຢາກຈະ ມີ ລິດເດດໃຫຍ່ກວ່ານັ້ນເພື່ອບໍ່ໃຫ້ສັດຕູສາມາດປາບແພ້ໄດ.ເມື່ອເຫັນ ດັ່ງນັ້ນ ຜູ້ເປັນພໍ່ ຈຶ່ງເວົ້າກັບລູກອີກວ່າ :

" ລູກຈົ່ງໄປພູ ເຊດາຢັງ ເພື່ອຈຳສິນພາວັນນາເປັນເວລາ 40 ວັນ ແລະ ຄືນ ແລວຟ້າແຫ່ງຫາກຈະບັນລະມີດລິດເດດອັນ ຫາ ໃຜປຽບບໍ່ໄດໃຫ້ແກເຈົ້າ ".

ບິນເສັ້ນທາງໄປສູ່ພູດັ່ງກ່າວ ໂຄລິງ ລຸ່ມະເນົາ ໄດພົບ ກັບ ໄພອັນຕະລາຍຫລາຍຢ່າງ. ຝູງຜີສາງນາງຮາຍ ງູງຽວ ເສືອສີງ ພາກັນມາກີດກວນເພື່ອຈະກີດກັ້ນທາວບໍ່ໃຫ້ໄປເຖິງທີ່ໝາຍແຕ່ ດວຍ



ວິຊາອາຄົມຂອງຕົນ ທ້າວກໍໄດ້ຜ່ານຜ່າອຸປະສັກເຫລົ່ານັ້ນຈົນໃນ ທີ່ສຸດກໍເຖິງຈຸດທີ່ໝາຍ. ເມື່ອມາຮອດພູດົງກ່າວນັ້ນແລ້ວ ໂຄລິງ ລູມະເນົາ ກໍເຫັນຖ້ຳທີ່ພໍ່ຂອງເຂົາເຄີຍບອກໄວ້. ທ້າວເຂົ້າໄປຂ້າງໃນຂອງຖ້ຳ ແລ້ວກໍພົບນາງສາວເປັນໝູ່ ຊຶ່ງລ້ວນແລ້ວແຕ່ແມ່ນຜູ້ງາມໆ ທັງນັ້ນ. ພວກນາງ ຕ່າງກໍຍິ້ມແຍ້ມ ແລະ ເຂົ້າມາ ກ້ຽວພາລາສີທ້າວ ແຕ່ທ້າວກໍຮູ້ທັນຄວັນວ່າ ນີ້ແມ່ນພວກຜີສາດຮ້າຍເຊິ່ງຕ້ອງເອົາຊະນະໃຫ້ໄດ້. ທ້າວຫລັບຕາລົງແລ້ວນັ່ງຕັ້ງໃຈພາວັນນາ. ເວລານັ້ນ ນາງສາວຜູ້ໜຶ່ງເຂົ້າມາເກຍກ່ອມສຳອອຍເພື່ອໃຫ້ ທ້າວຫລົງໄຫລ ແຕ່ທ້າວກໍເດັດດ່ຽວໜຽວແໜ້ນບໍ່ຫວັ່ນໄຫວໃນການຖືສິນ

ຜ້າວັນນາຂອງຕົນ. ດ້ວຍຄວາມໝັ້ນແນ່ ແລະ ສະລາບັນສິ່ງອັນແຮງກາຂອງຕົນ ໃນທີ່ສຸດທ້າວກໍສຳເລັດຕາມຄາດໝາຍ. ທ້າວກັບເມືອເຮືອນດ້ວຍຕົນໂດຍທຽວແຫງຜອມເຫລືອງຍ້ອນອົດອາຫານ ແຕ່ໃນຕາຂອງເຂົາແດງເຣື່ອງອັນສະແດງເຖິງຄວາມມີລິດເດດກ້າເກັ່ງ ຂອງທ້າວນັ້ນເອງ. ເປີຕູ ແລະ ພັນລະຍາຂອງທ່ານໄດ້ອອກໄປ ຮັບເອົາລູກເຂົ້າມາເຮືອນດ້ວຍຄວາມປິຕິຊຸ່ມຊື່ນ. ພ້ອມກັນນັ້ນພວກຊາວບ້ານກໍພາກັນມາຕ້ອນຮັບດ້ວຍຄວາມເບີກບານມ່ວນຊື່ນ.ແລະຈັດ ຫາເຄື່ອງກິນຂອງຢູ່ ເພື່ອການຊຸມແຊວ. ເມື່ອທຸກຢ່າງຮຽບຮ້ອຍ ແລ້ວຊາວບ້ານກໍພາກັນກິນ ພາກັນດື່ມ ພ້ອມທັງຂັບລຳ ແລະ ຟ້ອນ ເຊີ້ງໃສ່ກັນຢ່າງສະນຸກສະໜານ. ພາຍຫລັງມ່ວນຊື່ນເຕັມທີ່ແລ້ວ ເຄາະຮ້າຍກໍມາພານ. ຫລັງຈາກນັ້ນເຈັດວັນ ເປີຕູ ຜູ້ເປັນພໍ່ຂອງ ໂຄລິງ ລູມະເບົາ ກໍລົ້ມປ່ວຍກະທັນຫັນບໍ່ສາມາດໄປມາທາງໃດໄດ້. ມື້ໜຶ່ງຂະນະທີ່ທ່ານນອນຢຽດຢູ່ເທິງຕຽງ ແລະ ລູກຊາຍເປັນຜູ້ ເຝົ້າລຳຄ່ຳຄອຍຢູ່ ທ່ານເລີຍເວົ້າກັບລູກຊາຍດ້ວຍສຽງແຜບໆ ສັ່ນເຄືອວ່າ :

" ໂຄລິງ ລູມະເບົາ ລູກຮັກຂອງພໍ່ ! ພໍ່ກຳລັງຈະໄປຈາກລູກແລ້ວ ຂໍໃຫ້ລູກຈື່ຄຳພໍ່ເວົ້າໄວ້ໃຫ້ດີ. ຂໍໃຫ້ລູກຈົ່ງປົກປ້ອງ ເອົາຊາວບ້ານຊາວເມືອງ ແລະ ພື້ນແຜ່ນດິນຂອງພວກເຮົາໄວ້.ຈົ່ງລະມັດລະວັງຢ່າເພີ່ຕົວເປັນອັນຂາດເດີລູກເຮີຍ ".

" ເຈົ້າພໍ່ ! " ຜູ້ເປັນລູກຕອບດ້ວຍຄວາມຂົມຂື່ນທີ່ໃຈທີ່ ພໍ່ຈະຈາກໄປ " ລູກຈະຈົດຈຳຄຳສັ່ງຂອງພໍ່ໄວ້ໃຫ້ດີ ແລະ ຈະເຮັດທຸກສິ່ງທຸກຢ່າງ ເພື່ອປົກປ້ອງເອົາບ້ານຊ່ອງຂອງເຮົາໄປບົນ ຈາກ



24/VII
ຫ້າມຈຳໜ່າຍ

ເງື້ອມມືຂອງສັດຕູ. ລູກຈະບໍ່ຍອມໃຫ້ສັດຕູໂຕໃດມາຢຶດຄອງ ບ້ານຂອງພວກເຮົາ ແລະ ເຂັ່ນຂ້າຮາວີຊາວບ້ານພວກເຮົາໄດ ບັດນີ້ ພໍ່ຈຶ່ງສະຫງົບໃຈໄດ້ແລ້ວ ເພາະລູກຈະເປັນຜູ້ຮັບພາລະທັງຫມົດ. ພໍ່ຈະຕ້ອງມີຊີວິດຢູ່ຕໍ່ໄປ ແລະ ຈະຕອງຕາຍໃນໄວໆນີ້ ".

" ລູກເອີຍ ! ຫຍັບມາໃກ້ໆພໍ່ນີ້ດູ . ພາຍຫລັງພໍ່ສິ້ນພະ ຊົນໄປແລ້ວ ລູກຈົ່ງຮຽກບ້ານຂອງພວກເຮົາຕາມຊື່ຂອງພໍ່ເນີ ແລະ ເຮັດໃຫ້ບ້ານຂອງພວກເຮົາຫນ້າຢູ່ ແລະ ມີຄວາມສຸກທີ່ສຸດສຳ ລັບຊາວບ້ານ ".

ແສງຕາເວັນຄ່ອຍຄ່ຳລົງທຸກໆຍາມ ອາກາດກໍ່ຄ່ອຍມືດເຂົ້າມືດເຂົ້າ. ປະຊາຊົນຊາວບ້ານໃຜໆກໍ່ຮູ້ດີວ່າຍາມຈາກໄປຂອງ ເປີຄູງນັ້ນ ຫຍັບໃກ້ເຂົ້າມາ. ພວກເຂົາເຈົ້າມາເຕົ້າໂຮມກັນຢູ່ ຕໍ່ຫນ້າເຮືອນ ຂອງຜູ້ເປັນຫົວຫນ້າຂອງເຂົາ ແລະ ກ່ອນຕາເວັນຕົກດິນສິ້ນແສງ ເປີຄູງ ກໍ່ສິ້ນໃຈ. ຊາວບ້ານພາກັນຄົບງັນສົບຂອງຜູ້ເປັນ ຫົວຫນ້າຂອງເຂົາ ເຈັດມື້ເຈັດຄືນ. ແລະ ເມື່ອເຖິງຖອນເຈັດ ພວກເຂົາກໍ່ກອງຟອນຈູດສົບຂອງ ເປີຄູງຢູ່ມ້ງເຮືອນຂອງທ່ານເອງພອມກັນນັ້ນກໍ່ຕັ້ງຊື່ໃຫ້ບ້ານຂອງພວກເຂົາວ່າ : ບ້ານເປີຄູງ.

ຫລາຍມື້ຫລາຍວັນຕໍ່ມາ ພະຍາ ກາມັງ ແຫ່ງບ້ານ ລີຄອງໄດ້ຮູ້ຂ່າວວ່າ ພະຍາເປີຄູງ ສິ້ນພະຊົນໄປແລ້ວ. ເຂົາຍິ້ມອອກ ມາເພາະເຫັນເປັນໂອກາດດີທີ່ຈະຍົກໂຈມຕີບ້ານ ເປີຄູງ ໃຫ້ຮາບຄາບໄປສາ. ໃນໄລຍະທີ່ຜ່ານມາ ເຂົາບໍ່ເຄີຍເອົາຊະນະບ້ານອັນນີ້ ໄດຈັກເທື່ອ ຍອນພະຍາເປີຄູງ ມີວິຊາອາຄົມ ແລະ ລິດເດດເຫນືອເຂົາຫລາຍ. ເຂົາຄິດວ່າ : ມາບັດນີ້ ບ້ານແຫ່ງນີ້ບໍ່ມີຜູ້ປົກ ປ້ອງ

ແລ້ວ ແລະ ກໍຈະສາມາດເອົາຊະນະໄດ້ຢ່າງງ່າຍດາຍ ເຂົາໄດ້ສົ່ງ ນັກສືບຂອງເຂົາ ໄປສອດແນມບານ ເປີຊຽງ ສອງຄົນຄື ປະເນີແລະ ກັນດາ. ຂະນະນັ້ນ ທີ່ບານ ເປີຊຽງ ທາວ ໂຄລິງ ລຸມະເນົາ ກຳ ລົງແກ້ຄວາມຝັນໃຫ ໂກລິງ ຕູເຢາະຟັງ.

" ໂກລິງ ຕູເຢາະ ຮູບໍ່ວ່າຄືນນີ້ຂ້ອຍຝັນຫຍັງ ? ຂອຍຝັນ ວ່າ ມີຄົນສອງຄົນຈາກບານ ລິຄອງ ມາເຄື່ອນໄຫວສອດແນມ ພວກ ເຮົາ. ແປກປະຫລາດບໍ່ຮື ? "

" ໂຄລິງ ລຸມະເນົາເຮີຍ ! ອັນທີ່ແປກປະຫລາດນັ້ນ ແມ່ນ ພວກເຮົາທັງສອງຝັນຄືກັນ ".

" ຄັນຊັ້ນ ມັນບໍ່ແມ່ນພຽງແຕ່ຄວາມຝັນຊື່ງຕີ ມັນອາດຈະແມ່ນ ຄວາມຈິງກໍໄດ. ພວກເຮົາຄວນບອກໃຫ້ຄົນຂອງພວກເຮົາຮູ ເລື່ອງ ນີ້ໄວ ແຕ່ຕອງໄດ້ຮັກສາເປັນຄວາມລັບເດັດຂາດ. ຂອຍບໍ່ຢາກ ໃຫ ສັດຕູຮູເມື່ອຄິງວ່າ ພວກເຮົາໄດ້ຮູເຖິງແຜນຂອງພວກເຮົາ ".

ຄອນເວົ້າແລວ ໂຄລິງ ລຸມະເນົາ ກໍເຕົ້າໂຮມຄົນຫານ ຂອງ ຕົນມາ ເພື່ອປຶກສາ ແຜນການເອົາຊະນະແຜນຂອງສັດຕູ.

" ບັນດາຄົນຫານຂອງຂອຍເຮີຍ ຈົ່ງຈຳໄວ້ວ່າ ພວກເຮົາ ບໍ່ ທຳຮ້າຍ ສາຍສືບຂອງບານ ລິຄອງ ສອງຄົນນັ້ນເລີຍ. ພວກເຮົາ ພຽງແຕ່ຈັບຕົວເຂົາແລວສືບຖາມເຂົາເຖິງເລື່ອງທີ່ເຂົາສອດແນມ. ຖາວ່າພວກເຂົາຫາກປອງທຳຮາຍພວກເຮົາກ່ອນພວກເຮົາຕອງຕອບ ໂຕ ແຕ່ບໍ່ຕ້ອງເປັນຜູລົງມືກ່ອນເຂົ້າໃຈບໍ່ຄົນຫານ ".

ເມື່ອທຸກຄົນກັບຄືນໄປເຮືອນໃຜເຮືອນມັນແລວກໍເປັນເວລາ ພໍ ດີ ທີ່ນັກສືບສອງຄົນນັ້ນເຂົ້າມາບໍລິເວນເຮືອນຂອງທາວ ໂຄລິງ ລຸ

ມະເນົາ. ພວກເຂົາເຫັນຜູ້ຄົນລົມກັນອ້ອມແອ້ມ ແຕ່ບໍ່ໄດ້ຍິນ ຖ້ອຍຄວາມຫຍັງເລີຍ ພວກນັກສືບຄິດວ່າເພິ່ນປຶກສາກັນເລື່ອງຈະເຮັດບຸນສິນກິນທານຊື່ໆ ຈຶ່ງບໍ່ຈຳເປັນເອົາໃຈໃສ່ອີກປະການໜຶ່ງກໍພໍດີ ເປັນເວລາເດິກຄວາມຫິວນອນກໍມາບັງຄັບໃຫ້ພວກເຂົາຊອກຫາທີ່ຊຸ້ມ ຫີວນອນ. ຍອນຄວາມອິດເມື່ອຍແດ່ ເມື່ອພວກເຂົາພົບທີ່ຊຸ້ມຫີວນອນ ຢູ່ເລົ້າເຂົ້າແຫ່ງໜຶ່ງແລ້ວເຂົາກໍນອນຫລັບສະບາຍຈົນຮອດມື້ໃຫມ່ແດດເຄິ່ງຟ້າກໍບໍ່ຕື່ນ ແລະ ຈົນໃນທີ່ສຸດພວກຄົນທານທີ່ໄປກວດກາສາລະເວກໍເລີຍພໍ້ ກໍເລີຍຈັບໂຕສົ່ງມາຫາທ້າວ ໂຄລິງ ລຸ່ມະເນົາ.

ພວກນັກສືບສອງຄົນນັ້ນ ມີຄວາມຢ້ານກົວຈົນອົກສັ່ນ ຂວັນຫາຍພວກເຂົາຫວັງວອນຂໍໃຫ້ ໂຄລິງ ລຸ່ມະເນົາໄວ້ຊີວິດແກ່ເຂົາ. ທ້າວໂຄລິງ ລຸ່ມະເນົາ ເວົ້າກັບພວກເຂົາວ່າ :

" ພວກສູ່ມາຊອດແນມແມ່ນບໍ່ ? ກູກໍບໍ່ຂ້າບໍ່ຕາຍຫຍັງສູ່ ດອກແຕ່ກູຕອງກັກກູຕົວສູ່ໄວ້ ຈົນກວ່ານາຍສູ່ຈະມາຊອກຫາສູ່. ຈາກນັ້ນພວກເຂົາ ຈະໄດ້ຮູ້ວ່າ ແມ່ນໃຜຈະແພ້ ແມ່ນໃຜຈະເສຍ ".

ທີ່ ບ້ານ ລິຄອງ ພະຍາ ກະມັງ ຮູ້ສຶກກາວໂກດທີ່ສຸດ ເພາະຈົນປານນີ້ຄົນຂອງຕົນ ຜູ້ໄປສືບຂ່າວ ຍັງບໍ່ທັນເຫັນຫນ້າມາລາຍງານເວລາ ໄດ້ຜ່ານພົ້ນໄປ ສອງອາທິດແລ້ວ ແຕ່ນັກສືບທັງສອງຍັງບໍ່ທັນປະກົດຮ່ອງຮອຍຫຍັງເລີຍ. ພະຍາ ກະມັງ ເຂົ້າໃຈສະຖານະການດີ ແນວໃດ ເຂົາກໍຕ້ອງໄປທີ່ບ້ານ ເປີຊູງ ເພື່ອຈະໂຈມຕີແລະ ປົດປ່ອຍ ຄົນທັງສອງຂອງຕົນໃຫ້ໄດ້. ເຂົາໄດ້ກຽມຄົນກ້າຄົນຫານ ໄວ້ແລະ ກຽມຈະເປີດສາກການໂຈມຕີ ບ້ານເປີຊູງ ໃຫ້ຮາບຄາບ.

ຂະນະນັ້ນທີ່ບ້ານ ເປີຊູງ ທ້າວ ໂຄລິງ ລຸ່ມະເນົາ ໄດ້ເຕົ້າ

ໂຮມຊາວບ້ານທຸກຄົນ ແລ້ວກໍ່ປະກາດເຕືອນວ່າ :

" ຊາວບານຄົນຫານພວກເຮົາທຸກຄົນ ພະຍາ ກະມັງ ຈາກບ້ານ ລິຄອງ ໄດ້ນຳລີພົນຂອງເຂົາພ້ອມດວຍອາວຸດຊຸດແສງເຕັມ ມີມາເພື່ອຈະເຂັ່ນຂ້າຣາວີພວກເຮົາ. ຢ່າພາກັນຢ້ານກົວເລີຍ ໂກລິງຕູເປາະ ແລະ ຂອຍເອງຈະຢືນຢູ່ແຖວໜ້າເພື່ອຕໍ່ສູ້ປົກປ້ອງ ພວກເຈົ້າ. ຂໍພຽງແຕ່ ໃຫ້ພວກເຈົ້າກຽມອາວຸດຊຸດແສງໄວ້,ແລວ ຂອຍ



ຈະຈົ່ມ ກະຖາໃສ່ ເພື່ອໃຫ້ມັນເຂັດຢາ້ ແລະ ນືລຶດເດດອັ້ນ. ແຕ່ຕອງຈື່ໄວວ່າ : ເຮົາຈະບໍ່ໂຈມຕີພວກເຂົາກ່ອນເປັນເດັດຂາດ ຖາບໍ່ດັ່ງນັ້ນ ອາວຸດຂອງພວກເຮົາຈະຫລຸຍມືນ. ສິ່ງທີ່ພວກເຮົາຈະເຮັດແມ່ນປອງກັນບໍ່ໃຫ້ສັດຕູເຂົ້າມາໃນບ້ານພວກເຮົາໄດ້.ພວກເຈົ້າເຂົ້າໃຈບໍ່? ດີຫລາຍຈົ່ງກຽມຕົວ ແລະ ກັບຄືນໄປເຮືອນໃຜເຮືອນມັນ".

ຫລັງຈາກນັ້ນ ໂຄລິງ ລຸ່ມະເນົາ ແລະ ໂກລິງ ຕູເຢາະ ກໍພາກັນສະມາທິພາວັນນາໄຫວພະໄຫວດູ ເພື່ອໂຮມພະລັງທີ່ຕົນມີ. ເຂົາໄດ້ຂີດວົງມົນໄວຫລາຍວົງເອົາປະຊາຊົນຄົນທາງເຂົ້າໄວໃນນັ້ນແລວ ກໍເສດມົນໃສ່ ຜູ້ທີ່ຢູ່ໃນວົງນັ້ນຈະໄດ້ຮັບການຄຸ້ມກັນດວຍ ມົນກະຖາ ແລະ ຈະມີພະລັງເຫນືອກວ່າສັດຕູ. ສ່ວນຜູ້ທີ່ຢູ່ນອກ ວົງນັ້ນ ຈະບໍ່ສາມາດເຮັດຫຍັງໃຫ້ຜູ້ຢູ່ໃນວົງນັ້ນໄດ ແລະ ຈະຕອງອອນເພຍຂາດກຳລັງວັງຊາ ທີ່ຈະຕໍ່ສູ້.

ຄວາມມືດດຳຫຍັບເຂົ້າມາ ເຮືອນຫຼາຍຫລັງຕອງໄດ້ອັດ ປະຕູແຈບລີບ ຝູງປະຊາຊົນຊາວບ້ານພອມທັງຜູ້ເລັກເດັກແດງໄປ ເຕົ້າໂຮມກັນຢູ່ໃນວົງຫນຶ່ງສ່ວນ ຄົນທານຖືກແບງອອກເປັນສອງຫມວດ ຄືຫມວດ ໂຄລິງ ລຸ່ມະເນົາ ແລະ ຫມວດຂອງໂກລິງ ຕູເຢາະ. ຂະນະນັ້ນ. ພະຍາ ກະນັງ ພອມດວຍລູກນອງຂອງເຂົາພາກັນເດີນທັບເຂົ້າມາ. ເຂົາໄດ້ຢຸດຢູ່ຕໍ່ຫນາປະຕູເຂົ້າບ້ານ ເປີດງ ແລວກໍ ຮອງໃສ່ ທາວ ໂຄລິງ ລຸ່ມະເນົາວ່າ :

" ໂຄລິງ ລຸ່ມະເນົາ ! ຖາວ່າມຶງຫາກເກັ່ງແທ້ຈົ່ງອອກ ມາລອງສີມືກັນເທີ້ນ ແລວມຶງຈະຮູ້ວ່າແມ່ນໃຜໃຫຍ່ກວ່າກັນ ".

ທາວ ໂຄລິງ ລຸ່ມະເນົາ ຍົກມືໃຫ້ສັນຍານແກ່ທະຫານ ທານ

ຂອງຕົນບໍ່ໃຫ້ບຸກໂຈມຕີສັດຕູ. ພະຍາ ກະມັງ ໃຈຮ້ອນຂຶ້ນວູ່ງບໍ່ ສາມາດ ອົດກັ້ນຄວາມກະຫາຍສົງຄາມຂອງເຂົາໄດໃນທີ່ສຸດເຂົາໄດນຳກຳລັງຂອງເຂົາ ພຸ່ງເຂົ້າບຸກໂຈມຕີພວກ ເປີຽງ. ສ່ວນພວກ ເປີຽງ ກໍ່ພຽງແຕ່ປອງກັນຕົວທີ່ນັ້ນບໍ່ໄດມີແຜນຕາວໂຈມຕີ ແຕ່ຢ່າງ ໃດເລີຍ. ແຕ່ສິ່ງທີ່ຫນາປະຫລາດກໍຄື ພວກຂອງເປີຽງ ບໍ່ມີໃຜລົ້ມຕາຍ ແລະ ບາດເຈັບເລີຍ ສ່ວນພວກ ລີຄອງນັ້ນ ບາດເຈັບ ແລະ ລົ້ມຕາຍຢ່າງຫລວງຫລາຍ.

" ພະຍາ ກະມັງເຮີຍ ເປັນຫຍັງບໍ່ຍອມສາ ເບິ່ງຄົນ ຂອງທ່ານທັ້ນແມ່ ລົ້ມຕາຍຫລາຍແລວ ທ່ານບໍ່ຄິດສົງສານເຂົາແດ່ຫວາ?" ໂຄລິງ ລຸ່ມະເນົາ ຮອງໃສ່ພະຍາ ກະມັງ ເພື່ອພະຍາຍາມຢຸດຕີສົງຄາມ ແຕ່ພະຍາ ກະມັງບໍ່ຟັງ ເຂົາຍິ່ງເລືອດຂຶ້ນຫນາໂມໂຫຂຶ້ນ ທັວທັນທີ.

" ບໍ່ມີທາງທີ່ກູຈະຍອມມຶງດອກ ກູຈະຕອງແພ້ ແລະຂ້າ ມຶງໃຫ້ໄດ ໂຄລິງ ລຸ່ມະເນົາເຮີຍ " ຄອນເວົ້າແລວເຂົາກໍສັ່ງໃຫ້ ກຳລັງຂອງເຂົາບຸກຕີອີກທັນທີ ແຕ່ທັບໃດນັ້ນ ກະມັງ ກໍ່ຕອງກະດາກໃຈເພາະວ່າ ໂຄລິງ ລຸ່ມະເນົາ ຍັງເສີຍເມີຍ ບໍ່ໄດຮ້ອນອົກຮອນ ໃຈວ່າຈະສູ້ແຕ່ຢ່າງໃດ. ພະຍາຈຶ່ງຊວດຮູ້ເມື່ອວ່າ ສັດຕູຂອງເຂົາມີລິດເດດເຫນືອກວ່າຕົນ ຊຶ່ງຕົນບໍ່ສາມາດປາບແພ້ມັນໄດ້.

ຂະນະນັ້ນ ທະກາທະຫານຂອງເຂົາມີຄວາມຢານກົວບໍ່ກ້າຈະສູ້ ເພາະຮູ້ວ່າຖາສູ້ໄປແນວໃດກໍ່ຕອງຕາຍແນ່ນອນ.

" ພໍ່ພະຍາເຮີຍ ຂໍຈົ່ງຢຸດຕິການສູ້ຮົບເຖີດ ຈົ່ງປ່ອຍໃຫ້ ພວກຂ້ານ້ອຍ ກັບໄປບ້ານເຮືອນຫາຄອບຄົວຫອນ.ເພາະພວກເຮົາບໍ່ ມີ



ທາງຈະຜາບແພ້ພວກເຂົາໄດ້ເລີຍ ".

ພະຍາກະມັງ ຊົງຄິດບຶດໜຶ່ງ ແລ້ວຈຶ່ງຍົກມືຂຶ້ນໃຫ້ສັນ ຍານຢຸດຕິການສູ້ຮົບ,ເພາະເຫັນທະຫານຂອງຕົນບາດເຈັບ ແລະລົ້ມຕາຍຫລາຍ.

" ໂຄລິງ ລູ່ມະເນົາ ໂກລິງ ຕູເຢາະ ຂໍໃຫ້ອະໄພ ຍະໂທດແກ່ຂ້ອຍເຖີດພວກເຈົ້າມີລິດເດດເໜືອກວ່າຂ້ອຍແລ້ວ ຈຶ່ງປ່ອຍ ໃຫ້ພວກຂ້ອຍກັບບ້ານຂອງພວກຂ້ອຍເທີ້ນ. ຂໍໃຫ້ພວກທ່ານເອົາ ໃຈໃສ່ມ້ຽນມັດຜູ້ຕາຍ ແລະ ເບິ່ງແຍງພວກບາດເຈັບໃຫ້ພວກຂ້ອຍແດ່.ຕັ້ງແຕ່ນີ້ຕໍ່ເມື່ອ ຂ້ອຍຈະບໍ່ມາກໍ່ກວນ ແລະ ບຸກຕີບ້ານ ພວກເຈົ້າອີກເລີຍ ".

ທ້າວ ໂຄລິງ ລູ່ມະເນົາ ໄດ້ຂໍໃຫ້ພໍ່ແມ່ພີ່ນ້ອງບ້ານຊ່ອງ ເອົາໃຈໃສ່ ມ້ຽນດາບອາບຝຸ່ນຜູ້ທີ່ຕາຍ ແລະ ເບິ່ງແຍງຜູ້ທີ່ຖືກບາດເຈັບຈາກບ້ານ ລິດອງ ຢ່າງດີ ຫລັງຈາກນັ້ນກໍ່ຮຽກໂຮມຊາວບ້ານ ເພື່ອປະກາດໄຊຊະນະເໜືອສັດຕູ ພ້ອມທັງປະກາດໃຫ້ຈັດການສະຫລອງໄຊເປັນການໃຫຍ່ ເພື່ອຂອບພະເດດພະຄຸນ ພະເຈົ້າຜູ້ເບິ່ງແຍງ.

ທຸກຄືນພາຍໃນບ້ານ ພາກັນຈັດບຸນສະຫລອງໄຊ ແລະທຸກ ຄົນກໍມີຄວາມເບີກບານມ່ວນຊື່ນ. ວັນຕໍ່ມາ ທ້າວໂຄລິງ ລູ່ມະ ເນົາໄດ້ເວົ້າກັບ ໂກລິງ ຕູເຢາະວ່າ :

" ໃຫ້ເຈົ້າເບິ່ງແຍງໄພ່ພົນໃຫ້ດີ ບໍ່ໃຫ້ສັດຕູມາຮຸກຮານ ໄດ້ເລີຍ "

ເມື່ອສັ່ງແລ້ວເຂົາກໍ່ສັ່ງລາເພື່ອນຮັກຂອງເຂົາ ເດີນມຸ່ງ ໜ້າໄປສູ່ ພູເຊດາຢັງ ບ່ອນສັກສິດ. ຕັ້ງແຕ່ນັ້ນມາ ກໍບໍ່ມີຜູ້ໃດພາຍ ໃນ



ບ້ານນັ້ນພົບທ້າວອີກເລີຍ ແຕ່ຜູ້ຄົນໃຜໆກໍວ່າເຂົາຍັງມີຊີວິດຢູ່ຈົນເທົ້າ
ປັດຈຸບັນ. ບ້ານ ເປີຊຸງ ກັບບ້ານ ລິຄອງ ກໍບໍ່ໄດ້ເປັນສັດຕູພິດກັນ
ອີກ ຍິ່ງໄປກວ່ານັ້ນ ຍັງເຕົ້າໂຮມເຂົ້າເປັນຫມູ່ດຽວ ແລະ ດຳ ລົງ
ຢູ່ຢ່າງມີຄວາມສຸກຊຸ່ມກຸ່ມເຢັນ. ພວກເຂົາເຈົ້າຕ່າງກໍເທີດທູນອິດ ທິ
ລິດ ແລະ ຄວາມດີຄວາມຊອບຂອງທ້າວ ໂຄລິງ ລູ່ມະເນົາພອມທັງ
ຖືວ່າເປັນ ບັນພະບູລຸດຜູ້ຍິ່ງໃຫ່ຍຂອງບ້ານ. ປັດຈຸບັນຜູ້ເຖົ້າຜູ້ແກ່ຍັງ
ເລົ່າພື້ນຂອງທ້າວ ໂຄລິງ ລູ່ມະເນົາ ສູ່ລູກສູ່ຫລານຟັງສືບຕໍ່ໄປ.

# ເວັນທະຣາວະສີ

## ນົກສະຫວັນທີ່ໄຮ້ຄວາມສຸກ

● ໂດຍ : ມາເຣຍ ແອັນວາຍຣ໌

ແຕ່ກີ້ແຕ່ກ່ອນ ຍັງມີສະກຸນາຂົນສີເຂື້ອງສອງຜົວເມຍ ດຳລົງຢູ່ດ້ວຍກັນ ຢ່າງມີຄວາມສຸກ ຕາມພຸ່ມໄມ້ຕ່າງໆ ໃນປ່າແຫ່ງໜຶ່ງທີ່ເຂດແຄວນ ແຄນ ອິຣຽນ ໄຊຍາ ວາດດຳລົງຢູ່ຂອງເຂົານົກສອງຕົວ ນີ້ເປັນວິທີໜຶ່ງວິທີດຽວ ທີ່ອຳນວຍໃຫ້ພວກເຂົາສາມາດຫລົບຫລີກເອົາໂຕລອດສາຍຫູສາຍຕາຂອງພວກນາຍພານ ທີ່ຊອມລ່າເອົາພວກ ສັດປ່າສັດປີກທັງຫລາຍ ໄປເປັນເຫຍື່ອໄດ້ຢ່າງງ່າຍດາຍ.

ມື້ໜຶ່ງນົກໂຕເມຍພາກັນເຣັດຮັງ ແລວໂຕເມຍກໍໄຂ່ອອກ ມາສອງໜ່ວຍເຊິ່ງນຳເອົາຄວາມປິຕິຊຸ່ມຊື່ນມາສູ່ພວກເຂົາທັງສອງເປັນຢ່າງດີ. ຜູ້ເປັນເມຍເລີ່ມຟັກໄຂ່ຢ່າງໃຈຈົດໃຈຈໍ່ ແລວຜູ້ເປັນຜົວ ກໍຂຽວອອກໄປຊອກຫາເຫຍື່ອອັນແຊບຊອຍມາສູ່ເມຍຮັກຂອງຕົນ ກິນ. ຄາວໜຶ່ງ ຂະນະທີ່ຜົວກຳລັງຈັບຄອນ ຄອຍເຝົ້າຜູ້ເປັນເມຍຢູ່ ນັ້ນເຂົາທັງສອງເລີຍໄດ້ຍິນສຽງຄົນເວົ້າຈາກັນມາຄ່ອຍໆ.

" ນົກນີ້ໄປໃສຫມົດ ບໍ່ເຫັນມັນບິນຜ່ານໜ້າຈັກໂຕເລີຍ ".

ຄອນເວົ້າແລ້ວ ສຽງຜູ້ທີສອງເລີຍດອດຂຶ້ນວ່າ :

" ຢ່າປາກຫລາຍ; ນົກມັນຈິແຕກຕື່ນ " ຈັກໜ່ອຍຈະບໍ່ ໄດ້ພົ້ນົກ ສີຂຽວຊ້ຳແຫລະ ! "

ພາຍຫລັງທີ່ນາຍພານສອງຄົນນັ້ນ ກາຍໄກໄປຈັກໜ່ອຍ ແລ້ວ



ນົກຕົວເມຍທີ່ຟັກໄຂ່ຢູ່ ເລີຍເວົ້າກັບຄູ່ເປັນຜົວວ່າ :

" ໂອ ! ນົກສີຂຽວວ່າເນ. ພວກມັນເຂົ້າຈະອອກ ເລືອກເອົາແຕ່ນົກສີຂຽວທີ່ມັນເຕັມມາ. ດີແລ້ວຜົວທີ່ຮັກ ! ແມ່ນບໍ່ ວ່າພວກເຮົາມີຄວາມສຸກ ພວກເຮົາບໍ່ຕົກຢູ່ໃນສະພາບຂອງນົກອື່ນ ຂຽວພວກນັ້ນເລີຍ ແລະ ຂົນພວກເຮົາກໍບໍ່ມີໃຜຕ້ອງການ. ບໍ່ມີໃຜເລີຍໃນໂລກທີ່ຢາກຈະລ່າພວກເຮົາເພື່ອເອົາຂົນ ". ຄັນເວົ້າແລ້ວ ນາງເມຍກໍ່ຮູ້ສຶກສະບາຍໃຈ ແລ້ວກໍຄ່ອຍໆຫລັບໄປກັບຮັງ. ຂະນະ ນັ້ນເຈົ້ານົກຜູ້ຜົວຍັງຂ້ອງໃຈ ແລະ ກໍຍັງບໍ່ເຫັນດ້ວຍນຳຄູ່ເປັນເມຍ.

" ໃນທີ່ສຸດຂົນຂອງກູກໍເປັນສີເຫຼືອງ ເຊິ່ງບໍ່ມີໃຜຕ້ອງການກູເລີຍ " ເຂົາຄິດແລ້ວຄິດອີກ ກ່ຽວກັບຂົນຂອງຕົນ ທີ່ມີສີເຫຼືອງ ແລະ ແຫລມົດ. ເຂົາຮູ້ສຶກເສົ້າໂສກຫົວໃຈ ຈົນໃນທີ່ສຸດເມື່ອນາງເມຍໄດ້ສັງເກດເຫັນ ລະແຄະລະໄຄ ຈຶ່ງຖາມຄູ່ເປັນຜົວວ່າ :

" ຜົວທີ່ຮັກຂອງນ້ອງ ! ດຽວນີ້ເປັນຫຍັງອ້າຍຈຶ່ງມີຄວາມກັງວົນໃຈແທ້ ? ບໍ່ແມ່ນອ້າຍຢູ່ບໍ່ສະບາຍບໍ່ ? "

" ບໍ່ ! ອ້າຍບໍ່ໄດ້ເຈັບເປັນຫຍັງດອກນ້ອງ ! ພຽງແຕ່ອ້າຍຮູ້ສຶກບໍ່ສະບາຍໃຈທີ່ວ່າ ເປັນຫຍັງພວກເຮົາຈຶ່ງມີຂົນຂີ້ຮ້າຍສີເຫຼືອງແບບນີ້ ເປັນຫຍັງພວກເຮົາຈຶ່ງບໍ່ມີຂົນງາມກວ່ານົກສີຂຽວພວກນັ້ນ?"

" ໂອ, ຢ່າເສຍໃຈເລີຍອ້າຍ ! ຂົນເຮົາແບບນີ້ແຫລະ ທີ່ປອດໄພກວ່າໝູ່ຢູ່ໃນປ່າແຫ່ງນີ້. ສ່ວນຂົນສີແຈ້ງສີແຈດ ບາດຫູບາດຕາເໝືອນນົກ ສີຂຽວພວກນັ້ນເປັນອັນຕະລາຍຫລາຍ. ຈົ່ງພໍໃຈແລະພູມໃຈມີຄວາມສຸກ ກັບຂົນທີ່ຮັກຂອງພວກເຮົາເທີ້ນ. ມັນທັງງາມ ທັງອົບອຸ່ນ ຍັງໄປກວ່ານັ້ນມັນໃຫ້ຄວາມປອດໄພ ".



ແຕ່ແນວໃດກໍດີ ນົກຕົວພໍ່ກໍຍັງບໍ່ຫາຍຄວາມລະແຄະລະໄດ ຢູ່ ເຂົາຮູ້ສຶກບໍ່ສະບາຍໃຈ ແລະ ຄິດຫາແຕ່ອິ່ນສີ້ຂຣາຍຂອງຕົນ ເຂົາ ຈົນມື້ໜຶ່ງ ເຂົາໄດ້ຕົກລົງປົງໃຈບິນໄປຕາມປ່າເຂົາລຳເນົາໄພຈາກ ຕົ້ນໄມ້ນີ້ຫາຕົ້ນໄມ້ນັ້ນ ໃນທີ່ສຸດເຂົາກໍພົບນົກສີຂຽວໂຕໜຶ່ງຈັບ ຢູ່ ຍອດໄມ້.

" ບໍ່ແມ່ນນົກສີຂຽວລ້ອນນີ້ ?" ເຂົາຖາມຕົນເອງແມ່ນ ແທ້ ເຂົາແມ່ນນົກສີຂຽວອີ່ຫລີ ກຳລັງຈັບຢູ່ຍອດໄມ້ລຳຮຽວຕາກປີກ ຕາກ

ຫາງ ອາບແສງຕາເວັນຍາມເຊົ້າ ອັນຍິ່ງເຮັດໃຫ້ສີສັນຂອງເຂົາສະຫງ່າ ແລະ ງົດງາມ ຫາທີ່ສຸດທີ່ຍັງບໍ່ໄດ້ເລີຍ. ເມື່ອເຫັນດັ່ງນັ້ນນົກສີເຫຼືອງ ຜູ້ອິດບໍ່ລົນທົນບໍ່ໄດ້ ຈຶ່ງບິນຂຶ້ນໄປຫານົກສີຂຽວ ພອນ ທັງຫວງຖາມເຂົາວ່າ :

" ສະບາຍດີ ທ່ານຜູ້ມີຂົນສີຂຽວ. ຂົນຂອງທ່ານຈຶ່ງແມ່ນ ງາມຫາອັນປຽບບໍ່ໄດ້ເລີຍ ".

" ໂອ ຂອບໃຈທ່ານຜູ້ມີຂົນສີເຫຼືອງ " ນົກສີຂຽວທີ່ ກຳລັງໄຈ້ປີກ ໄຈ້ຂົນຂອງຕົນຢູ່ດ້ວຍຄວາມລະມັດລະວັງເວົ້າຂຶ້ນ. ຫູ້ຫາງ ແລະ ສີສັນຂອງເຂົາ ປະກົດວ່າຍິ່ງງົດງາມຂຶ້ນກວ່າເກົ່າ.ແລວ ນົກ



ສີເຂືອງກໍເວົ້າຕໍ່ :

" ດູລາທ່ານຜູ້ມີຂົນສີຂຽວເຮີຍ ເປັນຫຍັງເຈົ້າຈຶ່ງມີຂົນສີຂຽວງາມເຫລື້ອມດີແທ້ ແລະ ເປັນຫຍັງຂ້ອຍຈຶ່ງມີຂົນສີຂີ້ຮ້າຍແບບນີ້ ?"

ນົກສີຂຽວຍິ້ມຫົວແລ້ວຕອບວ່າ :

" ໂອ ເຈົ້າຜູ້ໜ້າສົງສານເຮີຍ ! ຈົ່ງແມ່ນເຈົ້າບໍ່ມີ ຄວາມສຸກເລີຍ. ສຳຫລັບຂ້ອຍແລ້ວ ເຈົ້າຖົ່ມເຈົ້າຖານໃນປ່າແຫ່ງນີ້ ເພິ່ນໃຫ້ຄວາມອົບອຸ່ນ ແລ້ວກໍມີລະນຶດປ່ຽນຂົນຂອງຂ້ອຍໃຫ້ມີສີຂຽວງົດງາມດີແບບນີ້ແຫລະ " ນົກສີຂຽວ ທັງເວົ້າທັງພິປີກພິຫາງສະແດງຄວາມສະຫງ່າງາມຂອງຕົນໃຫ້ເບິ່ງ.

ນົກຂົນສີເຂືອງຄຶດຢູ່ຄາວໜຶ່ງ:

" ກູຕ້ອງໄປຫາເຈົ້າປ່າ ເພື່ອຂໍໃຫ້ເພິ່ນຊ່ອຍປ່ຽນສີຂອງຂົນກູໃຫ້ງາມທີ່ສຸດ " ຄອນຄຶດແລ້ວມັນເລີຍບິນໄປເຝົ້າເຈົ້າປ່າແຫ່ງນັ້ນ.

" ດູລາເຈົ້າປ່າຜູ້ຊົງເມດຕາສັດຕະວະໂລກທັງຫລາຍ ເປັນຫຍັງພະອົງຈຶ່ງດົນບັນດານໃຫ້ຂ້າພະບາດມີສີຂົນເຮີ້ຮ້າຍສັນນີ້ ກະລຸນາປ່ຽນໃຫ້ ຂ້າພະບາດມີຂົນສີຂຽວງາມຄືດັ່ງນົກສີຂຽວນັ້ນເທີ້ນ".

ເຈົ້າປ່າຊົງຄຶດຈັກໜ່ອຍ ແລ້ວກໍເວົ້າຂຶ້ນວ່າ :

" ເຮົາພະອົງສາມາດໂຜດໃຫ້ເຈົ້າກູມີສີຫຍັງກໍໄດ້ຕາມຄວາມຕ້ອງການທຸກປະການ ແຕ່ວ່າເຈົ້າກູຕ້ອງຄຶດໃຫ້ດີງສາກ່ອນ ເພາະເຈົ້າກູບໍ່ມີຄວາມສຸກເລີຍ ".

" ເປັນຫຍັງຈຶ່ງຈະບໍ່ມີຄວາມສຸກໄດ້ ເມື່ອຂ້ອຍໄດ້ຂົນ ງາມໆແລ້ວ ແນ່ນອນຂ້ອຍຕ້ອງມີຄວາມສຸກ ".

" ດີແລ້ວ ລົມຈຸ້ມ ບັດນີ້ບອກເຮົາພະອົງມາວ່າ ເຈົ້າກູ ຕ້ອງ

ການຂົນສີໃດ ? "

" ເອີ... ຂ້າພະບາດ ບໍ່ຮູ້ເລີຍວ່າ ຈະເອົາສີໃດດີ ".

" ຄັນຊັ້ນ ເຈົ້າມີເວລາຄິດມື້ໜຶ່ງ ແຕ່ຂໍບອກໄວ້ວ່າເຈົ້າມີສິດ



ເລືອກເອົາສີຂອງສິ່ງໃດສິ່ງໜຶ່ງສຳຫລັບຂົນສີໃໝ່ຂອງເຈົ້າກູ. ສີຂອງສິ່ງໃດສິ່ງໜຶ່ງທີ່ນັ້ນຈຳໄວ້ໃຫ້ດີ. ມື້ອື່ນ ເຈົ້າຕ້ອງມາບອກຂ້ອຍໂລດວ່າ ເຈົ້າເລືອກເອົາສີ ຂອງອັນໃດ ? "

ບັດນີ້ ນົກສີເຫລືອງພົບບັນຫາສັບສົນອີຫລີ ບໍ່ຮູ້ວ່າຈະເລືອກເອົາສີຂອງອັນໃດ. ສີຂອງຟ້າ ຫລື ຂອງນ້ຳທະເລ.ມັນບິນຈາກແຫ່ງ ນີ້ໄປແຫ່ງໜ້າ ແລະ ບິນໄປຢູ່ຈັ່ງຊັ້ນ ດ້ວຍຄວາມຫວັງວ່າຈະພົບ ສິ່ງໃດສິ່ງໜຶ່ງທີ່ງົດງາມ ແລະ ຖືກໃຈ.ແຕ່ກໍ່ບໍ່ພົບຫຍັງເລີຍ. ຕົກມື້ໃໝ່ມາ ເຂົາຍັງວຸ້ນວາຍໃຈເໝືອນເດີມ ເພາະບໍ່ສາມາດຈະ ພົບສິ່ງທີ່ຕົນມັກເລີຍ. ມັນບິນໄປຫາເຈົ້າປ່າແລ້ວກໍເວົ້າວ່າ :

" ໂອ ເຈົ້າປ່າຜູ້ຊົງອິດທິລິດເຣີຍ ຍົກໂທດໃຫ້ຜູ້ຂ້າສັດເທີ້ນຜູ້ຂ້າບໍ່ສາມາດພົບສິ່ງໃດສິ່ງໜຶ່ງທີ່ຕົນມັກເລີຍ ".

" ຄືນຊັ້ນເອົາແນວນີ້ເຮົາພະອົງຈະນັບຈົນເຖິງສິບ.ແລະໃນກຳນົດນີ້ ເຈົ້າຕ້ອງຫາຄຳຕອບໃຫ້ໄດ້ ເອົາບໍ່ ? " .

ເຈົ້າປ່າເລີ່ມນັບ ໜຶ່ງ : ...ສອງ... ສາມ... ຂະນະນັ້ນນົກສີເຫລືອງແນມໄປຮອບໆເລີຍແນັບເຫັນສິ່ງໃດສິ່ງໜຶ່ງທີ່ງົດງາມທີ່ສຸດປະກົດຢູ່ຕໍ່ໜ້າຕົນເອົາພໍໃຈ ແລະ ໃນໂລກນີ້ບໍ່ສາມາດ ຈະຫາອັນໃດງາມເໝືອນໄດ້ເລີຍ. ເຂົາບອກໃຫ້ເຈົ້າປ່າຢຸດນັບ ແລ້ວ ກໍບອກໃຫ້ເຈົ້າປ່າວ່າ ເຂົາພໍໃຈນຳສິ່ງນັ້ນ. ມັນເປັນຮຸ້ງກິ່ງອົງ ຟາກຟ້າມາຈູບກັບໂລກປະກອບສີສັນຫລາຍຊັ້ນຕ່າງກັນຢ່າງພິດສະດານ ຊຶ່ງແມ່ນຮຸ້ງກິນນ້ຳນັ້ນເອງ.

" ຂ້າພະບາດຂໍເອົາສີຂອງຮຸ້ງນີ້ " ໃນທີ່ສຸດນົກກໍເວົ້າຂຶ້ນ. ພະເຈົ້າພົງໄພແນມເບິ່ງຂອບຟ້າທີ່ຮຸ້ງກຳລັງເປັ່ງລັດສະມີແສງເຮືອງ





ເຮືອຂອງມັນຢູ່ຢ່າງໜ້າຕະການຕາ. ຈັກໜ່ອຍ ພະອົງທ່ານ ເລີຍຈັບນົກຍູ້ງມາແລວກໍເອົາມືລູບໆໂຕສີເຂັ້ອງຂອງມັນເລີຍເກີດເປັນ ສີແດງແລວກໍລູບຫົວຂອງມັນເກີດເປັນສີເຫລືອງ ແລະ ຂຽວ. ພະອົງເອົາມືລູບລົງໄປທີ່ຫາງຂອງມັນ **ຫາງກໍ່ເລີຍປົ່ງ**ຍາວອອກແລະກີ່ງຂີ້ງນັ້ງ ມີຫລາຍຊັ້ນພັນສີຢ່າງວິດງາມທີ່ສຸດເໝືອນດັ່ງຮຸ້ງກິນນ້ຳບໍ່ ພິດ. ຝ່າຍນົກສີເຂັ້ອງພືປີກພືຫາງອອກແບບທຳທ່າຈະບິນເຫັນວ່າທຸກສິ່ງທຸກຢ່າງວິດງາມ ແລະ ພິດແປກໄປຈາກເດີມ.

" ໂອ ຂ້າແຕ່ພະເຈົ້າແຫ່ງພົງໄພຜູ້ວິເສດເມື່ອຂ້າພະບາດປະ

ສິບຄວາມງາມ ອັນຫາສິ່ງປຽບປານໄດ້ຍາກຈັ່ງຊີ້ແລ້ວ ກໍໃຫ້ພະອົງ ທ່ານຕັ້ງຊື່ໃຫ່ມໃຫ້ຂ້າພະບາດແດ່ເຖີດ ". ແລ້ວພະເຈົ້າ ແຫ່ງຟົງໄພ ກໍເວົ້າຂຶ້ນວ່າ :





" ບັດນີ້ ເຈົ້າບໍ່ແມ່ນນົກສີເຂືອງອີກແລ້ວ ຊີໃຫ້ນຂອງເຈົ້າດີ" ແສນທະຣາວະສີ ພະຍານົກແຫ່ງສະຫວັນ ແລະ ເຈົ້າກໍເປັນນົກ ທີ່ງາມທີ່ສຸດໃນພິພົບນີ້. ແຕ່ກໍຕອງຈຳໄວ້. ຄວາມງາມຂອງເຈົ້າ ນັ້ນຈະເຮັດໃຫ້ເຈົ້າເປັນອັນຕະລາຍແລະບໍ່ມີຄວາມສຸກເລີຍ ຈົ່ງລະ ວັງໂຕໃຫ້ດີ ".

ບັດນີ້ນົກສີເຂືອງເລີຍກາຍມາເປັນພະຍານົກແສນທາວະສີ. ເຂົາຮູ້ສຶກພູມໃຈ ແລະ ມີຄວາມສຸກ. ເຂົາຮີບບິນໄປຫາເຮືອນ ຮັງຂອງຕົນທັນທີ.

" ເບິ່ງອາຍນີ້ແມ່ນອງທີ່ຮັກ " ເຂົາຮີບເວົ້າກັບເມຍຮັກຂອງເຂົາ " ເບິ່ງຂົນໃຫ່ມຂອງອາຍນີ້ແມ໋ " ເຂົາເວົ້າຂົ້ນດວຍ ຄວາມຊື່ນຊົມ ແຕ່ເມຍຮັກຂອງເຂົາກັບຕື່ນຕະຫນົກ.

ເຮີຍເຈົ້າ..! ເຈົ້າແມ່ນໃຜ ? ຢ່າມາໃກ້ຂອຍໄດ້ຈົ່ງ ອອກໄປ ". ທ່ານພະຍານົກແສນທະຣາວະສີຕົກໃຈທັນທີ. ເຂົາຄ່ອຍອະທິບາຍຊາໆເຖິງເລື່ອງລາວທີ່ເປັນມາສູ່ເມຍຮັກຂອງເຂົາຟັງ.

" ເບິ່ງອາຍຄັກໆແມ໋ ! ອາຍແມ່ນຜົວຂອງນອງນາ ອ້າຍໄດ້ຂໍໃຫ້ເຈົ້າແຫ່ງພົງໄພແປງຂົນຂອງອາຍໃຫ້ໃຫ່ມ ບັດນີ້ຂົນຂອງອາຍມີສີຮຸ້ງກົມບາ້ ນອງວ່າອາຍງາມບໍ່ ? "

ເມື່ອຮູ້ວ່ານົກຜູ້ຂົນໂຕນັ້ນແມ່ນຜົວຂອງຕົນນາງນົກສີເຂືອງ ຜູ້ເປັນເມຍ ກໍເລີຍຮອງໄຫ້ຂົ້ນດວຍຄວາມເສຍໃຈ ນາງເວົ້າກັບ ຜູ້ເປັນຜົວວ່າ :

" ໂອ ! ຈົ່ງແມ່ນເຈົ້າໂງ່ວ່ານໍ່ ອັນຂົນງາມຂອງເຈົ້າ ນັ້ນແຫລະ ຈະນຳເອົາຄວາມອັນຕະລາຍມາສູ່ພວກເຮົາ.ພວກພານ ທັງ





ຫຼາຍ ຈະພົບເຫັນຮັງຂອງພວກເຮົາງ່າຍດາຍອັນມັນເປັນໄພແກ່ລູກນ້ອຍຂອງພວກເຮົາ. ເຈົ້າຈົ່ງໜີໄປໄກໆເຖີ້ນ ແລະ ລໍຈົນກວ່າລູກຂອງເຮົາຈະໃຫຍ່ກາຍພາບານພ້ອມທັງບິນໄດດ້ວຍຕົນເອງແລ້ວ ຈົ່ງກັບມາໃໝ່ "

ທ່ານພະຍາແສນທະຣາວະສີ ຮູ້ສຶກໂສກເສົ້າທັນທີພ້ອມທັງຄິດ ກັບຕົນເອງວ່າ :

" ກູບໍ່ໄດ້ຄິດຮອດເລື່ອງນີ້ເລີຍ ".ຄອນເວົ້າແລ້ວນ້ຳຕາຂອງເຂົາກໍໄຫລອອກມາເບົ້າຕາເຂົາຈຳຕ້ອງບິນໜີຈາກຮັງປະລູກ ເມຍຂອງເຂົາໄປໄກແສນໄກ ແລະ ເລືອກຈັບຮຽວໄມ້ສູງງ ເພື່ອຫລີກຈາກອັນຕະລາຍ. ບັດນີ້ເຂົາຈົ່ງຮູ້ເມື່ອຄິດວ່າ ເຂົາໄດ້ຫຍັງແດ່ຈາກຄວາມງາມຂອງຂົນຂອງເຂົາ. ສິ່ງທີ່ເຂົາໄດ້ກໍຄືການເສຍອິດສະລະພາບ ແລະ ການພັດພາກຈາກຄອບຄົວທີ່ຮັກຂອງຕົນໄປ.ຄວາມງາມຈະມີຄວາມໝາຍຫຍັງ ຫາກເຂົາຈຳຕ້ອງຕົກຢູ່ສະພາບ ບໍ່ຮົ່ວພ້ອຍແລະຫງວມເຫງົາ ບັດນີ້ເຈົ້າແສນທະຣາວະສີງອຍຢູ່ປາຍປີດແຫ່ງຕົ້ນໄມ້ລຳສູງຫວນຄິດເຖິງເມື່ອວັນທີ່ເຂົາເປັນນົກຂົນເຂື່ອງທຳມະດາແຕ່ມີຄວາມສຸກດ້ວຍຄວາມເສົ້າໃຈ.

• • • • • • • • • •

# ຄວາມມະນີງາມ

● ໂດຍ : ສິຍານິ ທຸດໂຢະໂນໂຕະ

ຢູ່ເທິງເກາະນ້ອຍແຫ່ງໜຶ່ງຂອງປະເທດ ອິນໂດເນເຊຍ ຍັງມີບ້ານນ້ອຍໆ ບ້ານໜຶ່ງຕັ້ງຢູ່ຂ້າງງພູໄຟ. ຝູງຊາວບ້ານພາກັນ ດຳລົງຄົງຢູ່ຢ່າງສະຫງົບສຸກດ້ວຍການເຮັດໄຮ່ໄຖນາເພື່ອຫາລ້ຽງ ປາກລ້ຽງທ້ອງຂອງຕົນ. ກວານບ້ານດັ່ງກ່າວເປັນຄົນໜຸ່ມແໜນ ຊື່ວ່າ ບາຣຸດ ເຊິ່ງແປວ່າຜູ້ມີສາຍຕາດີ. ຊື່ດັ່ງກ່າວເໝາະກັບໂຕເຂົາ ດີເພາະເຂົາເປັນຄົນມີສາຍຕາທີ່ດີອີ່ຫລີ ແລະ ເປັນຜູ້ນຳທີ່ດີພາຍ ໃນບ້ານນັ້ນ. ຍິ່ງໄປກວ່ານັ້ນເຂົາບໍ່ແມ່ນຄົນທີ່ມີຕົ້ນກຳເນີດໃນໝູ່ ບ້ານນັ້ນເລີຍ ແຕ່ຊາວບ້ານທຸກຄົນໃຜໆກໍຍອມຮັບເຂົາ ແລະ ເຄົາລົບເຂົາ.

ບາຣຸດ ແທ້ຈິງແລ້ວກຳເນີດມາຈາກບ້ານຊາວຫາປາບ້ານໜຶ່ງໄກຈາກບ້ານດັ່ງກ່າວຫລາຍ. ຊາວບ້ານດັ່ງກ່າວໃຜໆກໍເປັນນັກ ດຳນ້ຳເກັ່ງໆທັງນັ້ນ. ເວລາທີ່ບາຣຸດ ຍັງຢູ່ໃນບ້ານຂອງເຂົາເຂົາ ມັກຈະໄປກັບພໍ່ ແລະ ພີ່ນ້ອງປ້ອງປາຍຂອງເຂົາທີ່ກາງທະເລເພື່ອຊອກຫາໄຂ່ມຸກ ໂດໂບ. ເຂົາສາມາດດຳລົງໄປໃນທະເລເລິກຈົນ ເຖິງແຫລ່ງຢູ່ຂອງກວງກີ້ໄຂ່ມຸກໄດ້. ພຽງແຕ່ໄຂ່ມຸກໜ່ວຍດຽວທີ່ເຂົາໄດ້ເຂົາກໍສາມາດຂາຍໄດ້ເງິນໄດ້ຄ່າຍອມມັນບໍ່ໜ້ອຍ.ຕາມ ປົກກະຕິແລ້ວ ຊາວບ້ານມັກຈະຂາຍໄຂ່ມຸກ ເພື່ອເອົາເງິນໄປຊື້ຫາ ສະໂລ່ງ



ໄຫມ່ມານຸງ.

ທາວ ບາຄູດ ພ້ອມດ້ວຍຫມູ່ກູອງຍັງເປັນນັກຫາປາເກົ່ງ ນຳດ້ວຍ. ພວກເຂົາພາກັນອອກທະເລດ້ວຍເຮືອລຳນ້ອຍໆ ແລະບາງເທື່ອເຂົາກໍພາກັນຄ້າງຄືນຢູ່ກາງທະເລຫລວງ. ໃນຂາກັບຈາກ ທະເລ ເຂົາກໍຢາກກັບດ້ວຍຖານະຂອງຜູ້ລາບຫມານສະເຫມີ. ພວກຜູ້ແສນາງສາວ ແລະ ເດັກນ້ອຍຕອງການຢາກຟັງສຽງຂັບຂອງ ເຂົາດັງມາແຕ່ໄກ ພ້ອມທັງກຽມນ້ຳກອງ " ຕີຟາ " ເພື່ອຕ້ອນຮັບເຂົາ ພວກເຂົາພາກັນກະຕືລືລົ້ນ ດີອົກດີໃຈເຫລືອທີ່ສຸດທີ່ຍັງບໍ່ໄດ້ເມື່ອເຫັນນັກຫາປາຫນຸ່ມຜູ້ນັ້ນກັບມາຮອດບ້ານຮອດເຮືອນອີກເທື່ອຫນຶ່ງ. ຫລັງ



ຈາກເຫດການສະຫລອງການກັບມານີ້ແລ້ວທຸກສິ່ງກໍສະຫງົບງຽບ ລົງຈົນກ່ວາ ຈະມີການອອກທະເລ ແລະ ການກັບມາຂອງພວກເຂົາອີກຕື່ມເທື່ອໜຶ່ງ ຫລື ຈະມີການມາຫຽບທ່າຂອງກຳປັ່ນບັນທຸກສິນຄ້າລຳໃຫຍ່ອັນມາຈາກເກາະໃຫຍ່ຂອງ ອິນໂດເນເຊຍຕາມປົກກະຕິ ແລ້ວເມື່ອມີກຳປັ່ນໃຫຍ່ມາຫຽບທ່າເທື່ອໃດຜູ້ຄົນມັກຈະຮອງເອີກອາກອອກມາແລ້ວໃຜໆກໍຣີບຟ້າວຟັ່ງມາເບິ່ງ. ບາງຄົນກໍປະຄາດປະໄຖ ປະຕາດຂາຍຂອງອອກມາເບິ່ງ. ຈຸເດັກນ້ອຍກໍພາກັນຢຸດການຫລິ້ນເພື່ອມາເບິ່ງມາຊົມ. ຜູ້ຄົນບໍ່ວ່າເຖົ້າແກ່ແມ່ຮາມນ້ອຍໜຸ່ມຊຸ່ມຮາມ ໃຜໆກໍຢາກຮູ້ຢາກເຫັນ ຢາກເບິ່ງຢາກຊົມກຳປັ່ນໃຫຍ່.

ຕາມປົກກະຕິແລ້ວ ຊາວແຄມທະເລເປັນຄົນທີ່ມີອາລົມຊື່ນບານ ແລະ ແຈ່ມໃສພວກເຂົາພາກັນຮ້ອງເພງ ແລະ ຟ້ອນເມື່ອພວກເຂົາດີໃຈ ພາກັນກິນດື່ມໃຫ້ເຕັມມັກ ເມື່ອມີແຂກຄົນມາຢາມບານ ຢາມເມືອງ.

ວັນນັ້ນ ພວກເຂົາໄດ້ກຽມອາຫານການກິນໄວ້ຢ່າງດີຄອຍ ຖ້າແຂກບ້ານ ທີ່ຈະມາຈາກກຳປັ່ນ . ແຂກຂອງທຸກເທື່ອເມື່ອຖືກ ເຊີນໃຫ້ຮັບປະທານອາຫານແລງນຳຊາວບານ ພວກເຂົາກໍຈະອຸທານອອກມາສະເໝີວ່າ : " ມັນກາຍຄາບເຂົ້າແລງທຳມະດາໄປແລ້ວອັນນີ້ມັນແມ່ນປາງບຸນຫລາຍກວ່າ ".

ມື້ນັ້ນ ທຸກຄົນໃຜໆກໍດື່ມ ແລະ ຮັບປະທານຕາມໃຈມັກຂອງໃຜລາວ ບາງພວກກໍຮ້ອງເພງ ຂັບລຳ ແລະ ຟ້ອນຢ່າງເບີກບານມ່ວນຊື່ນ ໄປຕາມຈັງຫວະຂອງສຽງກອງ. ການລົບງັນແກ່ຍາວໄປຈົນເຖິງທ່ຽງຄືນ ແຕ່ທ້າວ ບາຄູດ ບໍ່ໄດ້ມີໜ້າເຂົ້າຮ່ວມໃນງານນີ້ເລີຍເຂົາ

ມີຄວາມເສົ້າໃຈ ເພາະຄິດເຖິງ ໄນຢັງ ສາວພູເຂົາໄຟຝັນ. ເຂົາ ນັ່ງຢູ່ບ່ອນງຽບໃຕ້ແສງຈັນຖູ້ມແສງຕາໄປສູ່ບ້ານ ພູກິດ ປ່າຄິດ ຂອງ ໄນຢັງ ເຂົາປາຖະໜາໃຫ້ ໄນຢັງ ຄິດເຖິງເຂົານຳດວຍ. ສ່ວນ ນາງ ໄນຢັງເອງ ເຂົາກໍຄິດເຖິງ ບາຄຸດ ລີກັນ ແລະຄິດເຖິງບ້ານ ອ່າວທະເລຂອງ ບາຄຸດ ບ່ອນຊາວບ້ານລືບວັນ. ແຕ່ຄວາມຫິວ ນອນ ພາໃຫ້ນາງ ຕອງເຂົ້ານອນກ່ອນທີ່ແສງໄຟແຫ່ງຄວາມລືບວັນພາຍໃນ ບ້ານນັ້ນຈະມອດດັບລົງໄປ. ເຊົ້າມື້ໃຫ່ມມາ ນາງຍ່າງລົງມາ ແຄມ ທະເລ ເພື່ອຈະລົງອາບນ້ຳ ແຕ່ເດິກ. ຂະນະນັ້ນ ແສງໄຟຫລ້ອມ ເປັນເງົາວອບແວບ ຢູ່ໃນຄວາມມືດສະຫລົວແຄມຫາດຊາຍເຮັດ ໃຫ້ ນາງຮູ້ໂລດວ່າ ພໍ່ຂອງນາງກຳລັງດູດກອກ ວົມນຳວຽກຂອງເພິ່ນ ຢູ່ ຢ່າງບໍ່ວາງຕີນວາງມື ພໍ່ຂອງນາງເປັນປະຕິມາກອນ ສີມເກັ່ງ ເຊື່ອ ຂະນະນີ້ພອນຕຶກແຕ່ງປັບແປງຊ້ຳບາງຢ່າງໃຫ້ແກ່ຮູບປັ້ນ ຄວັດ ດວຍ



ຫີນຂອງທ່ານ. ຮູບດັ່ງກ່າວແມ່ນຄວາຍຂະໜາດໃຫຍ່ມີຮູບຊົງ ສວຍງາມເມື່ອ ໄນຢັງ ຜັດປ່ຽນສິ້ນອາບຮຽບຮ້ອຍແລ້ວນາງ ເລີຍຍ່າງເຂົ້າໄປຫາພໍ່. ເມື່ອເຫັນລູກຍ່າງມາຫາ ຜູ້ເປັນພໍ່ເລີຍເວົ້າກັບ ລູກວ່າ :

" ມັນເປັນຮູບປັ້ນທີ່ງາມທີ່ສຸດ ເທົ່າທີ່ພໍ່ເຄີຍເຮັດມາ " ນາງໄນຢັງ ຜູ້ເປັນລູກສາວຍິ້ມຫົວອອກມາດ້ວຍຄວາມພໍໃຈ. ນາງບໍ່ຈຳເປັນເວົ້າຫຍັງຫລາຍເພາະນາງ ແລະ ພໍ່ຕ່າງກໍເຂົ້າໃຈເຊິ່ງ ກັນແລະ ກັນດີ.

ຄືດັ່ງທີ່ເຄີຍເປັນມາ ເມື່ອນາງ ໄນຢັງ ບິດແປງເຂົ້າຢູ່ພໍ່ກໍມັກຈະດຶງ ເອົາຕັ່ງມານັ່ງຊົງຄິດຢູ່ໜ້າປ່ອງຢ້ຽມເຮືອນແນມເບິ່ງຄວາຍຫີນຂອງລາວ .

" ຂໍໃຫ້ຮູບປັ້ນຂອງກູນີ້ກາຍເກີດເປັນໂຕຈິງແທ້ແດ່ແມ້. ຈັ່ງແມ່ນມັນຈະໃຫຍ່ທຶດມຶດກຶດຫລຳດີ. ມັນຈະສະຫລາດ ແລະ ຊຳນານການດີ ມີຄຸນປະໂຫຍດ ແກ່ທຸກໆຜືນໄຮ່ ແລະ ທຸກໆຄົນໃນພິພົບນີ້"

ຄອນພໍ່ມິດຄຳນີ້ຈົບລົງຄາວໜຶ່ງລາວເລີຍເຫັນຂາ ຄວາຍຫີນຢຽດອອກຢ່ຳດິນກີບກັບເນືອດແຄ່ງເນືອດຂາໄປມາ.ແລ້ວມັນກໍ ຍົກສອງຂາໜ້າຂຶ້ນແລ່ນເປັນວົງແລ້ວກໍທະຫຍອງເຕາະຂຶ້ນອາກາດກາງຫາວ ທະຍານຫຍຽດຕົວໄປໃຕ້ທ້ອງຟ້າສີຄາມ.

" ມັນກໍເປັນໄປໄດ້ຫວ່າ ? " ເຖົ້າຫຳມະ ສະຫງົບຖາມຕົນເອງ " ຄວາຍຫີນຂອງກູມີຊີວິດ ແລະບິນໄດ້ຫວ່າ ? "

ຄວາຍຫີນໄດ້ທະຍານເຕາະເປັນວົງວຽນອ້ອມຢູ່ບົນ ແປເຮືອນທະຍານອອກໄປອ້ອມບົນບ້ານ ຫລັງຈາກນັ້ນກໍເຕາະຂາມ ພູເຂົາຫີນ



ແລະ ທະເລກໍ້ວາງອອກໄປຈົນສຸດສາຍຕາ. ບັດນີ້ເຖົ້າທຳມະກໍແຕ່ຈຶ່ງ
ໄດ້ວ່າ ເຖົ້າໄດ້ເຫັນຫຍັງໄປແລ້ວ.

" ໄປສາເຍີຍ ຄວາຍວິເສດຂອງກູ ໄປສາ ສີກະເບົາ ກູ
ເຮີຍ ! ບັດນີ້ເຈົ້າຈະໄດ້ສ້າງປະໂຫຍດໃຫ້ແກ່ມະນຸດຊາດທັງປວງ"

ເຈົ້າສີກະເບົາທະຍານໄປລົງຢືນຢູ່ເກາະຫີນນ້ອຍ ເຊິ່ງພໍ ແຕ່
ສາມາດ ຮັບເອົາສີ່ຕີນໄດ້ເທົ່ານັ້ນ. ຄວາຍດີອົກດີໃຈໂພດ ທີ່ໄດ້ມີຊີວິດ
ຈາກກ້ອນຫີນຊື່ງຂອງມັນແຕ່ເກົ່າ ມັນແນມບນ້ຳທະເລ ຊີມເບິ່ງ ລົດ
ເຄັມຂອງມັນ ວ່ຽງຫູຟັງສຽງຈາກການກະທົບຂອງຟອງເຊິ່ງ ສິ່ງ
ເຫລົ່ານີ້ມັນບໍ່ໄດ້ຮູ້ຈັກມາກ່ອນເລີຍ ແລະກໍບໍ່ເຫັນຮູ້ເລີຍວ່າການມີຊີວິດ
ແລະ ມີວິນຍານນັ້ນ ດີຈັ່ງໃດ ?

ຂະນະນັ້ນທ້າວ ບາຄູດ ກໍາລັງນໍາເຮືອນ້ອຍຂອງຕົນໄປ ເຖິງເກາະຫີນນ້ອຍແຫ່ງໜຶ່ງ. ພໍມາບເຫັນພາບແປກປະຫລາດເປັນ ຮູບຄວາຍ ເຊິ່ງປະກົດວ່າ ຟູ່ຢູ່ຫນ້ານ້ຳ ເຂົາກໍຖາມຕົນເອງດ້ວຍຄວາມກະດາກໃຈວ່າ :

" ຈະແມ່ນຮູບປັ້ນຫີນຂອງເຖົ້າທໍາມະຫີ້ບານ ພູກົດປະກົດລື?" ຄັອນເວົ້າແລວເຂົາກໍແຈ່ວເຮືອເຂົ້າໄປໃກກັບຄວາຍແລວກໍຖາມວ່າ: " ເຈົ້າມາເຮັດຫຍັງຢູ່ຫນີ້ ? ເຈົ້າຮູ້ບໍ່ວ່າ ຫນີ້ບໍ່ແມ່ນບ່ອນສໍາ ຫລັບຄວາຍ. ຕາຍແລວ ເຈົ້າບໍ່ຄວນມາບອນຂອງຜູອື່ນແບບນີ້. ຈົ່ງຮີບມາເອົາເຮືອຂອຍນີ້ໄວ ກ່ອນທີ່ຜູອື່ນຈະເຫັນ ແລະ ເອົາຄວາມຜິດ ກັບເຈົ້າ ".

ສິກະເບົາກຽມພ້ອມທຸກຢ່າງ ເພື່ອປະຕິບັດຕາມຄໍາແຫນະ ນໍາ





ມັນໄດ້ເຂົ້າມານອນຢູ່ກາງເຣືອຂອງທ້າວ ບາລູດຢ່າງງ່າຍດາຍທ້າວ
ບາລູດ ມີຄວາມພໍໃຈນຳຜົນໄດ້ອັນໄວວາຂອງຕົນແຕ່ເຊົ້າ ແຕ່ຊູ້ຂົວ
ແລ້ວກໍ່ຢຸດການຫາປາຂອງເຂົາທັນທີ ເມື່ອອວ່າຍຫົວເຣືອກັບຄືນບ້ານ
ແຕ່ກ່ອນເຣືອເຂົາຈະມາເຖິງແຄມຝັ່ງ ເຣືອອີກລຳໜຶ່ງກໍ ມຸ້ງໜ້າ

ຫຍັບເຂົ້າມາຫາເຂົາ. ມັນແມ່ນເຮືອຂອງພວກພີ່ນ້ອງຂອງ ບາ ຄຸດ ເອງ.ພວກເຂົາພາກັນຫົວຂວັນບາຄຸດແລະຄວາຍທີ່ຂີ່ເຮືອມານຳເຂົາ

" ໄຖ ! ໄຖ ! ເຮີເຮີຍ ! ເບິ່ງແມ່!ທາວບາຄຸດຫາ ໄດ ປາ ປະຫລາດໂຕໜຶ່ງ. ເບິ່ງປາເລີມັນແມ່ ! ບໍ່ເຄີຍຮູ້ເຄີຍເຫັນ ເລີຍ ໄປຫາປາເລີຍໄດ້ຄວາຍຄັກຂະໜາດ ".

ສີກະເບົາ ຮູ້ສຶກແສບໄຫມ້ຫົວໃຈຈາກຄວາມເຢາະເຢີ້ຍຂອງ ຄົນພວກນັ້ນ.

" ເປັນຫຍັງຄົນພວກນີ້ ຊ່າງແຕ່ໃຊ້ຖ້ອຍຄຳອັນຖ່ອຍຕ່ຳກູ ?". ຄວາຍເວົ້າກັບໂຕເອງ." ຄວາມຈິງ ແມ່ນບໍ່ວ່າກູເປັນຄວາຍມະ ນິ ກາຍ ຜູ້ຍິ່ງໃຫຍ່ກວ່າໃຜໆໃນພິພົບ . ເອີ ! ຈົ່ງຄອຍເບິ່ງ ກູຈະ ແຜງລິດໃຫ້ສູເຫັນວ່າ ກູຍິ່ງໃຫຍ່ ຂະໜາດໃດ ? ".

ສີກະເບົາ ໄຫວໂຕຂອງມັນ ແລະ ສັ່ນຄອນເຮືອ ເຮັດ ໃຫ້ ເກີດເປັນຄື້ນຟອງຢູ່ອ້ອມຮອບເຮືອ.ຄື້ນຟອງກໍ່ຕົວໃຫຍ່ຂຶ້ນ ໃຫຍ່ຂຶ້ນ. ເຮືອກໍ່ຂະໂຍກຂຶ້ນວາບລົງຕາມຄື້ນມະຫືມາ ແລວໃນທີ່ສຸດກໍ່ຫລົ້ມກັບທີ່ ທາວ ບາຄຸດ ເມື່ອເຫັນເຫດການດັ່ງນັ້ນ ເຂົາກໍ່ຮີບຫລຸບກະໂດດຂຶ້ນ ຫລັງຄວາຍ ແລວທັງສອງກໍ່ພອມພາກັນທະຍານຂຶ້ນເວຫາ:ສ່ວນພວກ ພີ່ນ້ອງປາກເປັນຂອງທາວ ບາຄຸດ ເລີຍຫົວພຽງກັນຢູ່ໃນນ້ຳ ພວກ ເຂົາລອຍຢູ່ຈົນອິດອ່ອນ ຈົນຈະບໍ່ສາມາດເອົາໂຕລອດຈາກການ ຈົມ ນ້ຳຕາຍຈຶ່ງຮອງຂໍຄວາມຊ່ວຍເຫລືອຂອງຄວາຍ.

ແນ່ນອນ ຄວາຍວິເສດໂຕນີ້ ມີຫນາທີ່ຊ່ວຍເຫລືອຄົນຢູ່ແລວ ກໍ່ ເລີຍລົງຊ່ວຍເອົາພວກເຂົາຂຶ້ນສູ່ຫາດຊາຍ. ເມື່ອມີຄວາມ ປອດໄພ ແລວ ທຸກຄົນກໍ່ມີສີຫນາຍິ້ມຫົວ ພວກເຂົາພາກັນມາອ້ອມຄວາຍ ເປັນ

ວົງ ແລ້ວກໍພາກັນຕົບມືຮ້ອງເພງຊົມເຊີຍຄວາຍໂຕແສນດີ. ພໍ່ຊາວ
ບ້ານຮູ້ຂ່າວນີ້ ເຂົາກໍພາກັນຫລັ່ງມາທີ່ທາດຊາຍ ເພື່ອຈະໄດ້ ເຫັນ
ຄວາຍວິເສດນີ້ດ້ວຍຕາຕົນເອງ ຈົນກາຍເປັນການຊຸມນຸມມ່ວນຊື່ນສະ
ຫລອງໂຊກໄຊໃນບ້ານຂອງຕົນ. ທຸກຄົນໃຜໆກໍດີໃຈທີ່ໄດ້ຄວາຍ ລຸ້ນ
ໂຕນີ້ມາສູ່ບ້ານຂອງຕົນ ເພາະມັນສາມາດເອົາເຮືອຫລາຍລຳ ເຂົ້າ
ຝັ່ງໄດ້ພາບດຽວ ສາມາດຕ່າງກອຍເຂົ້າໄດ້ຫລາຍກອຍ ແລະ ສາ
ມາດແກ້ໄຂໄດ້ພາບດຽວຫລາຍດວງດ້ວຍກັນ. ນອກຈາກນີ້ ຄວາຍມະ
ນີກາຍ ໂຕນີ້ຍັງສາມາດແກ້ໄຂວຽກງານຕ່າງໆທີ່ຫຍຸ້ງຍາກລຳ ບາກ
ນາໆປະການໄດ້ດ້ວຍ. ສຳລັບທາວ ບາດູດແລວ ການຂີ່ຫລັງຄວາຍ
ເຫາະເຫີນອາກາດນັ້ນ ເປັນຂອງທີ່ພໍໃຈ ເພາະວ່າ ລາວ ແຕ່ກ່ອນ
ກວ່າຈະໄດ້ພົບຊູ້ຮັກ ໃນຢັງ ຂອງຕົນ ຕ້ອງເດີນທາງໄປເປັນເວລາ
2 ວັນ ມາບັດນີ້ຄວາຍພາໄປໄດ້ມື້ຫນຶ່ງຕັ້ງສອງເທື່ອ. ຊາວບ້ານໃຜໆ
ກໍຍັງບໍ່ທັນເຄີຍຂີ່ຄວາຍບິນ ຈັກເທື່ອແລະກໍບໍ່ຢາກຈະຂີ່ເລີຍເພາະ ຂີ້
ຢ້ານ ເວັ້ນເສຍແຕ່ທາວ ບາດູດທ່ານັ້ນ. ຈົນກະທັ້ງມາຮອດເຊົ້າມື້ຫນຶ່ງ
ມີຟ້າລົມແຮງພັດມາ ນ້ຳທະເລເປັນຄື້ນຟອງຮ້າຍແຮງແຜງລິດສຸດຂະ
ຫນາດ. ຜູ້ຄົນໃຜໆກໍບໍ່ສາມາດອອກນອກອອກມາໄປຫາປູປາ ເລີຍ.
ທຸກຄົນໃຜໆກໍຫມົກຊຸ້ນຢູ່ໃນບ້ານເຮືອນຂອງໃຜລາວ. ພວກ ເຂົາເຈົ້າ
ສັງເກດເຫັນມີຟ້າແຜດຟ້າພ່ຽງຢູ່ເທິງມະຫາສະຫມຸດ ແລະມີ ຄວັນ
ເປັນປຸ້ມ ພົ່ນອອກຈາກຈອມພູໄຟ. ພູກໍປະກົດວ່າ ເຮັ່ງຮ້າຍກາວໂກດ
ເຫມືອນດັ່ງທະເລ.

ຜູ້ເຖົ້າຜູ້ແກ່ພາຍໃນບ້ານ ເຄີຍເຫັນເຫດການແບບນີ້ມາ ກ່ອນ
ໃນຫລາຍປີທີ່ຜ່ານມາ ເຊິ່ງບໍ່ຕ່າງຫຍັງກັບພວກທີ່ເກີດໃຫມ່ໃຫຍ່ລຸ້ນທີ່



ສິ່ງຫາກໍເຫັນໃນມື້ນັ້ນຂອງເຂົາເຈົ້າໄດ້ຈົດຈຳເຫດການອັນຮ້າຍແຮງ ອັນເກີດຈາກພູໄຟລະເບີດ ພົ່ນກ້ອນໄຟມີດຈູລາດອອກມາ ພົ່ນຝຸ່ນ ເດືອດ ແລະ ນ້ຳເຖົ່າເດືອດໄຫລນອງອອກມາທຳລາຍທຸກສິ່ງ ທຸກຢ່າງທີ່ຂວາງໜ້າມັນ. ແຕ່ເຫດການນີ້ຜ່ານມາຫລາຍປີແລ້ວແລະມັນ ກໍ່ ຍັງຈະເປັນຕາໜ້າຢ້ານຢູ່ລື ? ພວກຜູ້ເຖົ້າທັງຫລາຍພາກັນ ສຸມ ແສງຕາໄປໃສ່ພູໄຟທີ່ກຳລັງພົ່ນຄວັນເຕັມອັດຕາຢູ່. ເຂົາເຈົ້າຄິດເຖິງ ຊາວບ້ານພູກິດປະກິດ ທີ່ຕັ້ງຢູ່ຕີນພູດັ່ງກ່າວ. ແສງຕາທຸກໜ່ວຍຂອງ ຊາວບ້ານ ເຕຣຸກຕີລ່າ ປະກົດວ່າເບິ່ງໄປທາງບ້ານພູກິດປະກິດ ພູນ ໝົດ.

ຫລາຍຊົ່ວໂມງຜ່ານພົ້ນໄປ ທຸກສິ່ງທຸກຢ່າງຈະແຈ້ງ ສະແດງວ່າ ມັນບໍ່ແມ່ນການຖ່າຍທອດອາຍຄວັນທຳມະດາຂອງພູໄຟເລີຍຄວັນທີ່ຖືກພົ່ນອອກມານັ້ນກາຍເປັນສີດຳ ແລະ ໜາທຶບ. ຈັກໜ່ອຍເລີຍມີສຽງຄອນຄາງດັງຮື່ນໆມາຈາກພູໄຟ. ທ້າວ ບາຄູດເຊິ່ງກຳລັງເອົາຄວາຍກິນນ້ຳຢູ່ ກໍເລີຍຮີບຫະຫຍອງຂຶ້ນຫລັງຄວາຍຮີບຫະຍານໄປ ສູ່ບ້ານ ພູກິດປະກິດ. ແລະ ກ່ອນທີ່ທ້າວ ບາຄູດ ຈະໄປເຖິງ ເຮືອນຂອງ ໄມຢັງ ແລະ ລາກເອົາ ໄມຢັງອອກມາໄດ້ນັ້ນສຽງ ຄອນຄາງກໍຍິ່ງດັງແຮງຂຶ້ນ ແຜ່ນດິນກໍສັ່ນສະເທືອນ. ຝູງຊາວບ້ານພາກັນມາໂຮມເຕົ້າກັນດ້ວຍຄວາມສັ່ນສາຍ ບໍ່ຮູ້ຈັກຈະເຮັດແນວໃດ ຕໍ່ໜ້າມະຫັນຕະໄພທີ່ຈະເກີດຂຶ້ນໃນບໍ່ທີ່ໃດຍາມແກ່ພວກເຂົາ. ເຖົ້າທຳມະພອນດ້ວຍບັນດາເຖົ້າແກ່ລູງຕາ ພາຍໃນບ້ານ ພະຍາຍາມຊອກ ຫາຄວາມຕອບແກ່ພວກເຂົາ ແລະ ພະຍາຍາມລະດົມໃຈພວກເຂົາ ໃຫ້ອຸ່ນອ່ຽນ. ຂະນະນັ້ນ ທ້າວ ບາຄູດກໍພໍດີມາຮອດ ແລ້ວເວົ້າວ່າ :

" ທີ່ນີ້ ອັນຕະລາຍ ຈົ່ງພາກັນຍົກຍ້າຍໄປເຊົາຢູ່ບ້ານ ເຕຣຸກຕິລ່າ ພຸ້ນເທີ້ນ " ຄອນພໍເວົ້າສຸດ ແປວໄຟມັດໆລາດອັນໜາ ສະຫຍອງຂຶ້ນ ກໍປະກົດອອກມາໃຫ້ເຫັນຈາກຈອມພູໄຟ ອັນເປັນເຫດໃຫ້ຊາວບ້ານຮີບຕົກລົງໃຈ ອົບພະຍົບຕົນອອກໄປຈາກບ້ານນັ້ນໃຫ້ໝົດ. ຈາກນັ້ນ ທ້າວ ບາຄູດ ກໍໃຊ້ຄວາຍ ມະນີກາບຂອງຕົນຫະຍອຍ ຂົນເອົາປະຊາຊົນ ພ້ອມດ້ວຍເຂົ້າຂອງເຂົາເຈົ້າໄປສູ່ບ້ານ ເຕຣູກຕິລ່າຢ່າງປອດໄພ. ຝູງຊາວບ້ານເດີມ ກໍພາກັນໄຂປະຕູເຮືອນ ອ້າອອກເຕັມພານ ເພື່ອຮັບເອົາເພື່ອນບ້ານຜູ້ປະສົບໄພ. ເຂົາເຈົ້າພ້ອມກັນເຮັດພ້ອມກັນຫາ ພ້ອມກັບຢູ່ພ້ອມກັນກິນ. ຝູງແມ່ຍິງ ກໍພາກັນຫຸງເຂົ້າ

ເຢົ້າໄຟຄົວຄິບຄົວກິນ ຝູງຜູ້ຊາຍກໍໄປຊອກຫນ້າຫາກິນ ຕຶກເບັດ ຕຶກ
ກາງໃສ່ໂຕ່ງໃສ່ມອງ.

ເມື່ອໄດ້ເນື້ອສັດນ້ຳ ສັດປີກແຕ່ລະໂຕມາ ເຂົາເຈົ້າກໍແບ່ງປັນກັນກິນ ຊີວິດເຕັມໄປດ້ວຍຄວາມສາມັກຄີຮັກແພງ ສະຫນິດສະ ຫນົມກົມກຽວກັນດີ ທຸກຄົນກໍພ້ອຍມີຄວາມສຸກທ້າວ ບາຈູດ ແລະນາງ ໂມປີງ ເມື່ອຕ່າລົງຊີວິດຢູ່ນຳກັນ ຄວາມຮັກກໍຍິ່ງແຫນນແຟ້ນຍິ່ງຂຶ້ນເມື່ອ



ບາຄູດ ໄປຫາປາ ໄມປັງກໍນັ່ງເຮືອໄປນຳ ເມື່ອ ໄມປັງເປົ່າໄພຫຼວ ເຂົ້າ ບາຄູດກໍມານັ່ງເປັນເພື່ອນ ເພື່ອຈອບແນມດົ້ນຮອຍຍິ້ມຈາກຫົວໃຈຂອງນາງ. ໃນທີ່ສຸດທ້າວບາຄູດ ກໍຈຳຕ້ອງວອນໃຫ້ພໍ່ໄປສູ່ຂໍນາງໄມປັງ ຈາກຜູ້ເປັນພໍ່ແມ່ຂອງນາງ. ພໍ່ແມ່ຂອງນາງໄມ້ປັງ ກໍ່ມີຄວາມພໍໃຈ ແລະ ດີໃຈ ທີ່ໄດ້ລູກເຂີຍແສນດີເໝືອນທ້າວ ບາ ຄູດ ແລ້ວ ພິທີແຕ່ງງານກໍໄດ້ຮັບການກະກຽມ ແລະຈັດຂຶ້ນໃນມື້ໃດ ມື້ໜຶ່ງ . ວັນນັ້ນຜູ້ຄົນໃຜໆກໍຊຸມຊຸ່ນຍິນດີນຳສອງຄູ່ບ່າວສາວ.ທຸກ ຄົນຕ່າງກໍນຳຂອງຂວັນ ຂອງຄ້ຳຂອງຄູນ ມາມອບໃຫ້ແກ່ຄູ່ ບ່າວສາວ ສ່ວນຂອງຫມັ້ນທີ່ມີຄ່າແພງ ແລະ ວິເສດນັ້ນຈະເປັນແນວອື່ນໄປບໍ່ໄດ້ ນອກຈາກແຕ່ໄຂ່ມຸກໜ່ວຍໃຫຍ່ຫລາຍສີ່ງປະຫລາດທີ່ຫາໄດ້ ບໍ່ງ່າຍດາຍເລີຍ. ຊາວບ້ານ ເມື່ອຮູ້ຂ່າວວ່າ ໄມປັງ ໄດ້ໄຂ່ມຸກໜ່ວຍນັ້ນ ໃຜໆກໍຢາກເບິ່ງຢາກເຫັນ, ນາງໄດ້ປະດັບໄຂ່ມຸກຂອງນາງທີ່ ງາມທີ່ສຸດເທົ່າທີ່ເຄີຍພົບເຫັນໃນແຖວນັ້ນ ເຂົ້າພາຂວັນ ອັນເຮັດໃຫ້ນາງຜູ້ຊົ່ງຄວາມງາມ ແລະ ຄວາມໜ້າຮັກຫລືອຄົນອື່ນຢູ່ແລ້ວຍິ່ງ ງາມຍິ່ງຍອຍຂຶ້ນລົ້ນເກົ່າຮ້ອຍເທົ່າ ແລະ ແສນທີ.

ເມື່ອທຸກຢ່າງຮຽບຮ້ອຍ ແລະ ຜູ້ໄພກໍສະຫງົບລົງແລ້ວ ຊາວບ້ານຜູ້ເຄາະຮ້າຍກໍພາກັນທະຍອຍກັບບ້ານເກົ່າເດີມຂອງຕົນ.ຂະນະນັ້ນ ລູຮາ ( ພໍ່ບ້ານ ) ຜູ້ເຖົ້າແກ່ ໂຊກໂຊນ ເມື່ອເຫັນວ່າພາລູກິດການນຳລູກບ້ານຫລານເມືອງ ຄວນຈະຕ້ອງປະໃຫ້ຜູ້ໜຸ່ມ ແໜນນມີກຳລັງວັງຊາ ມີແນວຄວາມຄິດປົ່ງໃສ ເປັນຜູ້ດຳເນີນການອີກ ປະການໜຶ່ງຕົນເອງກໍເຖົ້າແກ່ໄມ້ໃກ້ຝັ່ງໃບພວງ ຍົກແຂ່ງບໍ່ຊາຍົກ ຂາບໍ່ເກົ່ງແລ້ວ ກໍເລີຍສະເໜີໃຫ້ເຖົ້າແກ່ບ້ານຊອງ ແລະ ລູກບ້ານ



ຫລາຍເມືອງຄັດເລືອກເອົາຜູ້ສືບໜໍ່ແທນແນວຕົນ. ຊາວບ້ານ ແລະ
ເຖົ້າແກ່ລຸງຕາໃຫຍ່ງກໍເຫັນແຕ່ທ້າວ ບາຄຸດ ທີ່ນັ້ນເພາະເປັນຜູ້ມີ ພົນ
ງານ ແລະ ສະຫລາດສະຫລຽວ ເໝາະສົມໃນຖານະຈະຄຸ້ມຄອງ
ບ້ານຊ່ອງກອງເຂົ້າ ໄດ້ກໍເລີຍພາກັນເລືອກເອົາທ້າວ. ດັ່ງນີ້ເອງ ທີ່
ເປັນຫຍັງຊາວທ່າປາ ຈຶ່ງໄດ້ເອົາມາເປັນພໍ່ບ້ານໃນບ້ານ ພູກິດປະ
ກິດ ຕັ້ງແຕ່ບັດນັ້ນມາ. ແລະກໍຫລັງຈາກນັ້ນມາສຽງພັງ ຄວາມມະນີ
ກາຍ ຈຶ່ງດັ່ງກ່ອງມາເປັນໄລຍະໄລຍະ ອັນເຮັດໃຫ້ຫວນລະລຶກເຖິງ
ເຫດການໃນຄັ້ງກ່ອນ ເຊິ່ງສີກະເບົາ ແລະທ້າວບາຄຸດ ໄດ້ ສ້າງ

ສາຍສຳພັນການຜູກມິດ ແລະ ການຢ່ອງຢື້ເຖິງກັນ ລະຫວ່າງ ສອງບ້ານນັ້ນເປັນຕົ້ນມາ.

• • • • • • • • •

ນິທານພື້ນເມືອງ ອິນໂດເນເຊຍ

ຈັດທຳໂດຍ: ສະຖາບັນຄົ້ນຄວ້າ ສິລະປະວັນນະຄະດີ ແລະ ພາສາສາດ
ດ້ວຍຄວາມຮ່ວມມືຈາກ: THE TOYOTA FOUNDATION
ພິມທີ່: ໂຮງພິມ ຊາວໜຸ່ມ ທະບຽນເລກທີ່ 256/ພປ 270592
ພິມຄັ້ງທີ່ນຶ່ງ ຈຳນວນ 2.000 ຫົວ. ຂະໜາດ: 13,5 x 20 ຊມ.

## ຜົນງານການພິມປຶ້ມຂອງ:

### ສະຖາບັນຄົ້ນຄວ້າສິລະປະວັນນະຄະດີ ແລະ ພາສາສາດ

1. ປຶ້ມ : ສີ່ສິບປີຫຼັງອານູ
2. -"- ລູງສອນຫຼານ
3. -"- ອິນທະຍານສອນລູກ
4. -"- ໂຮມນິທານພື້ນເມືອງລາວ
5. -"- ສຳພະນາໃບລານ
6. -" - ສິລະປະລາຍລາວ ຫຼວງພະບາງ
7. -"- ສິລະປະລາຍລາວ ສະຫວັນນະເຂດ
8. -"- ທາວຈັນທະຄາດ
9. -"- ສຸພາສິດຄຳໂຄງ
10. -"- ດົນຕີ
11. -"- ນິທານພື້ນເມືອງ ຍີ່ປຸ່ນ ເຫຼັ້ມ 1
12. -"- ນິທານພື້ນເມືອງ ຍີ່ປຸ່ນ ເຫຼັ້ມ 2
13. -"- ນິທານພື້ນເມືອງລາວ ເຫຼັ້ມ 1
14. -"- ນິທານພື້ນເມືອງລາວ ເຫຼັ້ມ 2
15. -"- ທາວ ຮຸ່ງ ທາວ ເຈືອງ
16. -"- ກີເດີໂມປັດຊັງ ເຫຼັ້ມ 1
17. -"- ກີເດີໂມປັດຊັງ ເຫຼັ້ມ 2
18. -"- ນົກກະຈູກຝາ
19. -"- ຈຳປາສີ່ຕົ້ນ
20. -"- ນິທານພື້ນເມືອງ ອິນໂດເນເຊຍ

ພິມທີ່ໂຮງພິມມິດຕະພາບຊາວໜຸ່ມລາວ-ໂຊວຽດ

ໂທ : 4800 ຖະໜົນຫລວງພະບາງ

ຕູ້ ປ ນ : 2536

ພິມຈຳນວນ : 2.000 ເຫລັ້ມ

ຂະໜາດ 13 x 19